ມະຫາວິທະຍາໄລແຫ່ງຊາດ

ຄະນະກະເສດສາດ

ພາກວິຊາເສດຖະກິດຊົນນະບົດ ແລະ ເຕັກໂນໂລຊີອາຫານ

# ບົດໂຄງການຈົບຊັ້ນ

## ເລື່ອງ

# ສຶກສາການນຳໃຊ້ກອງທຶນພັດທະນາກະສິກຳໃນ 3 ບ້ານເປົ້າໝາຍຂອງຄະນະກະເສດສາດ: ບ້ານດົງບັງ, ບ້ານເວີນແທ່ນ ແລະ ບ້ານທ່າຈຳປາ, ນະຄອນຫຼວງວຽງຈັນ.

# Study on Using Agriculture Development Funds in 3 Target Villages: Dongbang, Vernthen and Thachampa Villages, Vientiane Capital.

**ຂຽນໂດຍ:** ນາງ ດາວພະແສງ ລໍສະຫວັນ

. . . . . . . . . . . . . . . . .

ນາງ ສຸນິດຕາ ສີລະຈິດ

. . . . . . . . . . . . . . . . .

**ຊີ້ນຳໂດຍ:** ທ່ານ ຮສ.ດຣ. ສີລິນທອນ ສັກລໍຄຳ

. . . . . . . . . . . . . . . . . . . . . . ...

**ພາກວິຊາ:** . . . . . . . . . . . . . . . . . . . . . .

2010

# ບົດຄັດຫຍໍ້

# (Abstract)


ການສຶກສາຜົນກະທົບກອງທຶນພັດທະນາກະສິກຳຂັ້ນບ້ານຄັ້ງນີ້ແມ່ນໄດ້ປະຕິບັດຢູ່ເມືອງໄຊທານີ ໃນ 3 ບ້ານເປົ້າໝາຍຂອງຄະນະກະເສດສາດ (ບ້ານດົງບັງ, ບ້ານເວີນແທ່ນ, ບ້ານທ່າຈຳປາ). ຈຸດປະສົງຂອງການສຶກສາແມ່ນເພື່ອສຶກສາການບໍລິຫານງານຂອງຄະນະບໍລິຫານກອງທຶນ, ສຶກສາການນຳໃຊ້ກອງທຶນເຂົ້າໃນການຜະລິດກະສິກຳຂອງສະມາຊິກກອງທຶນ ແລະ ລາຍຮັບທີ່ໄດ້ຈາກກິດຈະກຳຂອງກອງທຶນ, ສຶກສາຄວາມສາມາດສົ່ງທຶນຄືນຂອງສະມາຊິກກອງທຶນ ແລະ ບັນຫາການນຳໃຊ້ກອງທຶນ.

ໃນການລົງຝຶກງານຄັ້ງນີ້ໃຊ້ເວລາ 4 ເດືອນ, ເລີ່ມແຕ່ວັນທີ 17/3/2010 ເຖິງວັນທີ 26/7/2010. ການສຶກສາແມ່ນໄດ້ລົງສຳພາດຄະນະບໍລິຫານກອງທຶນ ແລະ ສະມາຊິກຜູ້ທີ່ຮັບເອົາກອງທຶນ 20 ຄອບຄົວໃນ 3 ບ້ານ. ຫຼັງຈາກນັ້ນໄດ້ນຳເອົາຂໍ້ມູນມາລວບລວມວິໄຈເພື່ອໃຫ້ຮູ້ໄດ້ຕາມຈຸດປະສົງທີ່ຕັ້ງໄວ້ ເຊິ່ງມີຜົນໄດ້ຮັບຄືດັ່ງນີ້:

ດ້ານການບໍລິຫານງານຂອງຄະນະບໍລິຫານກອງທຶນແມ່ນຍັງຂາດປະສົບການເຮັດໃຫ້ການປະຕິບັດໜ້າທີ່ຂອງຄະນະບໍລິຫານບໍ່ເປັນໄປຕາມກົດລະບຽບທີ່ວາງອອກ. ສະມາຊິກທີ່ຮັບເອົາກອງທຶນທີ່ຢືມໄປນັ້ນໝູນໃຊ້ເຂົ້າໃນກິດຈະກຳການຜະລິດຫຼາຍໆດ້ານເຊັ່ນ: ການປູກຜັກລະດູຝົນ, ການປູກໄມ້ໃຫ້ໝາກ, ການປູກໝາກຖົ່ວ, ການລ້ຽງກົບ, ການລ້ຽງແບ້ ແລະ ການລ້ຽງປາ.

ຜ່ານການປະຕິບັດກິດຈະກຳຂອງສະມາຊິກກອງທຶນເຫັນໄດ້ວ່າ ກິດຈະກຳທີ່ໄດ້ຈາກກອງທຶນສາມາດສ້າງລາຍຮັບໂດຍສະເລ່ຍຕໍ່ຄອບຄົວສະມາຊິກກອງທຶນຄື: ກອງທຶນແບ້ເທົ່າກັບ 1,687,000 ກີບ/ປີ, ສະເລ່ຍຕໍ່ວັນງານເທົ່າກັບ 80,333 ກີບ/ວັນງານ, ກອງທຶນກົບເທົ່າກັບ -91,000 ກີບ/ປີ, ກອງທຶນປາດຸກເທົ່າກັບ 1,000 ກີບ/ປີ, ກອງທຶນປານິນ, ປາໄນເທົ່າກັບ 881,000 ກີບ/ປີ, ສະເລ່ຍຕໍ່ວັນງານເທົ່າກັບ 80,000 ກີບ/ວັນງານ, ກອງທຶນແນວພັນຜັກເທົ່າກັບ -1,165,416 ກີບ/ປີ, ກອງທຶນເງິນສົດ (ປູກໝາກຖົ່ວ) ເທົ່າກັບ 656,000 ກີບ/ປີ, ສະເລ່ຍຕໍ່ວັນ ງານເທົ່າກັບ 19,880 ກີບ/ວັນງານ. ໃນນັ້ນການສົ່ງທຶນຄືນຂອງສະມາຊິກກອງທຶນບາງຄອບຄົວກໍ່ມີການສົ່ງທຶນຄືນແຕ່ສ່ວນໃດສ່ວນໜຶ່ງເທົ່ານັ້ນ, ບາງຄອບຄົວກໍ່ບໍ່ໄດ້ສົ່ງທຶນຄືນມີຄື: ສະມາຊິກທີ່ສົ່ງທຶນຄືນທັງໝົດມີ 5 ຄອບຄົວເທົ່າກັບ 25%, ສະມາຊິກທີ່ບໍ່ທັນສົ່ງທຶນຄືນມີທັງໝົດ 15 ຄອບຄົວ, ເທົ່າກັບ 75%.

ບັນຫາທີ່ພົບໃນການນຳໃຊ້ກອງທຶນຂອງສະມາຊິກສ່ວນໃຫຍ່ ແມ່ນບັນຫາພະຍາດສັດ, ໄພທຳມະຊາດ (ນ້ຳຖ້ວມ), ບາງກອງທຶນທີ່ສະມາຊິກຮັບເອົາແມ່ນສະມາຊິກຍັງຂາດປະສົບການໃນການປະຕິບັດກິດຈະກຳ.

# ຄຳຂອບໃຈ

# (Acknowledgment)

ຜ່ານການລົງເຝິກງານທ້າຍການສຶກສາ ໃນຫົວຂໍ້ສຶກສາຜົນກະທົບກອງທຶນພັດທະນາກະສິກຳຂັ້ນບ້ານຂອງໂຄງການ Telefood ໃນເຂດບ້ານເປົ້າໝາຍຂອງຄະນະກະເສດສາດບ້ານດົງບັງ, ເວີນແທ່ນ ແລະ ທ່າຈຳປາເຫັນວ່າຜົນສຳເລັດດັ່ງກ່າວແມ່ນໄດ້ຮັບການຮ່ວມມືຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງທີ່ອຳນວຍຄວາມສະດວກໃນການຝຶກງານຂອງພວກຂ້າພະເຈົ້າ.

ໃນໂອກາດນີ້ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນມາຍັງ ທ່ານ ຮສ. ດຣ. ສິລິນທອນ ສັກລໍຄຳ ຮອງຄະນະບໍດີຄະນະກະເສດສາດ ຊຶ່ງເປັນອາຈານທີ່ປຶກສາ ແລະ ຊີ້ນຳພ້ອມທັງເປັນຜູ້ກວດບົດລາຍງານທ້າຍການສຶກສາຂອງພວກຂ້າພະເຈົ້າ.

ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງ ທ່ານ ຄະນະນຳຄະນະກະເສດສາດຕະຫຼອດເຖິງຄູອາຈານທຸກໆທ່ານທີ່ໄດ້ໃຫ້ໂອກາດ ແລະ ຖ່າຍທອດວິຊາຄວາມຮູ້ໃຫ້ແກ່ພວກຂ້າພະເຈົ້າດ້ວຍດີຕະຫຼອດມາ.

ພ້ອມດຽວກັນນີ້ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງ ທ່ານ ອາຈານ ໂຄສະດາ ວົງຊະນະ ເຊິ່ງເປັນຫົວໜ້າໂຄງການ ແລະ ເປັນຜູ້ຊີ້ນຳພາກສະໜາມທີ່ອຳນວຍຄວາມສະດວກໃນການລົງເຝິກງານຄັ້ງນີ້ຈົບສຳເລັດ.

ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງ ທ່ານນາຍບ້ານທັງ 3 ບ້ານ ແລະ ຄະນະກຳມະການເຮັດວຽກປະຈຳກອງທຶນທັງ 3 ບ້ານພ້ອມດ້ວຍສະມາຊິກກອງທຶນທຸກຄົນທີ່ໃຫ້ຄວາມຮ່ວມມືໃນການເກັບກຳຂໍ້ມູນດ້ວຍດີສະເໝີມາ.

ພວກຂ້າພະເຈົ້າຂໍຈາລຶກບຸນຄຸນອັນໃຫຍ່ຫຼວງນີ້ໄວ້ຕະຫຼອດການ ແລະ ຂໍອວຍພອນໄຊອັນປະເສີດໃຫ້ແກ່ພວກທ່ານຈົ່ງມີແຕ່ຄວາມສຸກປະຕິບັດວຽກງານໃຫ້ສຳເລັດຜົນທີ່ພັກລັດມອບໝາຍໃຫ້.

ກັນຍາ, 2010

ນ. ດາວພະແສງ ລໍສະຫວັນ

ນ. ສຸນິດຕາ ສີລະຈິດ

# ສາລະບານ
# (Table of Contents)

ໜ້າ


ບົດຄັດຫຍໍ້......................................................I

ຄຳຂອບໃຈ......................................................II

ສາລະບານ......................................................III

ສາລະບານຕາຕະລາງ......................................................VII

ສາລະບານຮູບ......................................................VIII

ອະທິບາຍຕົວອັກສອນຫຍໍ້......................................................IX

I. ບົດນຳ......................................................1

ຈຸດປະສົງ......................................................1

II. ພາກຄົ້ນຄວ້າເອກະສານ......................................................2

2.1. ນິຍາມການເງິນຈຸລະພາກ ແລະ ການເງິນຊົນນະບົດ......................................................2

2.1.1. ນິຍາມການເງິນຈຸລະພາກ......................................................2

2.1.2. ນິຍາມການເງິນຊົນນະບົດ......................................................2

2.2. ປະຫວັດຄວາມເປັນມາໃນການສ້າງຕັ້ງກອງທຶນພັດທະນາຂັ້ນບ້ານ......................................................2

2.3 ຄວາມໝາຍ ແລະ ຄວາມສຳຄັນຂອງກອງທຶນຝາກປະຢັດຂັ້ນບ້ານ......................................................3

2.3.1. ກອງທຶນຝາກປະຢັດຂັ້ນບ້ານແມ່ນຫຍັງ?......................................................3

2.3.2. ຄວາມສຳຄັນກອງທຶນຝາກປະຢັດຂັ້ນບ້ານ......................................................3

2.4. ຕົວຢ່າງຂອງການສ້າງຕັ້ງທະນາຄານສັດຢູ່ຊົນນະບົດ ( ສ ປ ປ ລາວ )......................................................4

2.5. ການພັດທະນາຄຸນນະພາບຊີວິດຂອງສະມາຊິກ......................................................4

2.5.1. ດ້ານເສດຖະກິດ......................................................4

2.5.2. ດ້ານສັງຄົມ......................................................5

2.6. ສະພາບລວມຂອງໂຄງການ......................................................5

2.7. ສະພາບລວມ ແລະ ຈຸດພິເສດຂອງເມືອງໄຊທານີ......................................................6

2.7.1. ດ້ານປະຊາກອນ ແລະ ການປົກຄອງ ......................................................6

2.8. ສະພາບລວມຂອງບ້ານເປົ້າໝາຍ......................................................7

2.8.1. ສະພາບລວມຂອງບ້ານດົງບັງ......................................................7

2.8.1.1. ດ້ານການປູກພືດ......................................................................................7
2.8.1.2. ດ້ານການລ້ຽງສັດ....................................................................................8
2.8.1.3. ບັນຫາໃນການປູກພືດ ແລະ ລ້ຽງສັດ...............................................................8
2.8.1.4. ທ່າແຮງ..................................................................................................8
2.8.2. ສະພາບລວມຂອງບ້ານເວີນແທ່ນ....................................................................8
2.8.2.1. ດ້ານການປູກພືດ......................................................................................9
2.8.2.2. ດ້ານການລ້ຽງສັດ....................................................................................9
2.8.2.3. ບັນຫາໃນການປູກພືດ ແລະ ລ້ຽງສັດ...............................................................9
2.8.2.4. ທ່າແຮງ................................................................................................10
2.8.3. ສະພາບລວມຂອງບ້ານທ່າຈຳປາ....................................................................10
2.8.3.1. ດ້ານການປູກພືດ....................................................................................10
2.8.3.2. ດ້ານການລ້ຽງສັດ..................................................................................10
2.8.3.3. ບັນຫາ ແລະ ຂໍ້ຫຍຸ້ງຍາກໃນການຜະລິດ.........................................................11
2.8.3.4. ທ່າແຮງ................................................................................................11
III.ອຸປະກອນ ແລະ ວິທີການ...................................................................................12
3.1. ອຸປະກອນ...................................................................................................12
3.1.1. ອຸປະກອນພາກສະໜາມ................................................................................12
3.1.2. ອຸປະກອນພາກວິເຄາະ.................................................................................12
3.2. ວິທີການ.....................................................................................................12
3.2.1. ສະຖານທີ່ສຶກສາ.........................................................................................12
3.2.2. ໄລຍະເວລາການສຶກສາ.................................................................................12
3.2.3. ວິທີການເກັບຂໍ້ມູນ ແລະ ວິເຄາະຂໍ້ມູນ...............................................................12
3.2.3.1. ສຶກສາຂໍ້ມູນມືສອງ....................................................................................12
3.2.3.2. ການກະກຽມແບບຟອມສຳພາດ....................................................................12
3.2.3.3. ການຄັດເລືອກກຸ່ມເປົ້າໝາຍ........................................................................13
3.2.3.4. ການເກັບຂໍ້ມູນພາກສະໜາມ.......................................................................13
3.2.3.5. ການວິເຄາະຂໍ້ມູນ....................................................................................13
3.2.3.6. ການຂຽນບົດລາຍງານ................................................................................13
IV. ຜົນໄດ້ຮັບ......................................................................................................14

4.1. ການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ........................................................14
4.1.1. ເຫດຜົນ ແລະ ຄວາມເປັນມາ...........................................................................14
4.1.2. ຈຸດປະສົງ ແລະ ເປົ້າໝາຍຂອງກອງທຶນພັດທະນາກະສິກຳຂັ້ນບ້ານ..........................14
4.1.3. ເງື່ອນໄຂການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ......................................14
4.1.4. ການກຳນົດກິດລະບຽບ ແລະ ເງື່ອນໄຂຕ່າງໆ......................................................14
4.1.5. ເງື່ອນໄຂໃນການຮັບເອົາສະມາຊິກກອງທຶນ.........................................................14
4.1.6. ໂຄງປະກອບການຈັດຕັ້ງກອງທຶນ......................................................................16
4.1.7. ບັນຫາ ແລະ ຂໍ້ຫຍຸ້ງຍາກໃນການຄຸ້ມຄອງກອງທຶນຂອງຄະນະບໍລິຫານ......................18
4.1.8. ກົດລະບຽບຂອງກອງທຶນພັດທະນາກະສິກຳຂັ້ນບ້ານ.............................................18
4.1.8.1. ການສົ່ງຕົ້ນທຶນ ແລະ ກຳນົດສັນຍາການກູ້ຢືມ..................................................18
4.1.8.2. ການຄ້ຳປະກັນ..........................................................................................19
4.1.8.3. ການກຳນົດອັດຕາດອກເບ້ຍ...........................................................................19
4.1.8.4. ນະໂຍບາຍຂອງຜູ້ທີ່ເປັນສະມາຊິກກອງທຶນ.....................................................20
4.1.8.5. ມາດຕະການສຳລັບການໃຊ້ແທນຄືນຊັກຊ້າ ແລະ ໃຊ້ແທນບໍ່ໄດ້..........................20
4.1.8.6. ການແບ່ງປັນຜົນ.........................................................................................21
4.2. ການປະຕິບັດກິດຈະກຳໃນແຕ່ລະກອງທຶນ (ລ້ຽງສັດ ແລະ ປູກພືດ)................................21
4.2.1. ການລ້ຽງສັດ...............................................................................................21
4.2.1.1. ວິທີການລ້ຽງແບ້.........................................................................................21
4.2.1.2. ວິທີການລ້ຽງປາໄນ, ປາປາກ..........................................................................24
4.2.1.3. ວິທີການລ້ຽງປາດຸກ.....................................................................................26
4.2.1.4. ວິທີການລ້ຽງກົບ.........................................................................................27
4.2.2. ການປູກພືດ................................................................................................29
4.2.2.1. ວິທີການປູກຜັກລະດູຝົນ................................................................................29
4.2.2.2. ວິທີການປູກໄມ້ໃຫ້ໝາກ................................................................................31
4.2.2.3. ວິທີການປູກໝາກຖົ່ວ (ກອງທຶນເງິນສົດ).........................................................33
4.3. ການຈັດປະເພດຄອບຄົວສະມາຊິກທີ່ຮັບເອົາກອງທຶນ.................................................35
4.4. ຄວາມສາມາດໃຊ້ແທນຄືນໃຫ້ກອງທຶນ ແລະ ບັນຫາການນຳໃຊ້ກອງທຶນ........................40
4.4.1. ຄວາມສາມາດໃຊ້ແທນຄືນໃຫ້ກອງທຶນຂອງສະມາຊິກ...........................................40
4.4.2. ຜົນໄດ້ຮັບຂອງກອງທຶນປີ 2010......................................................................43

4.4.3. .ບັນຫາການນຳໃຊ້ກອງທຶນຂອງສະມາຊິກກອງທຶນ....................................................44
V. ວິຈານ....................................................................................................................45
VI. ສະຫຼຸບ..................................................................................................................47
VII. ຂໍ້ແນະນຳ...........................................................................................................49
ເອກະສານອ້າງອີງ...........................................................................................................50

# ສາລະບານຕາຕະລາງ

# (Content of Tables)

**ຕາຕະລາງທີ:** ໜ້າ


1: ປະເພດການກູ້ຢືມກອງທຶນພັດທະນາກະສິກຳຂັ້ນບ້ານ............................................20

2: ໄລ່ລຽງເສດຖະກິດການລ້ຽງແບ້ຕໍ່ 14 ໂຕ.............................................................23

3: ໄລ່ລຽງເສດຖະກິດການລ້ຽງປານິນ, ປາປາກ..........................................................25

4: ໄລ່ລຽງເສດຖະກິດການລ້ຽງປາດຸກຂອງສະມາຊິກກອງທຶນ........................................27

5: ໄລ່ລຽງເສດຖະກິດການລ້ຽງກົບຂອງສະມາຊິກກອງທຶນ............................................29

6: ໄລ່ລຽງເສດຖະກິດການປູກຜັກລະດູຝົນ...............................................................31

7: ໄລ່ລຽງເສດຖະກິດການປູກໝາກຖົ່ວ (ກອງທຶນເງິນສົດ).............................................34

8: ສັງລວມປະເພດຄອບຄົວຊາວກະສິກອນທີ່ຮັບເອົາກອງທຶນ.......................................39

9: ສັງລວມສະມາຊິກກອງທຶນທີ່ໃຊ້ແທນຄືນ.............................................................41

10: ຜົນໄດ້ຮັບຂອງກອງທຶນປີ 2010.......................................................................43

# ສາລະບານຮູບ
# (List of figures)

**ຮູບທີ:** ໜ້າ


1. ເສັ້ນສະແດງລາຍຮັບການລ້ຽງແບ້ຂອງສະມາຊິກກອງທຶນ.........................................23
2. ເສັ້ນສະແດງລາຍຮັບການລ້ຽງປາໄນ, ປາປາກ......................................................25
3. ເສັ້ນສະແດງລາຍຮັບການລ້ຽງປາດຸກ....................................................................27
4. ເສັ້ນສະແດງລາຍຮັບການລ້ຽງກົບ.........................................................................29
5. ເສັ້ນສະແດງລາຍຮັບການປູກຜັກລະດູຝົນ.............................................................31
6. ເສັ້ນສະແດງລາຍຮັບການປູກໝາກຖົ່ວ.................................................................34
7. ເສັ້ນສະແດງສົມທຽບລາຍຮັບຂອງສະມາຊິກກອງທຶນ...............................................36
8. ເສັ້ນສະແດງສົມທຽບລາຍຮັບຂອງສະມາຊິກກອງທຶນ...............................................37
9. ເສັ້ນສະແດງສົມທຽບລາຍຮັບຂອງສະມາຊິກກອງທຶນ...............................................38

# ຄໍາອະທິບາຍສັນຍາລັກ ແລະ ອັກສອນຫຍໍ້

# (List of Symbols and Abbreviations)

## ສັນຍາລັກ

| | | |
|---|---|---|
| / | = | ຕໍ່ |
| - | = | ຫາ |
| % | = | ສ່ວນຮ້ອຍ |
| < | = | ໜ້ອຍກ່ວາ |
| > | = | ຫຼາຍກວ່າ |

## ພາສາລາວ

| | | |
|---|---|---|
| ສ ປ ປ ລາວ | = | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ຄບທ | = | ຄະນະບໍລິຫານກອງທຶນ |
| ກກ | = | ກິໂລກຼາມ |
| ລ/ດ | = | ລໍາດັບ |
| ເປີເຊັນ | = | ສ່ວນຮ້ອຍ |
| ກພບ | = | ກອງທຶນພັດທະນາຂັ້ນບ້ານ |
| ກພກບ | = | ກອງທຶນພັດທະນາກະສິກໍາຂັ້ນບ້ານ |

## ພາສາອັງກິດ

| | | |
|---|---|---|
| AV | = | Add Value |
| AI | = | Agricultural Income |
| FAO | = | Food and Agriculture Oganization |
| IFAHL | = | Improvement of Food Availability at Household Level |
| ha | = | hectare |
| cm | = | centimetre |
| m | = | metre |
| km | = | kilometre |
| $km^2$ | = | square kilometre |

# ບົດນຳ

# (Introduction)

ຍຸດທະສາດ ແລະ ທິດທາງລວມແຫ່ງການພັດທະນາເສດຖະກິດ - ສັງຄົມຂອງ ສ ປ ປ ລາວ ໄດ້ກຳນົດ 8 ແຜນງານຍຸດທະສາດ ເພື່ອການນຳພາປະເທດຊາດຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2020 ໂດຍມີຈຸດສຸມຂອງການພັດທະນາໄປເທື່ອລະແຂວງ (ວາລະສານການເມືອງ - ການປົກຄອງ, 2002).

ໂຄງການ Telefood ເປັນໂຄງການພັດທະນາຊົນນະບົດ ເພື່ອຊຸກຍູ້ໃຫ້ຊາວກະສິກອນໃນ 3 ບ້ານຄື: ບ້ານດົງບັງ, ບ້ານເວີນແທ່ນ ແລະ ບ້ານທ່າຈຳປາ ເຊິ່ງເປັນບ້ານທີ່ຢູ່ອ້ອມຂ້າງຄະນະກະເສດສາດໃຫ້ມີຄວາມສາມາດທຳການຜະລິດດ້ວຍຕົນເອງເປັນການເພີ່ມຄວາມອຸດົມສົມບູນທາງດ້ານສະບຽງອາຫານໃນຄອບຄົວໃຫ້ດີຂື້ນເທື່ອລະກ້າວ ແລະ ຫຼຸດຜ່ອນຄວາມທຸກຍາກຂັ້ນພື້ນຖານຂອງຄອບຄົວ. ໂຄງການດັ່ງກ່າວຈັດຕັ້ງຂຶ້ນໃນປີ 2008 ໄດ້ໃຫ້ການຊ່ວຍເຫຼືອກ່ຽວກັບການຈັດຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານເຊັ່ນ: ກອງທຶນສັດ (ແບ້, ກົບ, ປາ), ກອງທຶນພືດ (ໄມ້ໃຫ້ໝາກ, ແນວພັນຜັກ) ແລະ ກອງທຶນທີ່ເປັນເງິນສົດ ເພື່ອໃຫ້ຊາວກະສິກອນໄປໃຊ້ເຂົ້າໃນການຜະລິດກະສິກຳພາຍໃນຄອບຄົວ. ເພື່ອຢາກຮູ້ວ່າໂຄງການກອງທຶນພັດທະນາກະສິກຳຂັ້ນບ້ານທີ່ນຳເອົາກອງທຶນສັດ, ກອງທຶນພືດ ແລະ ກອງທຶນທີ່ເປັນເງິນສົດໄປໃຫ້ປະຊາຊົນພາຍໃນບ້ານດັ່ງກ່າວມີການຂະຫຍາຍຕົວ ແລະ ມີຜົນໄດ້ຮັບຄືແນວໃດ, ມັນສາມາດຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນໄດ້ ຫຼື ບໍ່, ພວກຂ້າພະເຈົ້າຈຶ່ງລົງສຶກສາຜົນໄດ້ຮັບຂອງການຈັດຕັ້ງກອງທຶນດັ່ງກ່າວຢູ່ໃນເດືອນ 03 ເຖິງເດືອນ 07 ປີ 2010. ການສຶກສາແມ່ນມີຈຸດປະສົງດັ່ງລຸ່ມນີ້:

## ❖ ຈຸດປະສົງ:

1. ສຶກສາການບໍລິຫານງານຂອງຄະນະບໍລິຫານກອງທຶນພັດທະນາກະສິກຳຂັ້ນບ້ານ.
2. ສຶກສາການນຳໃຊ້ກອງທຶນເຂົ້າໃນການຜະລິດກະສິກຳຂອງສະມາຊິກກອງທຶນ ແລະ ລາຍຮັບທີ່ໄດ້ຈາກກິດຈະກຳຂອງກອງທຶນ.
3. ສຶກສາຄວາມສາມາດສົ່ງທຶນຄືນຂອງສະມາຊິກກອງທຶນ ແລະ ບັນຫາການນຳໃຊ້ກອງທຶນເຂົ້າໃນການຜະລິດກະສິກຳ.

# II. ການຄົ້ນຄ້ວາເອກະສານ
# (Literature review)

## 2.1. ນິຍາມການເງິນຈຸລະພາກ ແລະ ການເງິນຊົນນະບົດ

### 2.1.1. ນິຍາມການເງິນຈຸລະພາກ

ການເງິນຈຸລະພາກໝາຍເຖິງການສະໜອງບໍລິການດ້ານການເງິນໃນຫຼາຍແບບເຊັ່ນ: ການປ່ອຍສິນເຊື່ອ, ການຮັບຝາກປະຢັດ, ການປະກັນໄພ ແລະ ອື່ນໆ. ໃນຮູບແບບເງິນສົດໃຫ້ແກ່ຜູ້ທຸກຍາກ, ຄົວເຮືອນຜູ້ທີ່ມີລາຍຮັບຕໍ່າ ແລະ ໃຫ້ແກ່ກິດຈະກໍາຂະໜາດໜ້ອຍ.

### 2.1.2. ນິຍາມການເງິນຊົນນະບົດ

ການເງິນຊົນນະບົດ ໝາຍເຖິງການສະໜອງການບໍລິການດ້ານການເງິນໃນຫຼາຍຮູບແບບເຊັ່ນ: ການປ່ອຍສິນເຊື່ອ, ການຮັບຝາກປະຢັດ, ການປະກັນໄພ ແລະ ອື່ນໆ. ໃນຮູບແບບເງິນສົດໃຫ້ແກ່ປະຊາຊົນທົ່ວໄປ ແລະ ບັນດາຫົວໜ່ວຍທຸລະກິດທີ່ຕັ້ງຢູ່ໃນເຂດຊົນນະບົດ.

(WWW. Lao44. Org, ເອກະສານກ່ຽວກັບນະໂຍບາຍຂອງລັດຖະບານວ່າດ້ວຍການພັດທະນາຂະແໜງການເງິນຊົນນະບົດ ແລະ ການເງິນຈຸລະພາກ, ປີ 2010)

❖ <u>ສິນເຊື່ອຈຸລະພາກບໍ່ແມ່ນຄໍາຕອບສະເໝີໄປ</u>

ສິນເຊື່ອຈຸລະພາກບໍ່ແມ່ນສໍາລັບຄົນທຸກ ຫຼື ທຸກສະຖານະການ. ປະຊາຊົນທີ່ທຸກຈົນ ແລະ ອຶດຫິວບໍ່ມີລາຍໄດ້ ຫຼື ພາຫະນະເພື່ອຈ່າຍສິນເຊື່ອຄືນ ສະນັ້ນເຂົາເຈົ້າຕ້ອງໄດ້ຮັບການຊ່ວຍເຫຼືອປະເພດອື່ນກ່ອນທີ່ເຂົາເຈົ້າຈະສາມາດນໍາໃຊ້ເງິນກູ້ຢ່າງມີປະສິດທິຜົນໃນຫຼາຍກໍລະນີ, ເຄື່ອງມືອື່ນຈະຊ່ວຍຫຼຸດຜ່ອນຄວາມທຸກຍາກໄດ້ດີກ່ອນເຊັ່ນ: ຕົວຢ່າງ ທຶນຊ່ວຍເຫຼືອລ້າຈໍານວນໜ້ອຍໜຶ່ງ, ວຽກເຮັດງານທໍາ ແລະການຝຶກອົບຮົມ ຫຼື ການປັບປຸງພື້ນຖານໂຄງລ່າງ, ຖ້າເປັນໄປໄດ້ການບໍລິການຄວນໄປຄຽງຄູ່ກັບການລະດົມເງິນຝາກ. (WWW. Lao44. Org, ໜ່ວຍງານການເງິນຈຸລະພາກ (MFWG) ພາລະບົດບາດ (TOR), ປີ 2010).

## 2.2. ປະຫວັດຄວາມເປັນມາໃນການສ້າງຕັ້ງກອງທຶນພັດທະນາຂັ້ນບ້ານ

ເພື່ອການພັດທະນາ ສ ປ ປ ລາວ ກໍ່ຄືພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າໃຫ້ປະຊາຊົນລາວຫຼຸດພົ້ນອອກຈາກຄວາມທຸກຍາກ, ໃຫ້ມີຄວາມຢູ່ດີກິນດີ, ດັ່ງນັ້ນ, ພັກລັດຖະບານຍາມໃດກໍ່ຕ້ອງໄດ້ເອົາໃຈໃສ່ເລັ່ງໃສ່ການພັດທະນາປະເທດຊາດເປັນສິ່ງສໍາຄັນເຊັ່ນ:

- ປີ 2020 ສ ປ ປ ລາວ ຕ້ອງຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ.
- ປີ 2010 ລົບລ້າງຄວາມທຸກຍາກໂດຍພື້ນຖານ.

- GDP ຕ້ອງເພີ່ມ 7-7,5%/ປີ.

➢ ເພື່ອບັນລຸເປົ້າໝາຍດັ່ງກ່າວປີ 2003-2004 ລັດຖະບານໄດ້ວາງ ແລະ ຮັບຮອງຍຸດທະສາດການລຶບລ້າງຄວາມທຸກຍາກແຫ່ງຊາດ, ໄດ້ກຳນົດຈຸດສຸມເມືອງທຸກຍາກຄື:

- 72 ເມືອງທຸກ ແລະ ທຸກທີ່ສຸດ, ໃນນີ້ມີ 4,126 ບ້ານທຸກ, 160,000 ຄອບຄົວທຸກ.

➢ ເປົ້າໝາຍຮອດປີ 2005-2006 (ເພື່ອໃຫ້ໄດ້ເຄິ່ງໜຶ່ງ)

- ຕ້ອງລຶບລ້າງໃນ 47 ເມືອງທຸກຍາກນີ້ມີ: 2,960 ບ້ານ, 116,000 ຄອບຄົວ.

ດັ່ງນັ້ນເພື່ອຢາກໃຫ້ເປົ້າໝາຍຂອງພັກທີ່ວາງອອກສຳລັບການພັດທະນາປະເທດຊາດໃຫ້ບັນລຸຜົນເປັນຈິງຕາມເປົ້າໝາຍກໍ່ຄືກອງທຶນພັດທະນາຂັ້ນບ້ານກໍ່ແມ່ນເປັນອີກສ່ວນໜຶ່ງທີ່ສຳຄັນຕໍ່ກັບການພັດທະນາປະເທດຊາດທີ່ສາມາຊ່ວຍຊຸກຍູ້ສົ່ງເສີມໃຫ້ຄອບຄົວທີ່ທຸກຍາກບໍ່ມີເງິນລົງທຶນມາກູ້ຢືມໃນລັກສະນະດອກເບ້ຍຕໍ່າ ເຊິ່ງອາດຈະສາມາດຊ່ວຍໃຫ້ປະຊາຊົນມີເສດຖະກິດທີ່ດີຂຶ້ນສາມາດຫຼຸດພົ້ນອອກຈາກຄວາມທຸກຍາກທີ່ພັກລັດໄດ້ວາງເປົ້າໝາຍໄວ້ດ້ວຍເຫດນີ້ຈຶ່ງມີກອງທຶນພັດທະນາຂັ້ນບ້ານຂຶ້ນມາ. (WWW. Lao44. Org, ບົດລາຍງານກອງທຶນພັດທະນາຂັ້ນບ້ານຂອງ ແຂວງສະຫວັນນະເຂດທີ່ນອນໃນ 47 ເມືອງທຸກຍາກທົ່ວປະເທດ, ປີ 2010).

## 2.3. ຄວາມໝາຍ ແລະ ຄວາມສຳຄັນຂອງກອງທຶນຝາກປະຫຍັດຂັ້ນບ້ານ

### 2.3.1. ກອງທຶນຝາກປະຢັດຂັ້ນບ້ານແມ່ນຫຍັງ?

ກອງທຶນຝາກປະຢັດຂັ້ນບ້ານ ແມ່ນການທ້ອນໂຮມທຶນຂອງບັນດາຄອບຄົວພາຍໃນບ້ານບົນພື້ນຖານຄວາມຕື່ນຕົວສະໝັກໃຈໂດຍບໍ່ຈຳແນກຄອບຄົວທຸກຍາກ, ປານກາງ ຫຼື ຮັ່ງມີກໍ່ສາມາດເຂົ້າເປັນສະມາຊິກກອງທຶນໄດ້ ແລະ ມີສິດກູ້ຢືມເງິນຈາກກອງທຶນໄປທຳການຜະລິດດ້ານກະສິກຳ, ຫັດຖະ ກຳ, ປຸງແຕ່ງ ແລະ ອື່ນໆ. ທີ່ມີລັກສະນະສະນະສົ່ງເສີມການຜະລິດພາຍໃນບ້ານໃຫ້ຢູ່ດີກິນດີ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ.

### 2.3.2. ຄວາມສຳຄັນກອງທຶນຝາກປະຢັດຂັ້ນບ້ານ

ກອງທຶນຝາກປະຢັດຂັ້ນບ້ານມີຄວາມສຳຄັນຍ້ອນວ່າ:

- ເປັນການຕອບສະໜອງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານໂດຍສະເພາະແກ້ໄຂຄວາມທຸກຍາກພາຍໃນບ້ານ.

- ເປັນການຈັດຕັ້ງປະຕິບັດຕົວຈິງກ່ຽວກັບສິດເປັນເຈົ້າຂອງປະຊາຊົນໃນການເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງທາງດ້ານເສດຖະກິດສັງຄົມ.

- ເປັນການເຕົ້າໂຮມຄວາມສາມັກຄີສະຕິປັນຍາ, ຊັບສິນ, ແຮງງານເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການຍົກລະດັບຊີວິດການເປັນຢູ່ໃນບ້ານໃຫ້ດີຂື້ນເທື່ອລະກ້າວ.

- ເປັນການສະສົມທຶນຢູ່ກັບບ້ານ ເພື່ອເຮັດໃຫ້ຄອບຄົວທີ່ເປັນສະມາຊິກຝາກ ຫຼື ກູ້ຢືມໄດ້ຕາມລະບຽບການຄຸ້ມຄອງກອງທຶນເພື່ອຜົນປະໂຫຍດຊອບທຳຂອງຄອບຄົວ. (WWW. Lao44.Org, ຂໍ້ກຳນົດວ່າດ້ວຍການສ້າງຕັ້ງ ແລະ ດຳເນີນງານກອງທຶນຝາກປະຢັດ - ທຶນໝູນວຽນຂັ້ນບ້ານຂອງບ້ານນ້ຳກະ ເມືອງຜາໄຊ ແຂວງຊຽງຂວາງ, ປີ 2010).

## 2.4. ຕົວຢ່າງການສ້າງຕັ້ງທະນາຄານສັດຢູ່ຊົນນະບົດ (ສ ປ ປ ລາວ)

ທະນາຄານໝູບ້ານຢູ່ເມືອງຂວາ ແລະ ເມືອງສຳພັນ ແຂວງຜົ້ງສາລີ ເພື່ອລຶບລ້າງຄວາມທຸກຍາກຢູ່ເມືອງຂວາ, ເມືອງສຳພັນແຂວງຜົ້ງສາລີໄດ້ມີການຈັດຕັ້ງທະນາຄານໝູບ້ານຂຶ້ນໂດຍ ບຸນໂຮມ (2009) ໄດ້ຂຽນໄວ້ວ່າການຈັດຕັ້ງທະນາຄານໝູບ້ານດັ່ງກ່າວໄດ້ມີການກຳນົດມາດຕະຖານຄອບຄົວເປົ້າໝາຍຜູ້ທີ່ຈະໄດ້ຮັບໝູຈາກໂຄງການໄປລ້ຽງ, ໄດ້ມີການກຳນົດມາດຕະຖານຂອງການຈັດຊື້ - ສົ່ງມອບພໍ່ແມ່ພັນ ແລະ ສ້າງກົດລະບຽບຂອງສະມາຊິກຜູ້ທີ່ໄດ້ຮັບໝູໄປລ້ຽງ. ການຈັດຕັ້ງທະນາຄານໝູດັ່ງກ່າວແມ່ນສາມາດຊ່ວຍໃຫ້ປະຊາຊົນມີວຽກເຮັດງານທຳ ແລະ ມີລາຍຮັບເພີ່ມຂຶ້ນເນື່ອງຈາກວ່າລາຍໄດ້ຈາກການລ້ຽງສັດປະກອບສ່ວນປະມານ 27% ຂອງລາຍຮັບຄອບຄົວ. ແຕ່ເຖິງຢ່າງໃດກໍ່ຕາມເຖິງວ່າຈະມີລະບຽບຫຼັກການໃນການຈັດຕັ້ງປະຕິບັດຄືດັ່ງກ່າວ ແຕ່ກໍ່ບໍ່ສາມາດປະຕິບັດໄດ້ໝົດເຊັ່ນ: ການຮັບເອົາສະມາຊິກຜູ້ທີ່ຮັບເອົາໝູໄປລ້ຽງຍັງບໍ່ໄດ້ຕາມເງື່ອນໄຂທີ່ວາງອອກ ເຊິ່ງຕາມທຳມະດາແລ້ວຕ້ອງແມ່ນຄອບຄົວທີ່ທຸກຍາກຂາດເຂີນກວ່າໝູ່ໝົດແຕ່ຕົວຈິງຄອບຄົວທີ່ໄດ້ຮັບໝູໄປລ້ຽງບໍ່ແມ່ນຄອບຄົວທີ່ທຸກຍາກເຊິ່ງມີໝູລ້ຽງແລ້ວ ແລະ ເຮັດໃຫ້ຄອບຄົວທີ່ທຸກຍາກຂາດເຂີນຫຼາຍຄອບຄົວບໍ່ໄດ້ຮັບຜົນປະໂຫຍດຕາມເປົ້າໝາຍຂອງໂຄງການ.

## 2.5. ການພັດທະນາຄຸນນະພາບຊີວິດຂອງສະມາຊິກ

ສະຫຼຸບຜົນການດຳເນີນງານໂຄງການສົ່ງເສີມຄວາມເຂັ້ມແຂງຂອງແມ່ຍິງ ແລະ ຊຸມຊົນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ພາສາໄທ) ໄດ້ຂຽນໄວ້ວ່າ:

ນອກຈາກການເຕີບໂຕໃນທາງປະລິມານຂອງກຸ່ມທ້ອນເງິນທັງໃນດ້ານຈຳນວນກຸ່ມ, ຈຳນວນເງິນທ້ອນກອງທຶນໝູນວຽນທີ່ເພີ່ມຂຶ້ນພາຍໃນກຸ່ມແລ້ວພົບວ່າກິດຈະກຳການທ້ອນເງິນ ແລະ ກອງທຶນໄດ້ສົ່ງຜົນຕໍ່ການແກ້ໄຂບັນຫາຂອງສະມາຊິກໃນກຸ່ມທ້ອນເງິນໃນດ້ານຕ່າງໆຄື:

### 2.5.1. <u>ດ້ານເສດຖະກິດ</u>

➢ *ການແກ້ໄຂບັນຫາການຂາຍເຂົ້າຂຽວ:* ເຊິ່ງເປັນບັນຫາໃຫຍ່ຂອງຊາວກະສິກອນກ່ອນທີ່ຈະມີກຸ່ມທ້ອນເງິນ, ກ່ອນການເກັບກ່ຽວ (ຊ່ວງເຂົ້າຂຽວ) ຖ້າຊາວກະສິກອນມີຄວາມຈຳເປັນຕ້ອງໃຊ້ເງິນເພື່ອລົງທຶນເຮັດນາ ຫຼື ໃຊ້ຈ່າຍໃນຄອບຄົວຈະແກ້ໄຂບັນຫາໂດຍການກູ້ຢືມເງິນຈາກນາຍທຶນພາຍໃນ ຫຼື ພາຍນອກບ້ານໂດຍສັນຍາວ່າຈະຂາຍເຂົ້າໃຫ້ ເຊິ່ງເປັນການຂາຍເຂົ້າຂຽວດັ່ງກ່າວເຮັດໃຫ້ຊາວກະສິກອນເສຍ

ປງບຖືກກົດລາຄາລົງເຄິ່ງໜຶ່ງ ເຮັດໃຫ້ສະມາຊິກບາງຄົນບໍ່ມີເຂົ້າເຫຼືອພຽງພໍຕໍ່ການບໍລິໂພກໃນຄອບຄົວຕະຫຼອດທັງປີ.

ເມື່ອມີກຸ່ມທ້ອນເງິນສະມາຊິກສາມາດກູ້ເງິນຈາກກຸ່ມແທນການຂາຍເຂົ້າຂຽວ ແລະ ນຳມາໃຊ້ແທນຄືນພາຍຫຼັງເກັບກ່ຽວເຂົ້າແລ້ວ ເຮັດໃຫ້ສາມາດຂາຍເຂົ້າໄດ້ຕາມລາຄາຕະຫຼາດເພື່ອນຳມາຊຳລະຄືນໜີ້ກຸ່ມ ແລະ ສ່ວນທີ່ເຫຼືອສຳລັບໃຊ້ຈ່າຍໃນຄອບຄົວມີເຂົ້າເພື່ອການບໍລິໂພກຕະຫຼອດປີ.

ນອກຈາກການແກ້ໄຂບັນຫາການຂາຍເຂົ້າຂຽວແລ້ວຍັງຊ່ວຍແກ້ໄຂບັນຫາຄື:

- *ແກ້ໄຂບັນຫາເງິນກູ້ນອກລະບົບ.*
- *ເປັນຄ່າໃຊ້ຈ່າຍໃນການລົງທຶນທາງການກະສິກຳ.*
- *ຂະຫຍາຍກິດຈະການ ຫຼື ທຸລະກິດໃນຄອບຄົວ.*
- *ເກີດການພັດທະນາທຸລະກິດພາຍໃນບ້ານ.*

### 2.5.2. <u>ດ້ານສັງຄົມ</u>

- *ເກີດການຊ່ວຍເຫຼືອເກື້ອກູນ ແລະ ຄວາມຮັກຄວາມສາມັກຄີພາຍໃນບ້ານ:* ຈາກການທີ່ກຸ່ມທ້ອນເງິນໄດ້ກຳນົດຮູບແບບກິດຈະກຳທີ່ເຮັດໃຫ້ສະມາຊິກໄດ້ພົບເຫັນກັນເລື້ອຍໆຮັບຮູ້ບັນຫາ ແລະ ຄິດຫາທາງຊ່ວຍເຫຼືອສະມາຊິກທີ່ມີຄວາມຈຳເປັນເດືອດຮ້ອນໃນດ້ານຕ່າງໆເປັນປະຈຳເຮັດໃຫ້ເກີດຄວາມເຫັນອົກເຫັນໃຈ, ຄວາມເອື້ອອາທອນລະຫ່ວາງກັນເຊັ່ນ: ກໍລະນີການກຳນົດເງື່ອນໄຂພິເສດຂອງສິນເຊື່ອກໍລະນີເຈັບປ່ວຍສຸກເສີນ, ຫຼາຍກຸ່ມກຳນົດໃຫ້ສະມາຊິກຢືມເງິນໂດຍບໍ່ເສຍດອກເບ້ຍ ຫຼື ເສຍດອກເບ້ຍໃນອັດຕາທີ່ຕໍ່າກວ່າສິນເຊື່ອປະເພດອື່ນ. ຢ່າງໃດກໍ່ຕາມພາຍຫຼັງຈາກກຸ່ມມີກອງທຶນເຕີບໂຕຂຶ້ນກໍ່ມີການປັບປຸງຈາກການໃຫ້ສິນເຊື່ອພິເສດເປັນສະຫວັດດີການຊ່ວຍເຫຼືອແບບໃຫ້ລ້າ ຫຼື ກໍລະນີນຳເງິນກອງທຶນພັດທະນາບ້ານໄປສ້ອມແປງວັດ, ໂຮງຮຽນ, ຫ້ອງການບ້ານເຮັດໃຫ້ເກີດຄວາມຮັກຄວາມສາມັກຄີພາຍໃນບ້ານຫຼາຍຂຶ້ນ.
- *ເກີດກອງທຶນສະຫວັດດີການສັງຄົມ:* ເກີດມິຕິໃໝ່ຂອງການພັດທະນາບ້ານໃນປະເທດລາວທີ່ພາຍໃນບ້ານໄດ້ມີລະບົບສະຫວັດດີການ ເພື່ອເບິ່ງແຍງຊ່ວຍເຫຼືອຄົນໃນບ້ານໂດຍກຸ່ມທ້ອນເງິນ ເຊິ່ງເປັນອົງກອນຂອງບ້ານເອງຈາກການທີ່ໄດ້ມີໂອກາດມາສຶກສາເບິ່ງວຽກ ແລະ ແລກປ່ຽນປະສົບການກັບກຸ່ມທ້ອນເງິນໃນປະເທດໄທໄດ້ມີການນຳແນວຄິດເລື່ອງການຈັດສະຫວັດດີການໄປປະຍຸກໃຊ້ໃນການຈັດສະຫວັດດີການໃຫ້ສະມາຊິກກຸ່ມທ້ອນເງິນໂດຍການຈັດສັນຈາກເງິນກຳໄລສຸດທິຂອງກຸ່ມ ແລະ ບາງກຸ່ມມີການລົມທົບຈາກສະມາຊິກ.

## 2.6. ສະພາບລວມຂອງໂຄງການ

ໂຄງການ Telefood ແມ່ນໂຄງການໜຶ່ງທີ່ກຳລັງດຳເນີນການພັດທະນາສົ່ງເສີມການຜະລິດກະສິກຳຢູ່ຫຼາຍປະເທດ ໃນນັ້ນແມ່ນມີປະເທດລາວເຮົາອີກດ້ວຍ. ໄດ້ຮັບການສະໜັບສະໜູນດ້ານການເງິນ

ຈາກອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (Food and Agriculture Organization) ເລີ່ມແຕ່ 2005 IFAHL (Improvement of Food Availability at Househole Level) ກໍ່ແມ່ນໂຄງການໜຶ່ງ ໂດຍຜ່ານການຈັດຕັ້ງປະຕິບັດຂອງຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດລາວ ແຕ່ປີ 2008-2009 ເຊິ່ງມີຈຸດປະສົງເພື່ອແນ່ໃສ່ຊຸກຍູ້ໃຫ້ຊາວກະສິກອນໃນ 4 ບ້ານອ້ອມຂ້າງຄະນະກະເສດສາດ, ໃຫ້ມີຄວາມສາມາດໃນການຜະລິດໄດ້ດ້ວຍຕົນເອງເປັນຕົ້ນ ແມ່ນການປູກພືດ ແລະ ລ້ຽງສັດ ເພື່ອເພີ່ມຄວາມອຸດົມສົມບູນທາງດ້ານສະບຽງອາຫານພາຍໃນຄອບຄົວ ແລະ ເປັນການສ້າງລາຍຮັບໃຫ້ແກ່ຄອບຄົວເປັນຜົນຊ່ວຍໃຫ້ຊາວກະສິກອນມີຊີວິດການເປັນຢູ່ດີຂຶ້ນ.

ສຳລັບກຸ່ມເປົ້າໝາຍຂອງໂຄງການ ແມ່ນປະຊາຊົນທີ່ອາໃສຢູ່ 3 ບ້ານໃນເຂດດົງບັງ ແລະ ເຂດຫ້ວຍຈຽມ ເມືອງໄຊທານີ.ປະກອບມີບ້ານດົງບັງ (ເຂດດົງບັງ) ແລະ ບ້ານເວີນແທ່ນ, ບ້ານທ່າຈຳປາ (ເຂດຫ້ວຍຈຽມ) ບ້ານເຫຼົ່ານີ້ຫ່າງຈາກນະຄອນຫຼວງວຽງຈັນໄປທາງເລກທີ 13 ໃຕ້ປະມານ 37-40 Km. ກຸ່ມເປົ້າໝາຍດັ່ງກ່າວທາງໂຄງການແມ່ນຄາດວ່າຈະໃຫ້ໄດ້ 10 ຄອບຄົວຕໍ່ບ້ານ. ເພື່ອສະໜອງທຶນຮອນ ແລະ ສິ່ງເສີມທາງດ້ານເຕັກນິກວິຊາການ, ເພື່ອເພີ່ມຄວາມສາມາດໃນການຜະລິດສະບຽງອາຫານພາຍໃນຄອບຄົວ ແລະ ສ້າງລາຍໄດ້ຈາກການຂາຍຜົນຜະລິດໃຫ້ແກ່ຄອບຄົວ. ການດຳເນີນກິດຈະກຳການຜະລິດແມ່ນແນ່ໃສ່ການປູກພືດ ແລະ ລ້ຽງສັດເປັນຕົ້ນຕໍ ແຕ່ສິ່ງທີ່ສຳຄັນກໍ່ແນ່ໃສ່ຄວາມສາມັກຄີກັນພາຍໃນຄອບຄົວ ເພື່ອເຮັດໃຫ້ທຸກຄົນໃນຄອບຄົວໄດ້ມີສ່ວນຮ່ວມໃນການດຳເນີນກິດຈະກຳທາງການກະສິກຳຕ່າງໆເຊັ່ນ: ການກະກຽມສະຖານທີ່ປູກພືດ ແລະ ລ້ຽງສັດ, ການບົວລະບັດຮັກສາ, ການອານາໄມ, ການໃຫ້ອາຫານ, ນ້ຳ ແລະ ອື່ນໆ.

❖ **ຈຸດປະສົງຂອງໂຄງການ**

ໂຄງການນີ້ມີຈຸດປະສົງແນ່ໃສ່ຊຸກຍູ້ດ້ານການກະສິກຳ, ພ້ອມດ້ວຍສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ ເພື່ອໃຫ້ຊາວກະສິກອນຜູ້ທຸກຍາກຢູ່ໃນ 3 ບ້ານເປົ້າໝາຍພັດທະນາຄື: ບ້ານດົງບັງ, ບ້ານເວີນແທ່ນ ແລະ ບ້ານທ່າຈຳປາ ເມືອງໄຊທານີ ໃຫ້ມີຄວາມສາມາດຜະລິດກະສິກຳໄດ້ດ້ວຍຕົນເອງເປັນຕົ້ນແມ່ນການປູກພືດ ແລະ ການລ້ຽງສັດ ເພື່ອເພີ່ມຄວາມອຸດົມສົມບູນດ້ານສະບຽງອາຫານໃນຄອບຄົວໃຫ້ດີຂຶ້ນເທື່ອລະກ້າວ ເຊິ່ງເປັນເສັ້ນທາງແຫ່ງການຫຼຸດຜ່ອນຄວາມທຸກຍາກໄດ້.

## 2.7. ສະພາບລວມ ແລະ ຈຸດພິເສດຂອງເມືອງໄຊທານີ

### 2.7.1. <u>ດ້ານປະຊາກອນ ແລະ ການປົກຄອງ</u>

ເມືອງໄຊທານີເປັນເມືອງໜຶ່ງທີ່ໃຫຍ່ ແລະ ກວ້າງຂວາງໃນນະຄອນຫຼວງວຽງຈັນ, ມີປະຊາກອນອາໄສຢູ່ຢ່າງໜາແໜ້ນປະກອບດ້ວຍຫຼາຍຊົນເຜົ່າທີ່ມາຈາກຫຼາຍທ້ອງຖິ່ນ, ມີແນວຄິດຈິດຕະສາດ, ລະດັບຄວາມຮູ້ ແລະ ການເຊື່ອຖືຮີດຄອງປະເພນີທີ່ແຕກຕ່າງກັນ. ມາເຖິງປະຈຸບັນນີ້ມີຈຳນວນບ້ານທັງໝົດ 104 ບ້ານ, ແບ່ງອອກເປັນ 11 ກຸ່ມ.

ຈຳນວນຄົວເຮືອນທັງໝົດ 28,491 ຫຼັງຄາເຮືອນ, ມີ 29,867 ຄອບຄົວ, ພົນລະເມືອງທັງໝົດມີ 166,892 ຄົນ, ຍິງ 82,727 ຄົນ. ເນື້ອທີ່ທັງໝົດ 50,860 ha, ສະເລ່ຍຄວາມໜາແໜ້ນຂອງພົນລະເມືອງປະມານ 182 ຄົນ/Km$^2$, ເນື້ອທີ່ທຳການຜະລິດທັງໝົດມີ 21,719 ha, ເນື້ອທີ່ນາປີມີທັງໝົດ 14,000 ha, ເນື້ອທີ່ນາແຊງມີທັງໝົດ 4,657 ha, ເນື້ອທີ່ປູກຜັກ 3,000 ha, ເນື້ອທີ່ປູກໄມ້ໃຫ້ໝາກ 62 ha.

- ເມືອງໄຊທານີມີເຂດແດນຕິດກັບຫຼາຍດ້ານລາຍລະອຽດດັ່ງລຸ່ມນີ້:

- ທິດເໜືອຕິດກັບເມືອງທຸລະຄົມ
- ທິດໃຕ້ຕິດກັບເມືອງໄຊເສດຖາ ແລະ ເມືອງຫາດຊາຍຟອງ
- ທິດຕາເວັນອອກຕິດກັບເມືອງປາກງື່ມ
- ທິດຕາເວັນຕົກຕິດກັບເມືອງນາຊາຍທອງ ແລະ ເມືອງຈັນທະບູລີ.

(ແຜນພັດທະນາເສດຖະກິດ - ສັງຄົມ 5 ປີຄັ້ງທີ VII (2011-2015) ແລະ ວິໄສທັດຮອດ 2020 ຂອງເມືອງໄຊທານີ).

## 2.8. ສະພາບລວມຂອງບ້ານເປົ້າໝາຍ

### 2.8.1. ສະພາບລວມຂອງບ້ານດົງບັງ

ບ້ານດົງບັງແມ່ນບ້ານໜຶ່ງທີ່ຂຶ້ນກັບເມືອງໄຊທານີ, ນະຄອນຫຼວງວຽງຈັນ ເຊິ່ງຕັ້ງຢູ່ທາງທິດຕາເວັນອອກສ່ຽງເໜືອຂອງເມືອງໄລຍະທາງຫ່າງຈາກເມືອງປະມານ 25 Km ແລະ ມີຊາຍແດນຕິດຈອດກັບ 4 ບ້ານຄື:

- ທິດເໜືອມີຊາຍແດນຕິດກັບບ້ານທ່າດອກຄຳ
- ທິດໃຕ້ມີຊາຍແດນຕິດກັບບ້ານນາມົນ
- ທິດຕາເວັນອອກຕິດກັບບ້ານນາພອກ
- ທິດຕາເວັນຕົກຕິດກັບບ້ານນາສາລາ

ບ້ານດົງບັງມີເນື້ອທີ່ທັງໝົດປະມານ 309 ha, ມີເນື້ອທີ່ປຸກສ້າງເທົ່າກັບ 18.4450 ha, ມີເນື້ອທີ່ນາທັງໝົດ 290.9 ha, ມີພົນລະເມືອງທັງໝົດ 881 ຄົນ, ຍິງ 414 ຄົນ, ມີ 151 ຄອບຄົວ, ມີ 150 ຫຼັງຄາເຮືອນ, ປະກອບດ້ວຍ 11 ໜ່ວຍ, ພາຍໃນບ້ານມີ 1 ຊົນເຜົ່າຄື: ຊົນເຜົ່າລາວລຸ່ມ, ນັບຖືສາດສະໜາພຸດ, ອາຊີບສ່ວນໃຫຍ່ແມ່ນເຮັດນາກວມ 55.27 % ຂອງພົນລະເມືອງທັງໝົດ.

#### 2.8.1.1. ດ້ານການປູກພືດ

ການປູກພືດຂອງປະຊາຊົນພາຍໃນບ້ານແມ່ນມີການປູກພືດຫຼາຍຊະນິດທີ່ມີຄວາມຫຼາກຫຼາຍພໍສົມຄວນເຊັ່ນ: ນາປີດຳກ້າຫວ່ານ, ນາຫວ່ານ, ນາແຊງ, ໄຮ່ຖາງ, ເຮັດສວນໝາກໂມ, ເຮັດສວນຜັກ ແລະ

ອື່ນໆ. ທີ່ມີແບບປະສົມປະສານໂດຍການຜະລິດສ່ວນໃຫຍ່ແມ່ນຜະລິດເພື່ອລ້ຽງຊີບພາຍໃນຄອບ ຄົວ ແລະ ມີບາງຄອບຄົວຜະລິດຫຼາຍກໍ່ຂາຍອອກສູ່ຕະຫຼາດ.

2.8.1.2. <u>ດ້ານການລ້ຽງສັດ</u>

ການລ້ຽງສັດປະຊາຊົນໂດຍສ່ວນໃຫຍ່ ແມ່ນລ້ຽງແບບທຳມະຊາດ ແລະ ຂັງຄອກ, ສັດທີ່ລ້ຽງພາຍໃນບ້ານມີຫຼາຍຊະນິດເຊັ່ນ: ງົວ, ຄວາຍ, ໝູ, ແບ້, ເປັດ, ໄກ່. ການລ້ຽງສັດແມ່ນມີການເກື້ອກູນກັບການປູກພືດ ໂດຍນຳເອົາສິ່ງເສດເຫຼືອຈາກສັດມາໃຊ້ເປັນຝຸ່ນຄອກໃນການປູກພືດການລ້ຽງສັດຂອງຊາວກະສິກອນແມ່ນລ້ຽງໄວ້ເພື່ອບໍລິໂພກ, ເປັນທຶນສະສົມ ແລະ ຂາຍອອກໃນຍາມຈຳເປັນເທົ່ານັ້ນ.

2.8.1.3. <u>ບັນຫາໃນການປູກພືດ ແລະ ລ້ຽງສັດ</u>

- <u>ບັນຫາໃນການປູກພືດ</u>

- ນາປີ: ເກີດໄພທຳມະຊາດເຊັ່ນ: ແຫ້ງແລ້ງ, ນ້ຳຖ້ວມ, ຫອຍກັດເຂົ້າ ແລະ ພະຍາດແມງໄມ້ເປັນຕົ້ນ.

- ນາແຊງ: ນ້ຳບໍ່ພຽງພໍເຮັດໃຫ້ພື້ນທີ່ກິດຫຼຸດລົງ.

- ພືດຜັກ: ແຫຼ່ງນ້ຳບໍ່ພຽງພໍ ແລະ ລາຄາຜົນຜະລິດບໍ່ແນ່ນອນ

- <u>ບັນຫາໃນການລ້ຽງສັດ</u>

- ການລ້ຽງງົວ: ມີບັນຫາທີ່ງຫຍ້າຢູ່ໄກຈາກບ່ອນລ້ຽງ, ທີ່ງຫຍ້າລ້ຽງສັດບໍ່ພຽງພໍສັດຈ່ອຍ, ພະຍາດລະບາດ ເຊັ່ນ: ພະຍາດປາກເປື່ອຍລົງເລັບ, ເຕົ້າໂຮມເລືອດ ແລະ ທ້ອງເບັງ.

- ການລ້ຽງແບ້: ມັກຈະເກີດພະຍາດຫຼາຍຢ່າງເຊັ່ນ: ພະຍາດປາກເປື່ອຍລົງເລັບ, ເຕົ້າໂຮມເລືອດ, ທ້ອງເບັງ

- ການລ້ຽງສັດປີກ: ລະດູຝົນມັກເກີດພະຍາດເຊັ່ນ: ນິວຄາເຊີນອະຫິວາສັດປີກ ແລະ ໄຂ້ຫວັດນົກ.

2.8.1.4. <u>ທ່າແຮງ</u>

- ມີພື້ນທີ່ກ້ວາງຂວາງເໝາະສົມໃນການທຳການຜະລິດລະດູແລ້ງ.

- ມີສິ່ງເສດເຫຼືອຈາກການກະສິກຳ ໂດຍສະເພາະແມ່ນມາຈາກການປູກພືດຫຼາຍຢ່າງ (ປະກອບມີເສດ ເຟືອງ ແລະ ເສດພືດສວນທີ່ບໍ່ໄດ້ນຳໃຊ້).

- ການລ້ຽງສັດປີກມີຄວາມເໝາະສົມເນື່ອງຈາກເສດພືດສວນມີຫຼາຍ ຊຶ່ງພວກເຮົາສາມາດນຳເປັນສ່ວນປະສົມກັບອາຫານໄດ້ ແລະ ອີກຢ່າງໜຶ່ງຕະຫຼາດກໍ່ມີຄວາມຕ້ອງການ.

**2.8.2. <u>ສະພາບລວມຂອງບ້ານເວີນແທ່ນ</u>**

ບ້ານເວີນແທ່ນແມ່ນບ້ານໜຶ່ງທີ່ຂຶ້ນກັບເມືອງໄຊທານີ, ນະຄອນຫຼວງວຽງຈັນ. ຕັ້ງຢູ່ຫ່າງຈາກເມືອງໄຊທານີປະມານ 36 Km ເຊິ່ງມີຊາຍແດນຕິດກັບບ້ານຕ່າງໆດັ່ງລຸ່ມນີ້:

- ທິດເໜືອຕິດກັບບ້ານທ່າດິນແດງ
- ທິດໃຕ້ຕິດກັບສາຍນ້ຳງື່ມ ແລະ ບ້ານສີມສະໄໝ
- ທິດຕາເວັນອອກຕິດກັບບ້ານທ່າຈຳປາ
- ທິດຕາເວັນຕົກຕິດກັບບ້ານປາກຊາບໃໝ່ ແລະ ປາກຊາບເກົ່າ

ບ້ານເວີນແທ່ນມີຈຳນວນພົນລະເມືອງທັງໝົດ 680 ຄົນ, ຍິງ 138 ຄົນ, ມີຈຳນວນຄອບຄົວທັງໝົດ 136 ຄອບຄົວ, ແບ່ງເປັນ 8 ໜ່ວຍ, ປະກອບມີເຜົ່າລາວລຸ່ມ, ປະຊາຊົນພາຍໃນບ້ານແມ່ນຖືສາດສະໜາພຸດ.ມີເນື້ອທີ່ທັງໝົດ 1,502 ha, ເນື້ອທີ່ທຳການຜະລິດ 172.32 ha, ເນື້ອທີ່ສວນ 86 ha. ປະຊາຊົນພາຍໃນບ້ານແມ່ນຍຶດຖືອາຊີບເຮັດການກະສິກຳເປັນຕົ້ນຕໍເຊັ່ນ: ການປູກ ຝັງ ແລະ ລ້ຽງສັດ. ນອກຈາກນີ້ຍັງມີອາຊີບຄ້າຂາຍອີກດ້ວຍ.

2.8.2.1. <u>ດ້ານການປູກພືດ</u>

ການປູກພືດຂອງປະຊາຊົນພາຍໃນບ້ານແມ່ນມີຄວາມຫຼາກຫຼາຍພໍສົມຄວນເຊັ່ນ: ເຮັດນາ, ສວນຂ່າ, ສວນໝາກບວບ, ສວນໝາກເຜັດ, ສວນໜໍ່ແຍ້, ສວນໝາກຫຸ່ງ ແລະ ພືດຜັກຕ່າງໆ. ການປູກພືດແມ່ນໃຊ້ແນວພັນພື້ນເມືອງ ແລະ ອາໄສຝຸ່ນຄອກທີ່ເປັນສິ່ງເສດເຫຼືອທີ່ໄດ້ຈາກການລ້ຽງສັດໃສ່ເປັນທາດອາຫານໃຫ້ພືດ, ການປູກພືດຂອງປະຊາຊົນສ່ວນຫຼາຍ ແມ່ນປູກເພື່ອບໍລິໂພກພາຍໃນຄອບຄົວ ແລະ ມີບາງຄອບຄົວແມ່ນຜະລິດເພື່ອຂາຍເປັນສິນຄ້າ.

2.8.2.2. <u>ດ້ານການລ້ຽງສັດ</u>

ປະຊາຊົນພາຍໃນບ້ານ ແມ່ນລ້ຽງສັດແບບປ່ອຍຕາມທຳມະຊາດ ແລະ ແບບຂັງ, ສ່ວນຫຼາຍແມ່ນລ້ຽງສັດເຊັ່ນ: ງົວ, ຄວາຍ, ໝູ, ແບ້ ແລະ ສັດປີກ. ແນວພັນສັດລ້ຽງແມ່ນແນວພັນພື້ນເມືອງການລ້ຽງສັດແມ່ນມີລັກສະນະເກື້ອກູນກັບກິດຈະກຳການປູກພືດ, ໂດຍການນຳເອົາສິ່ງເສດເຫຼືອຈາກສັດມານຳໃຊ້ເປັນຝຸ່ນຄອກ ເພື່ອໃຊ້ເຂົ້າໃນການປູກພືດ, ການລ້ຽງສັດແມ່ນຈະລ້ຽງເພື່ອເປັນທຶນສະສົມ, ເປັນແຮງງານລາກແກ່ ແລະ ຂາຍອອກໃນເວລາທີ່ຄອບຄົວມີຄວາມຈຳເປັນຮີບດ່ວນ.

2.8.2.3. <u>ບັນຫາໃນການປູກພືດ ແລະ ລ້ຽງສັດ</u>

- <u>ບັນຫາໃນການປູກພືດ</u>

- ພະຍາດມັກເກີດກັບໝາກຫຸ່ງເຊັ່ນ: ພະຍາດໃບຈຸດ, ໝາກຊ້ຳ, ພະຍາດດັ່ງກ່າວມັກເກີດຂຶ້ນໃນເດືອນພະຈິກ ແລະ ເດືອນມັງກອນ.

- ພະຍາດທີ່ເກີດກັບໝາກເຜັດເຊັ່ນ: ຮາກເນົ່າ, ຕົ້ນ ແລະ ໃບຫ່ຽວເຮັດໃຫ້ຜົນຜະລິດຕົກຕໍ່າ, ພະຍາດນີ້ມັກເກີດໃນເດືອນພະຈິກ ແລະ ເດືອນມີນາ.

- <u>ບັນຫາການລ້ຽງສັດ</u>

ສັດລ້ຽງເອື້ອງເຊັ່ນ: ງົວ, ຄວາຍ, ແບ້ມັກເກີດພະຍາດເຕົ້າໂຮມເລືອດພະຍາດຊະນິດນີ້ມັກເກີດໃນເດືອນເມສາ - ເດືອນມິຖຸນາ ແລະ ພະຍາດທ້ອງເບັ່ງມັກເກີດໃນຊ່ວງລະດູຝົນ.

2.8.2.4. <u>ທ່າແຮງ</u>

- ປະຊາຊົນມີມູນເຊື້ອດຸໝັ່ນຂະຫຍັນພຽນ
- ມີແຮງງານຕົ້ນຕໍສະເລ່ຍ 3-5 ຄົນ/ຄອບຄົວ
- ມີພື້ນທີ່ເໝາະສົມໃນການປູກພືດ
- ໃກ້ກັບນ້ຳງື່ມ

**2.8.3. <u>ສະພາບລວມຂອງບ້ານທ່າຈຳປາ</u>**

ບ້ານທ່າຈຳປາ ແມ່ນບ້ານໜຶ່ງທີ່ຂຶ້ນກັບເມືອງໄຊທານີ, ນະຄອນຫຼວງວຽງຈັນຕັ້ງຫ່າງຈາກເມືອງໄຊທານີປະມານ 37 Km, ມີຄວາມສູງຈາກລະດັບໜ້ານ້ຳທະເລ 169 m, ມີຊາຍແດນຕິດກັບ 4 ບ້ານ ແລະ ຕິດກັບແມ່ນ້ຳງື່ມມີລາຍລະອຽດດັ່ງນີ້:

- ທິດເໜືອຕິດກັບບ້ານນາຕານ
- ທິດໃຕ້ຕິດກັບສາຍນ້ຳງື່ມ ແລະ ບ້ານສົມສະໄໝ
- ທິດຕາເວັນອອກຕິດກັບບ້ານຫາດວຽງຄຳ
- ທິດຕາເວັນຕົກຕິດກັບບ້ານເວີນແທ່ນ

ບ້ານທ່າຈຳປາມີເນື້ອທີ່ທັງໝົດ 161.87 ha, ມີພົນລະເມືອງທັງໝົດ 345 ຄົນ, ຍິງ 235 ຄົນ, ມີ 94 ຄອບຄົວ (ບ້ານທ່າໄຄ້ມີ 24 ຄອບຄົວ) ປະກອບມີຊົນເຜົ່າລາວລຸ່ມ, ຊົນເຜົ່າຜູ້ໄທ ແລະ ຊົນເຜົ່າລາວເທິງ ພາຍໃນບ້ານເຊື່ອຖືສາດສະໜາພຸດ ແລະ ສາດສະໜາຜີ. ປະຊາຊົນພາຍໃນບ້ານສ່ວນໃຫ່ຍແມ່ນຍຶດຖືອາຊີບກະສິກຳເຊັ່ນ: ການປູກຝັງ ແລະ ລ້ຽງສັດ. ນອກຈາກນີ້ຍັງປະກອບອາຊີບໃນການຄ້າຂາຍ, ເຮັດຫັດຖະກຳຕ່ຳແຜ່ນ ແລະ ອາຊີບຮັບຈ້າງ.

2.8.3.1. <u>ດ້ານການປູກພືດ</u>

ການປູກພືດແມ່ນມີການປູກພືດຫຼາຍຊະນິດ, ການປູກພືດດັ່ງກ່າວແມ່ນອາໄສນ້ຳຝົນ ແລະ ນ້ຳຊົນລະປະທານ. ພືດທີ່ປູກສ່ວນໃຫ່ຍແມ່ນເພື່ອບໍລິໂພກພາຍໃນຄອບຄົວ ແລະ ປູກເພື່ອເປັນສິນຄ້າ. ພືດທີ່ປູກມີຫຼາກຫຼາຍຊະນິດເຊັ່ນ: ນາປີ, ນາແຊງ, ໝາກຫຸ່ງ, ໝາກໂມ, ໝາກແຕງ, ໝາກເຜັດ, ໝາກຖົ່ວ, ໝາກເຂືອ, ຜັກ ແລະ ອື່ນໆ.

2.8.3.2. <u>ດ້ານການລ້ຽງສັດ</u>

ປະຊາຊົນພາຍໃນບ້ານ ແມ່ນລ້ຽງສັດແບບປ່ອຍຕາມທຳມະຊາດ ແລະ ແບບຂັງ, ສ່ວນຫຼາຍແມ່ນລ້ຽງສັດເຊັ່ນ: ງົວ, ຄວາຍ, ໝູ, ແບ້ ແລະ ສັດປີກ. ແນວພັນສັດລ້ຽງແມ່ນແນວພັນພື້ນເມືອງການລ້ຽງສັດແມ່ນມີລັກສະນະເກື້ອກູນກັບກິດຈະກຳການປູກພືດ, ໂດຍການນຳເອົາສິ່ງເສດເຫຼືອຈາກສັດມານຳໃຊ້ເປັນຝຸ່ນຄອກ ເພື່ອໃຊ້ເຂົ້າໃນການປູກພືດ, ການລ້ຽງສັດແມ່ນຈະລ້ຽງເພື່ອເປັນທຶນສະສົມ, ເປັນແຮງງານລາກແກ່ ແລະ ຂາຍອອກໃນເວລາທີ່ຄອບຄົວມີຄວາມຈຳເປັນຮີບດ່ວນ.

2.8.3.3. <u>ບັນຫາ ແລະ ຄວາມຫຍຸ້ງຍາກໃນການຜະລິດ</u>

- <u>ບັນຫາໃນການປູກພືດ</u>

- ພະຍາດມັກເກີດກັບໝາກຫຸ່ງເຊັ່ນ: ພະຍາດໃບຈຸດ, ໝາກຊ້ຳ, ພະຍາດດັ່ງກ່າວມັກເກີດຂຶ້ນໃນເດືອນພະຈິກ ແລະ ເດືອນມັງກອນ.

- ພະຍາດທີ່ເກີດກັບໝາກເຜັດເຊັ່ນ: ຮາກເນົ່າ, ຕົ້ນ ແລະ ໃບຫ່ຽວເຮັດໃຫ້ຜົນຜະລິດຕົກຕ່ຳ, ພະຍາດ ນີ້ມັກເກີດໃນເດືອນພະຈິກ ແລະ ເດືອນມີນາ.

- ພະຍາດທີ່ເກີດກັບຕົ້ນກ້ວຍເຊັ່ນ: ເຮັດໃຫ້ຍວກກ້ວຍຢູ່ໃນພາກສ່ວນໃຈກາງຂອງຕົ້ນກ້ວຍເນົ່າ ແລະ ມີໃບຫ່ຽວແຫ້ງ.

- <u>ບັນຫາການລ້ຽງສັດ</u>

ສັດລ້ຽງເອື້ອງເຊັ່ນ: ງົວ, ຄວາຍ, ແບ້ມັກເກີດພະຍາດເຕົ້າໂຮມເລືອດພະຍາດຊະນິດນີ້ມັກເກີດໃນເດືອນເມສາ - ເດືອນມິຖຸນາ ແລະ ພະຍາດທ້ອງເບັ່ງມັກເກີດໃນຊ່ວງລະດູຝົນ.

2.8.3.4. <u>ທ່າແຮງ</u>

- ປະຊາຊົນມີມູນເຊື້ອດຸໝັ່ນຂະຫຍັນພຽນ.
- ມີແຮງງານຕົ້ນຕໍສະເລ່ຍ 3-5 ຄົນ/ຄອບຄົວ.
- ມີພື້ນທີ່ເໝາະສົມໃນການປູກພືດ.
- ມີພື້ນທີ່ເໝາະສົມໃນການລ້ຽງສັດ.
- ມີໄຟຟ້າ ແລະ ຊົນລະປະທານ.
- ມີຕະຫຼາດ ແລະ ເສັ້ນທາງຄົມມະນາຄົມສະດວກໃນການຂົນສົ່ງ, ຂາຍຜົນຜະລິດຕະຫຼອດປີ.

# III. ອຸປະກອນ ແລະ ວິທີການ
# (Materials and Methods)

## 3.1. ອຸປະກອນ

### 3.1.1. ອຸປະກອນພາກສະໜາມ

- ແບບຟອມສຳພາດເພື່ອລົງເກັບຂໍ້ມູນກ່ຽວກັບກອງທຶນ.

### 3.1.2. ອຸປະກອນພາກວິເຄາະ

- ຈັກຄິດໄລ່, ຄອມພິວເຕີ (Computer).

## 3.2. ວິທີການ

### 3.2.1. ສະຖານທີ່ສຶກສາ

ການເກັບກຳຂໍ້ມູນໃນຄັ້ງນີ້ແມ່ນໄດ້ລົງສຶກສາຢູ່ 3 ບ້ານຄື: ບ້ານດົງບັງ, ບ້ານເວີນແທ່ນ ແລະ ບ້ານທ່າຈຳປາ ເຊິ່ງເປັນບ້ານທີ່ໄດ້ຮັບກອງທຶນພັດທະນາກະສິກຳຂັ້ນບ້ານຂອງໂຄງການ Telefood.

### 3.2.2. ໄລຍະເວລາໃນການສຶກສາ

ໃນການລົງສຶກສາຄັ້ງນີ້ໃຊ້ເວລາທັງໝົດ 4 ເດືອນ ເຊິ່ງເລີ່ມຕັ້ງແຕ່ວັນທີ 17/3/2010 ເຖິງວັນທີ 26/7/2010 ມີ 3 ໄລຍະຄື:

1. ລົງເກັບກຳຂໍ້ມູນພາກສະໜາມເລີ່ມວັນທີ 17/3/2010-17/4/2010.
2. ໄລຍະສັງລວມຂໍ້ມູນເລີ່ມວັນທີ 18/4/2010-22/5/2010 ເປັນໄລຍະສັງລວມຂໍ້ມູນທີ່ໄດ້ມາ, ພິມໃສ່ຄອມພິວເຕີເພື່ອໄວ້ວິໄຈ.
3. ໄລຍະສຸດທ້າຍເລີ່ມແຕ່ວັນທີ 23/5/2010-26/7/2010 ເປັນໄລຍະວິໄຈຂໍ້ມູນ, ຂຽນເປັນບົດລາຍງານທ້າຍການສຶກສາ.

### 3.2.3. ວິທີການເກັບຂໍ້ມູນ ແລະ ວິເຄາະຂໍ້ມູນ

3.2.3.1. ສຶກສາຂໍ້ມູນມືສອງ

ການສຶກສາຄັ້ງນີ້ ແມ່ນໄດ້ເກັບຂໍ້ມູນມືສອງຈາກທາງໂຄງການກອງທຶນພັດທະນາກະສິກຳສຶກສາ ໃນປີ 2008 .

3.2.3.2. ການກະກຽມແບບຟອມສຳພາດ

ການຂຽນແບບຟອມສຳພາດ ແມ່ນເລີ່ມຂຽນພ້ອມກັບບົດສະເໜີໂຄງການຈົບຊັ້ນເນື້ອໃນແບບຟອມສຳພາດໄດ້ອີງໃສ່ຈຸດປະສົງທີ່ຕ້ອງການສ້າງໄດ້ 2 ແບບຄື: ແບບທີ 1 ສຳລັບສຳພາດຄະນະບໍລິຫານກອງທຶນພັດທະນາກະສິກຳຂັ້ນບ້ານ, ແບບທີ 2 ສຳລັບສຳພາດສະມາຊິກກອງທຶນ.

3.2.3.3. ການຄັດເລືອກກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍ ແມ່ນໄດ້ເອົາຕາມຈຳນວນສະມາຊິກຜູ້ທີ່ຮັບເອົາກອງທຶນທັງໝົດທີ່ຢູ່ພາຍໃນ 3 ບ້ານມີຢູ່ 20 ຄອບຄົວທີ່ຮັບເອົາກອງທຶນໃນນັ້ນຢູ່ບ້ານດົງບັງມີ 9 ຄອບຄົວ, ບ້ານເວີນແທ່ນມີ 3 ຄອບຄົວ, ບ້ານທ່າຈຳປາມີ 8 ຄອບຄົວ (ບ້ານທ່າໄຄ້ ແລະ ທ່າຈຳປາແມ່ນໄດ້ລວມເປັນບ້ານດຽວແລ້ວ).

3.2.3.4. ການເກັບຂໍ້ມູນພາກສະໜາມ

ຫຼັງຈາກກຽມແບບຟອມສຳພາດ ແລະ ກຳນົດກຸ່ມເປົ້າໝາຍເປັນທີ່ຮຽບຮ້ອຍແລ້ວກໍ່ໄດ້ໄປເກັບຂໍ້ມູນພາກສະໜາມ ໂດຍການສຳພາດຄະນະບໍລິຫານ ແລະ ສະມາຊິກກອງທຶນທີ່ຢູ່ແຕ່ລະບ້ານການສຳພາດແມ່ນສຳພາດຕາມແບບຟອມສຳພາດທີ່ມີທັງຄຳຖາມແບບປິດ, ຄຳຖາມແບບເປີດ ແລະ ຄຳຖາມທີ່ຜູ້ສຳພາດຕ້ອງເຈາະຈີ້ມພ້ອມທັງສັງເກດໄປພ້ອມ ເມື່ອເກັບຂໍ້ມູນໄປແລ້ວແຕ່ບໍ່ຄົບຖ້ວນກໍ່ຈະກັບມາສຳພາດຄືນອີກເພື່ອໃຫ້ໄດ້ຂໍ້ມູນທີ່ລະອຽດໃນການວິເຄາະຂໍ້ມູນ. ການສຳພາດແຕ່ລະຄອບຄົວແມ່ນໃຊ້ເວລາປະມານ 2-2,5 ຊົ່ວໂມງ.

3.2.3.5. ການວິເຄາະຂໍ້ມູນ

ພາຍຫຼັງເກັບຂໍ້ມູນພາກສະໜາມມາແລ້ວກໍ່ນຳມາວິເຄາະຢູ່ 2 ແບບຄື: ແບບຄິດໄລ່ໂດຍເອົາຂໍ້ມູນທີ່ໄດ້ເປັນຕົວເລກນັ້ນມາຄິດໄລ່ດ້ວຍມືແລ້ວເອົາຂໍ້ມູນດັ່ງກ່າວມາປ້ອນໃສ່ Programme Microsoft Exel ເພື່ອໃຫ້ໄດ້ໝາກຜົນທາງດ້ານເສດຖະກິດຂອງແຕ່ລະຄອບຄົວສະມາຊິກ ແລະ ແບບທີ່ 2 ແມ່ນວິໄຈຂໍ້ມູນດ້ານຄຸນນະພາບ ເຊິ່ງດ້ານຄຸນນະພາບນີ້ໄດ້ແກ່ຂໍ້ມູນທີ່ບໍ່ສາມາດວິເຄາະເປັນຕົວເລກໄດ້ເຊັ່ນ: ຂໍ້ມູນການບໍລິຫານງານ, ການນຳໃຊ້ກອງທຶນຂອງສະມາຊິກໄປເຮັດກິດຈະກຳຫຍັງແດ່, ມີບັນຫາຄືແນວໃດແດ່, ການໃຊ້ແທນຄືນເປັນແນວໃດ, ຍ້ອນຫຍັງຈຶ່ງໃຊ້ແທນຄືນໄດ້ ແລະ ບໍ່ໄດ້.

3.2.3.6. ການຂຽນບົດລາຍງານ

ຜ່ານການເກັບກຳຂໍ້ມູນ ແລະ ວິເຄາະຂໍ້ມູນເປັນທີ່ຮຽບຮ້ອຍແລ້ວກໍ່ເອົາຂໍ້ມູນດັ່ງກ່າວມາຈັດລຽງໃສ່ຜົນໄດ້ຮັບເພື່ອໃຫ້ໄດ້ຕາມຈຸດປະສົງທີ່ກ່າວມາເບື້ອງຕົ້ນ.

# IV. ຜົນໄດ້ຮັບ

# (Results)

## 4.1. ການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ

### 4.1.1. <u>ເຫດຜົນ ແລະ ຄວາມເປັນມາ</u>

ອີງໃສ່ຄຳສັ່ງຂອງເຈົ້າເມືອງໄຊທານີວ່າດ້ວຍການມອບໝາຍໃຫ້ຄະນະກະເສດສາດລົງພັດທະນາກຸ່ມບ້ານພັດທະນາຂອງເມືອງໄຊທານີ. ສະນັ້ນ ຄະນະກະເສດສາດຈຶ່ງເລືອກເອົາ 3 ບ້ານເປົ້າໝາຍຂອງຄະນະກະເສດສາດຄື: ບ້ານດົງບັງ, ບ້ານເວີນແທ່ນ, ບ້ານທ່າຈຳປາ, ທີ່ເປັນຕົວແທນໃນການພັດທະນາສົ່ງເສີມ. ໃນການລົງພັດທະນາກຸ່ມບ້ານດັ່ງກ່າວແມ່ນໄດ້ຮັບການຊ່ວຍເຫຼືອຈາກອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (ໂຄງການ Telefood).

### 4.1.2. <u>ຈຸດປະສົງ ແລະ ເປົ້າໝາຍຂອງກອງທຶນພັດທະນາກະສິກຳຂັ້ນບ້ານ</u>

1. ແນ່ໃສ່ເພື່ອຊ່ວຍຊຸກຍູ້ທຶນຮອນທາງດ້ານການຜະລິດກະສິກຳຢູ່ໃນ 3 ບ້ານເປົ້າໝາຍໂດຍສະເພາະໃນການປູກຝັງ ແລະ ລ້ຽງສັດ.
2. ເພື່ອເພີ່ມຄວາມອຸດົມສົມບູນດ້ານສະບຽງອາຫານພາຍໃນຄອບຄົວໃຫ້ດີຂຶ້ນເທື່ອລະກ້າວ ເຊິ່ງຈະເປັນການຫຼຸດຜ່ອນຄວາມທຸກຍາກຂັ້ນພື້ນຖານ.
3. ສ້າງໂອກາດໃຫ້ແກ່ຄອບຄົວທຸກຍາກສາມາດນຳໃຊ້ທຶນຈຳນວນໜຶ່ງ ເພື່ອເຮັດການຜະລິດ.

### 4.1.3. <u>ເງື່ອນໄຂການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ</u>

ເງື່ອນໄຂໃນການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານນັ້ນຈະຕ້ອງມີຄວາມພ້ອມໃນຫຼາຍດ້ານບໍ່ວ່າຈະເປັນດ້ານວິຊາການ, ທາງດ້ານເງິນທຶນ ເພື່ອຊ່ວຍຊຸກຍູ້ເຂົ້າໃນການຜະລິດກະສິກຳ, ຄວາມສະໝັກໃຈຂອງຊາວກະສິກອນ ແລະ ທາງຄະນະບໍລິຫານກອງທຶນກໍ່ຄວນຈະມີຄວາມເຂົ້າໃຈຕໍ່ໜ້າທີ່, ກົດລະບຽບ ແລະ ຮູ້ປະສານງານກັບຫຼາຍພາກສ່ວນ.

### 4.1.4. <u>ການກຳນົດກົດລະບຽບ ແລະ ເງື່ອນໄຂຕ່າງໆ</u>

ເພື່ອໃຫ້ໄດ້ກົດລະບຽບ ແລະ ເງື່ອນໄຂທີ່ແທດເໝາະກັບສະພາບຕົວຈິງການກຳນົດແມ່ນຖືກກຳນົດໂດຍຄະນະໂຄງການຮ່ວມມືກັບຜູ້ຊົງຄຸນວຸດທິ, ນາຍບ້ານ ແລະ ສະມາຊິກແຕ່ລະບ້ານທີ່ຜ່ານການ

ປະຊຸມຄວາມຄິດ ແລະ ມີຄວາມເຫັນດີຂອງແຕ່ລະພາກສ່ວນ, ຫຼັງຈາກນັ້ນກໍ່ນຳມາເຜີຍແຜ່ຈັດຕັ້ງປະຕິບັດ.

### 4.1.5. ເງື່ອນໄຂໃນການຮັບເອົາເປັນສະມາຊິກກອງທຶນ

1. ເລັ່ງໃສ່ຄອບຄົວທີ່ທຸກຍາກໃນບ້ານທີ່ມີເງື່ອນໄຂ ແລະ ທ່າແຮງໃນການທຳການຜະລິດກະສິກຳໂດຍສະເພາະແມ່ນການປູກຝັງ ແລະ ລ້ຽງສັດ.

2. ກອງທຶນຈະຮັບເອົາສະມາຊິກຢູ່ພາຍໃນບ້ານ ແລະ ຈະຮັບເອົາສະມາຊິກຜູ້ທີ່ມີຄວາມສະໝັກໃຈຝາກທ້ອນທອມ ຫຼື ຝາກປະຫຍັດເງິນໄວ້ໃນກອງທຶນ, ໂດຍທີ່ບຸກຄົນນັ້ນເປັນປະຊາຊົນທີ່ອາໄສຢູ່ພາຍໃນບ້ານ.

3. ເປັນຄົນມີນ້ຳໃຈສັດຊື່ບໍລິສຸດ, ມີຄວາມສະໝັກເປັນສະມາຊິກດ້ວຍຕົນເອງ ແລະ ເປັນຜູ້ທີ່ເຫັນດີປະຕິບັດກົດລະບຽບຂອງກອງທຶນ.

4. ເປັນຄົນຕື່ນຕົວ, ສະໝັກໃຈດຸໝັ່ນ, ຫ້າວຫັນ ແລະ ມີຄວາມສາມາດເຄື່ອນໄຫວເຮັດການຜະລິດກະສິກຳ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກິດຈະກຳອື່ນໆ.

5. ເປັນຄົນມີຄວາມຮັບຜິດຊອບສູງ ແລະ ສ້າງສັນຄວາມສາມັກຄີພາຍໃນກຸ່ມໄດ້ດີ.

ຈາກເງື່ອນໄຂຂ້າງເທິງໃນຕອນຕົ້ນທີ່ສ້າງຕັ້ງກອງທຶນມີສະມາຊິກຮັບເອົາກອງທຶນທັງໝົດ 20 ຄອບຄົວ ແລະ ປະຈຸບັນມີທັງໝົດ 25 ຄອບຄົວ.

ກ. <u>ໜ້າທີ່ຂອງສະມາຊິກ</u>

1. ປະຕິບັດຕາມຂໍ້ກຳນົດກົດລະບຽບຕ່າງໆຂອງກອງທຶນ.

2. ດຳເນີນການຜະລິດກະສິກຳດ້ວຍແຮງງານໃນຄອບຄົວຂອງຕົນເອງ.

3. ບົວລະບັດຮັກສາເບິ່ງແຍງພືດ ແລະ ສັດຢ່າງຈິງໃຈ.

4. ລາຍງານບັນຫາຕ່າງໆໃຫ້ແກ່ຄະນະບໍລິຫານງານຮູ້ເພື່ອຊອກຫາທາງແກ້ໄຂໄດ້ທັນ.

5. ໃຫ້ຄວາມຮ່ວມມືໃນກໍລະນີມີການສຳພາດຈາກນັກສຶກສາ ຫຼື ນັກວິຊາການ.

6. ຍອມຮັບເອົາຄຳແນະນຳຈາກວິຊາການ ແລະ ນຳໄປປະຕິບັດຢ່າງຈິງຈັງ.

7. ເຂົ້າຮ່ວມຝຶກອົບຮົມວິຊາການຕ່າງໆທີ່ກອງທຶນ ຫຼື ອົງການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງຈັດຕັ້ງຂື້ນ ເຊິ່ງພົວພັນເຖິງການຜະລິດກະສິກຳ, ຫັດຖະກຳ, ອຸດສາຫະກຳ, ບໍລິການ ແລະ ອື່ນໆ.

8. ສະມາຊິກຕ້ອງສະເໜີແຜນ, ລາຍຮັບ, ລາຍຈ່າຍ ແລະ ຄາດຄະເນຜົນໄດ້ຮັບກ່ຽວກັບການເຄື່ອນໄຫວການຜະລິດຕ່າງໆທີ່ໄດ້ຮັບຈາກກອງທຶນໃຫ້ທາງຄະນະບໍລິຫານງານຮັບຮູ້ເພື່ອໃຫ້ທາງຄະນະບໍລິຫານເກັບກຳເຮັດບົດສະຫຼຸບການເຄື່ອນໄຫວຂອງສະມາຊິກໄດ້.

9. ປະກອບສ່ວນດ້ານທຶນຮອນ, ແຮງງານ, ອຸປະກອນຕ່າງໆ ແລະ ປັດໄຈການຜະລິດທີ່ຈຳເປັນໃນກໍລະນີທີ່ສາມາດຫາໄດ້.

10. ສະມາຊິກທຸກຄົນທີ່ກູ້ຢືມຈາກກອງທຶນຕ້ອງສົ່ງຄືນເງິນກູ້ ແລະ ດອກເບ້ຍຕາມກຳນົດໄວ້ໃນສັນຍາເງິນກູ້.

ຈາກການສຳພາດຕົວຈິງເຫັນວ່າ ການປະຕິບັດໜ້າທີ່ຂອງສະມາຊິກຍັງບໍ່ໄດ້ດີເທົ່າທີ່ຄວນຍັງເຫັນໄດ້ສະມາຊິກກອງທຶນບາງຄອບຄົວຍັງຂາດການເອົາໃຈໃສ່ບົວລະບັດເບິ່ງແຍງພືດ ແລະ ສັດທີ່ໄດ້ຮັບຈາກກອງທຶນສະແດງອອກບ່ອນວ່າ ກອງທຶນໄມ້ໃຫ້ໝາກຂອງບາງຄອບຄົວສະມາຊິກໄດ້ຕາຍໝົດຍ້ອນຂາດການໄປທົດນ້ຳ, ແບ້ຂອງບາງຄອບຄົວສະມາຊິກແມ່ນໄດ້ຕາຍຍ້ອນ ລົດຕຳເພາະຜູກແບ້ໄວ້ແຄມທາງ (ພົບໃນສະມາຊິກກອງທຶນບ້ານດົງບັງ). ສະມາຊິກທຸກຄົນແມ່ນຍັງບໍ່ມີແຜນລາຍຮັບ, ລາຍຈ່າຍ ແລະ ຄາດຄະເນຜົນລາຍຮັບກ່ຽວກັບການເຄື່ອນໄຫວການຜະລິດຕ່າງໆທີ່ໄດ້ຮັບຈາກກອງທຶນໃຫ້ທາງຄະນະບໍລິຫານງານຮັບຮູ້ ເພື່ອໃຫ້ທາງຄະນະບໍລິຫານເກັບກຳເຮັດບົດສະຫຼຸບການເຄື່ອນໄຫວຂອງສະມາຊິກໄດ້.

### 4.1.6. <u>ໂຄງປະກອບການຈັດຕັ້ງກອງທຶນ</u>

ກ. <u>ຄະນະບໍລິຫານງານກອງທຶນ</u>

ຄະນະບໍລິຫານກອງທຶນປະກອບດ້ວຍ 5 ທ່ານ ເຊິ່ງຈະຖືກຄັດເລືອກໂດຍກອງປະຊຸມຂອງສະມາຊິກດ້ວຍສຽງສ່ວນຫຼາຍປະກອບມີ:

- ປະທານ 1 ທ່ານ
- ຮອງປະທານ 1 ທ່ານ
- ກຳມະການ (ບັນຊີການເງິນ) 2 ທ່ານ
- ກຳມະການ (ຄັງເງິນສົດ) 1 ທ່ານ

ຂ. <u>ຄຸນສົມບັດ ແລະ ເງື່ອນໄຂຄະນະບໍລິຫານກອງທຶນພັດທະນາກະສິກຳຂັ້ນບ້ານ</u>

1. ເປັນຜູ້ທີ່ຢູ່ອາໄສໃນບ້ານມາບໍ່ຕ່ຳກວ່າ 2 ປີ ແລະ ເປັນໜຶ່ງໃນສະມາຊິກໂຄງການ.

2. ມີສຸຂະພາບແຂງແຮງດີ, ບໍ່ຈຳແນກເພດ, ບໍ່ຈຳແນກອາຍຸ, ບໍ່ຈຳແນກຊົນເຜົ່າ ແລະ ມີອາຍຸແຕ່ 20 ປີເຖິງ 60 ປີ.

3. ມີນ້ຳໃຈຊື່ສັດບໍລິສຸດ, ມີຄຸນນະທຳ, ມີລະດັບການສຶກສາອ່ານອອກຂຽນເປັນມີຄວາມເສຍສະຫຼະຕໍ່ສ່ວນລວມ ແລະ ມີຄວາມເຊື່ອຖືເຫັນດີເຫັນພ້ອມຈາກມະຫາຊົນ ແລະ ສະມາຊິກເປັນສ່ວນໃຫຍ່.

4. ເປັນຜູ້ທີ່ເຊື່ອມຊຶມ ແລະ ເຂົ້າໃຈດີຕໍ່ບັນດາລະບຽບການຈັດຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາກະສິກຳຂັ້ນບ້ານເປັນຢ່າງດີ.

ຄ. <u>ໜ້າທີ່ລວມຂອງຄະນະບໍລິຫານກອງທຶນພັດທະນາກະສິກຳຂັ້ນບ້ານ</u>

1. ນຳພາຄົ້ນຄ້ວາເຜີຍແຜ່ ແລະ ຈັດຕັ້ງກິດລະບຽບຂອງກອງທຶນພັດທະນາກະສິກຳ.

2. ຄຸ້ມຄອງບໍລິຫານ ແລະ ຕິດຕາມກວດກາການຊໍາລະສະສາງດ້ານການເງິນຂອງກອງທຶນພັດທະນາກະສິກໍາ.

3. ນໍາພາສ້າງແຜນການເຄື່ອນໄຫວ ແລະ ສະຫຼຸບຖອດຖອນບົດຮຽນແຕ່ລະໄລຍະ.

4. ສ້າງເງື່ອນໄຂອໍານວຍຄວາມສະດວກທາງດ້ານສິນເຊື່ອໃຫ້ແກ່ການຜະລິດກະສິກໍາ, ຫັດຖະກໍາ ແລະ ການບໍລິການອື່ນໆ.

5. ວາງແຜນ ແລະ ຈັດຕັ້ງການຝຶກອົບຮົມດ້ານວິຊາການທີ່ຈໍາເປັນໃຫ້ປະຊາຊົນ.

6. ປຸກລະດົມຂົນຂວາຍແຫຼ່ງທຶນຈາກສະມາຊິກ, ບຸກຄົນ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດມາສະໜັບສະໜູນກອງທຶນໃຫ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນ.

7. ຮັບຜິດຊອບເອກະສານ, ຊັບສິນບັດກອງທຶນໃຫ້ສາມາດກວດສອບໄດ້ທຸກເວລາ.

8. ປະສານ ແລະ ຮ່ວມມືກັບພາກສ່ວນອື່ນໆ ເພື່ອດຶງດູດເອົາທຶນເຂົ້າມາຊຸກຍູ້ສົ່ງເສີມພັດທະນາກອງທຶນຂອງຕົນ.

9. ມີໜ້າທີ່ລາຍງານໃຫ້ແກ່ຄະນະຮັບຜິດຊອບຊີ້ນໍາກອງທຶນພັດທະນາກະສິກໍາຢ່າງເປັນປະຈໍາ ແລະ ສະມາຊິກພາຍໃນກຸ່ມກອງທຶນ.

ຈາກການສໍາພາດຄະນະບໍລິຫານກອງທຶນແຕ່ລະບ້ານເຫັນວ່າ ການປະຕິບັດໜ້າທີ່ຕົວຈິງຂອງຄະນະບໍລິຫານແມ່ນມີຫຼາຍສິ່ງທີ່ເຮັດໄດ້ ແລະ ຫຼາຍສິ່ງທີ່ເຮັດບໍ່ໄດ້ຄື:

➢ <u>ສິ່ງທີ່ເຮັດໄດ້ດີ</u>:

- ຄະນະບໍລິຫານກອງທຶນໄດ້ປະຕິບັດຕົນຕໍ່ໜ້າທີ່ລວມຂອງຄະນະບໍລິຫານກອງທຶນ ເຊິ່ງໄດ້ສະແດງອອກດັ່ງນີ້:

- ໄດ້ນໍາພາຄົ້ນຄວ້າເຜີຍແຜ່ ແລະ ຈັດຕັ້ງກົດລະບຽບກອງທຶນໃນເບື້ອງຕົ້ນ.

- ຮັບຜິດຊອບເອກະສານ ແລະ ຊັບສິນບັດຂອງກອງທຶນໃຫ້ສາມາດກວດສອບໄດ້ທຸກເວລາ

- ມີການລົງຕິດຕາມກວດກາສະມາຊິກໃນການລົງເຮັດກິດຈະກໍາ ແລະ ຄະນະບໍລິຫານແຕ່ລະຄົນ ແມ່ນໄດ້ປະຕິບັດໜ້າທີ່ຂອງໃຜມັນຕາມທີ່ໄດ້ຮັບການມອບໝາຍໃຫ້ (ພົບເຫັນໃນຄະນະບໍລິຫານທີ່ຢູ່ບ້ານເວີນແທ່ນ ແລະ ບ້ານທ່າຈໍາປາ).

- ມີການບັນທຶກຂໍ້ມູນຂອງສະມາຊິກ ແລະ ມີບົດສະຫຼຸບໃຫ້ເບິ່ງໃນເວລາສໍາພາດເກັບຂໍ້ມູນ (ພົບເຫັນໃນຄະນະບໍລິຫານງານຢູ່ບ້ານທ່າຈໍາປາ).

➢ <u>ສິ່ງທີ່ເຮັດຍັງບໍ່ທັນໄດ້</u>:

- ຍັງບໍ່ທັນເຂົ້າໃຈດີຕໍ່ບັນດາລະບຽບການຈັດຕັ້ງ ແລະ ຄຸ້ມຄອງກອງທຶນສະແດງອອກບ່ອນວ່າເວລາສະມາຊິກກອງທຶນບໍ່ມາສົ່ງທຶນຄືນຕາມເວລາທີ່ກໍານົດໄວ້ແຕ່ທາງຄະນະບໍລິຫານກອງທຶນບໍ່ໄດ້ປະຕິບັດຕາມກົດລະບຽບຍ້ອນວ່າປະທານ ຫຼື ຄະນະບໍລິຫານງານກໍ່ແມ່ນສະມາຊິກທີ່ຮັບເອົາກອງທຶນໄປ

ເຮັດກິດຈະກຳ ແລະ ບໍ່ໄດ້ສະຫຼຸບລາຍຈ່າຍທີ່ໄດ້ຈາກກອງທຶນເມື່ອຮອດມື້ກຳນົດສົ່ງຕົ້ນທຶນກໍ່ບໍ່ໄດ້ສົ່ງທຶນຄືນຕາມກຳນົດເລີຍເຮັດໃຫ້ບໍ່ເປັນແບບຢ່າງແກ່ສະມາຊິກຜູ້ອື່ນໆ ຊຶ່ງພົບເຫັນໃນຄະນະບໍລິຫານງານຢູ່ບ້ານດົງບັງ ແລະ ບ້ານເວີນແທ່ນ.

- ບໍ່ມີການປະສານງານລະຫວ່າງຄະນະບໍລິຫານເຫັນໄດ້ວ່າ: ໃນການບໍລິຫານມີພຽງແຕ່ປະທານເປັນຜູ້ເກັບກຳຂໍ້ມູນ ແລະ ເຮັດໜ້າທີ່ຜູ້ດຽວເພາະຄິດວ່າ: ກອງທຶນທີ່ໄດ້ຮັບນັ້ນເປັນກອງທຶນທີ່ນ້ອຍເຮັດໃຫ້ຄະນະບໍລິຫານຜູ້ອື່ນໆບໍ່ໄດ້ປະຕິບັດໜ້າທີ່ຂອງຕົນ (ພົບເຫັນຢູ່ໃນຄະນະບໍລິຫານກອງທຶນບ້ານດົງບັງ).

- ບໍ່ມີການນຳພາສ້າງແຜນການເຄື່ອນໄຫວ ແລະ ສະຫຼຸບຖອດຖອນບົດຮຽນແຕ່ລະໄລຍະເຫັນໄດ້ວ່າ: ບໍ່ມີການປະຊຸມຂອງຄະນະບໍລິຫານ ແລະ ສະມາຊິກຍ້ອນຂາດປະສົບການໃນການບໍລິຫານງານເຮັດໃຫ້ບໍ່ມີການຕັດສິນໃຈເດັດຂາດ (ຫຼັງຈາກຊ່ວງ ອ.ຈ ໂຄສະດາ ໄປຮຽນຕໍ່ທາງໂຄງການກໍ່ບໍ່ມີການລົງຕິດຕາມ) ແລະ ທາງຄະນະບໍລິຫານກໍ່ບໍ່ມີການຕິດຕໍ່ພົວພັນທາງໂຄງການ ເພາະລໍຖ້າທາງໂຄງການໄປແນະນຳໃຫ້ (ພົບເຫັນຢູ່ໃນຄະນະບໍລິຫານກອງທຶນບ້ານດົງບັງ ແລະ ບ້ານເວີນແທ່ນ).

- ການເກັບກຳຂໍ້ມູນຂອງສະມາຊິກກອງທຶນຍັງບໍ່ທັນທົ່ວເຖິງຍ້ອນວ່າ: ສະມາຊິກຂອງກອງທຶນບາງຄົນໄດ້ຍ້າຍໄປຢູ່ບ່ອນອື່ນ ໂດຍທີ່ບໍ່ມີການສົ່ງທຶນຄືນເຮັດໃຫ້ກອງທຶນນັ້ນເປັນທຶນສູນຫາຍ (ພົບເຫັນຢູ່ໃນຄະນະບໍລິຫານກອງທຶນບ້ານທ່າຈຳປາ).

#### 4.1.7. <u>ບັນຫາ ແລະ ຂໍ້ຫຍຸ້ງຍາກໃນການຄຸ້ມຄອງກອງທຶນຂອງຄະນະບໍລິຫານ</u>

ການເຮັດວຽກຂອງຄະນະບໍລິຫານກອງທຶນ ແມ່ນຍັງຂາດປະສົບການເຮັດໃຫ້ເກີດຄວາມຫຍຸ້ງຍາກບາງຄັ້ງເຮັດໃຫ້ລະບົບບັນຊີບໍ່ລະອຽດເນື່ອງຈາກທາງໂຄງການບໍ່ມີການຝຶກອົບຮົມກ່ຽວກັບການຄິດໄລ່ບັນຊີໃຫ້ໃນເບື້ອງຕົ້ນ ແລະ ກອງທຶນພັດທະນາກະສິກຳຂັ້ນບ້ານນີ້ແມ່ນເປັນກອງທຶນທຳອິດທີ່ບ້ານໄດ້ຮັບ ເຮັດໃຫ້ເປັນສິ່ງໃໝ່ສຳລັບຄະນະບໍລິຫານຍ້ອນຂາດປະສົບການໃນການຈັດການກອງທຶນເຊັ່ນ: ການຄິດໄລ່ດອກເບ້ຍຂອງສະມາຊິກ, ການຄິດໄລ່ກຳໄລແບ່ງປັນຜົນ, ການຈັດການຕໍ່ກອງທຶນສັດເມື່ອສັດຕາຍດ້ວຍພະຍາດ ຫຼື ອຸບັດຕິເຫດຄະນະບໍລິຫານກໍ່ຍັງບໍ່ສາມາດຕັດສິນໃຈເອງໄດ້ວ່າຈະໃຫ້ສະມາຊິກໃຊ້ແທນຄືນຫຼືບໍ່.

#### 4.1.8. <u>ກົດລະບຽບຂອງກອງທຶນພັດທະນາກະສິກຳຂັ້ນບ້ານ</u>

ກົດລະບຽບສະບັບນີ້ກຳນົດຂຶ້ນໂດຍອີງຕາມການຕົກລົງເປັນເອກະພາບຂອງຄະນະບໍລິຫານກອງທຶນ, ສະມາຊິກກອງທຶນ ແລະ ຄະນະບໍລິຫານໂຄງການ Telefood.

4.1.8.1. <u>ການສົ່ງຕົ້ນທຶນ ແລະ ກຳນົດສັນຍາການກູ້ຢືມ</u>

ການສົ່ງຕົ້ນທຶນແມ່ນອີງຕາມການກຳນົດສັນຍາການກູ້ຢືມ ແລະ ການສົ່ງຕົ້ນທຶນຄືນແມ່ນ 100% ຂອງການກູ້ຢືມທຸກໆກິດຈະກຳ ແລະ ສາມາດສົ່ງຕົ້ນທຶນກ່ອນກຳນົດ ຫຼື ຫຼັງລະດູການຜະ ລິດໄດ້.

ກ. ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການລ້ຽງສັດ

- ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການລ້ຽງປາດຸກ ແລະ ກົບກຳນົດ 12 ເດືອນ ຫຼື ສົ່ງກ່ອນກຳນົດໄດ້.

- ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການລ້ຽງປາ (ປານິນ, ປາໄນ, ປາປາກ) ກຳນົດ 1-2 ປີ ຫຼື ສົ່ງກ່ອນກຳນົດໄດ້.

- ໄລຍະການສົ່ງຕົ້ນທຶນຄືນຂອງກິດຈະກຳການລ້ຽງແບ້ກຳນົດ 12 ເດືອນ ຫຼື ສົ່ງກ່ອນກຳນົດໄດ້ (ຖ້າເປັນທຶນໃນລັກສະນະຮູບແບບແມ່ພັນແມ່ນຈະຕ້ອງສົ່ງແມ່ພັນຄືນໃຫ້ທາງກອງທຶນເພື່ອຈະໄດ້ໝູນຕໍ່ໃຫ້ຄອບຄົວອື່ນລ້ຽງຕໍ່ໄປ).

ຂ. ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການປູກພືດສວນ

- ໄລຍະການສົ່ງຕົ້ນທຶນຄືນຂອງກິດຈະກຳການປູກພືດຜັກເຊັ່ນ: (ຜັກຫອມປ້ອມ, ຜັກບົ່ວ, ຜັກສະຫຼັດ ) ແມ່ນຈະກຳນົດ 6 ເດືອນ ແລະ ສາມາດສົ່ງກ່ອນກຳນົດ ຫຼື ຫຼັງລະດູການໄດ້.

- ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການປູກພືດສວນເຊັ່ນ: (ເຂົ້າ, ສາລີ, ໝາກເຜັດ, ໝາກຖົ່ວ...) ກຳນົດ 12 ເດືອນ ຫຼື ສົ່ງກ່ອນກຳນົດໄດ້.

- ໄລຍະການສົ່ງຕົ້ນທຶນຂອງກິດຈະກຳການປູກພືດໄລຍະຍາວເຊັ່ນ: ໝາກມ່ວງ, ໝາກຂາມ, ລຳໄຍ, ໝາກກ້ຽງໃຫ່ຍ, ໝາກມັງກອນ ແລະ ອື່ນໆ. ກຳນົດ 3-5 ປີ ຫຼື ສົ່ງກ່ອນກຳນົດໄດ້.

ໃນການລົງສຳພາດຕົວຈິງເຫັນວ່າ ສະມາຊິກບາງຄອບຄົວຍັງປະຕິບັດຕາມກົດລະບຽບຂອງແຕ່ລະກິດຈະກຳບໍ່ທັນໄດ້ເຊັ່ນວ່າກິດຈະກຳການລ້ຽງແບ້, ການລ້ຽງກົບ, ການລ້ຽງປາໄນ, ປາປາກ, ການລ້ຽງປາດຸກ, ການປູກພືດຜັກ ຍ້ອນວ່າຄະນະບໍລິຫານແມ່ນບໍ່ມີການປະຊຸມ, ຕິດຕາມກິດຈະກຳທີ່ສະມາຊິກປະຕິບັດ ແລະ ຮອດມື້ກຳນົດສົ່ງກໍ່ບໍ່ເຕືອນໃຫ້ສະມາຊິກມາສົ່ງທຶນໃຫ້ແກ່ກອງທຶນ (ຄະນະບໍລິຫານບ້ານດົງບັງ ແລະ ບ້ານເວີນແທ່ນ), ສ່ວນກິດຈະການປູກພືດໄລຍະຍາວ 3-5 ປີແມ່ນຍັງບໍ່ຮອດກຳນົດສົ່ງ.

4.1.8.2. ການຄ້ຳປະກັນ

- ອີງຕາມການຕົກລົງຂອງກຸ່ມ ແລະ ການຕົກລົງຂອງຄະນະບໍລິຫານໂດຍຈະເບິ່ງຕາມຄວາມເໝາະສົມ.

- ຮູບແບບວັດຖຸສິ່ງຂອງທີ່ມີຄ່າເຊັ່ນ: ເງິນຄຳ, ທີ່ຢູ່ອາໃສ ແລະ ເນື້ອທີ່ທຳການຜະລິດທີ່ມີເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ.

4.1.8.3. ການກຳນົດອັດຕາດອກເບ້ຍ

ການກຳນົດອັດຕາດອກເບ້ຍ ແມ່ນຕົກລົງຕາມຄວາມເຫັນດີຂອງທາງໂຄງການຄະນະບໍລິຫານກອງທຶນ ແລະ ສະມາຊິກກອງທຶນ ໂດຍອີງໃສ່ຄວາມສາມາດຂອງສະມາຊິກ ແລະ ດອກເບ້ຍທີ່ສະມາຊິກໃຫ້ນັ້ນຍັງເປັນຄ່າໃຊ້ຈ່າຍໃນການບໍລິຫານງານພາຍໃນກອງທຶນເປັນສິ່ງທີ່ຈະເຮັດໃຫ້ກອງທຶນມີ

ຄວາມຢູ່ລອດ, ຂະຫຍາຍຕົວຕໍ່ໄປໄດ້ເພີ່ມຈຶ່ງກໍານົດອັດຕາດອກເບ້ຍ 2% ຕໍ່ເດືອນ, ສໍາລັບຄອບຄົວເປົ້າໝາຍທີ່ຢືມທຶນຄັ້ງທີ່ 2 ສ່ວນການກູ້ຢືມທຶນໃນຄັ້ງທີ່ 1 ແມ່ນບໍ່ໄດ້ເສຍດອກເບ້ຍໃຫ້ທາງກອງທຶນພັດທະນາກະສິກໍາຂັ້ນບ້ານ. ກົງກັນຂ້າມໃນກໍລະນີສະມາຊິກຢູ່ພາຍໃນບ້ານນອກຈາກຄອບຄົວເປົ້າໝາຍຫາກສະໝັກໃຈຝາກເງິນເພື່ອປະຫຍັດ (ທ້ອນທອມ) ສະເໜີກູ້ຢືມເງິນແມ່ນຈະຕ້ອງຄິດໄລ່ອັດຕາດອກເບ້ຍ 2% ຕໍ່ເດືອນໃຫ້ທາງກອງທຶນເຊັ່ນກັນແຕ່ການກູ້ຢືມສໍາລັບ 2 ເດືອນທໍາອິດແມ່ນບໍ່ມີດອກເບ້ຍ.

ພວກເຮົາເຫັນໄດ້ວ່າອັດຕາດອກເບ້ຍ 2% ແມ່ນເປັນອັດຕາດອກເບ້ຍທີ່ຕໍ່າກ່ວາການໄປກູ້ຢືມເງິນຈາກກອງທຶນປະເພດອື່ນ ແລະ ອັດຕາດອກເບ້ຍ 2% ແມ່ນເໝາະສົມເພາະກອງທຶນພັດທະນາກະສິກໍາຂັ້ນບ້ານນີ້ມີຈຸດປະສົງ ເພື່ອຊ່ວຍຊາວກະສິກອນຜູ້ທຸກຍາກຂາດເຂີນທຶນຮອນໃນການທໍາການຜະລິດ. ການເຮັດກິດຈະກໍາທາງການກະສິກໍາຂອງສະມາຊິກກອງທຶນສ່ວນຫຼາຍແມ່ນອີງໃສ່ທໍາມະຊາດເພາະບາງປີກໍ່ມີຝົນຕົກແຮງນໍ້າຖ້ວມ, ບາງປີມີພະຍາດສັດລະບາດເຮັດໃຫ້ຜົນຜະລິດບໍ່ແນ່ນອນ. ສະນັ້ນຜົນໄດ້ຮັບທີ່ຊາວກະສິກອນໄດ້ຈາກການຜະລິດນັ້ນນອກຈາກຈະສົ່ງທຶນຄືນໃຫ້ແກ່ກອງທຶນແລ້ວຍັງເປັນລາຍຮັບທີ່ຊາວກະສິກອນຈະເອົາໄປໃຊ້ເປັນຄ່າໃຊ້ຈ່າຍພາຍໃນຄອບຄົວ, ຖ້າອັດຕາດອກເບ້ຍສູງເກີນໄປກໍ່ຈະເປັນການຫຼຸດລາຍຮັບຂອງຊາວກະສິກອນລົງ. (ເບິ່ງຕາຕະລາງທີ 1).

**ຕາຕະລາງທີ 1.** ປະເພດການກູ້ຢືມກອງທຶນພັດທະນາກະສິກໍາຂັ້ນບ້ານ.

| ກິດຈະກໍາ | ໄລຍະການສົ່ງຕົ້ນທຶນ | ອັດຕາດອກເບ້ຍ/ເດືອນ |
|---|---|---|
| ລ້ຽງປາດຸກ, ລ້ຽງກົບ, ລ້ຽງແບ້ | 1 ປີ | 2% |
| ລ້ຽງປານິນ, ປາໄນ,... | 1-2 ປີ | 2% |
| ຫອມປ້ອມ, ຜັກ ບົ່ວ, ຜັກສະຫຼັດ... | 6 ເດືອນ | 2% |
| ປູກໝາກຖົ່ວ,... | 1 ປີ | 2% |
| ປູກໄມ້ໃຫ້ໝາກ | 3-5 ປີ | 2% |

4.1.8.4. <u>ນະໂຍບາຍຂອງຜູ້ທີ່ເປັນສະມາຊິກກອງທຶນ</u>

ນອກຈາກການໃຫ້ກູ້ຢືມເພື່ອທໍາການຜະລິດກະສິກໍາແລ້ວກອງທຶນຍັງໃຫ້ກູ້ຢືມເວລາທີ່ສະມາຊິກມີການເຈັບເປັນ ຫຼື ຂາດເຂີນ. ການກູ້ຢືມແກ້ໄຂຕອນເຈັບເປັນ ຫຼື ປິ່ນປົວພະຍາດ ແລະ ກູ້ຢືມໃຊ້ຈ່າຍພາຍໃນຄອບຄົວຍາມຂາດເຂີນໄລຍະສັ້ນ 1-2 ເດືອນແມ່ນທາງກອງທຶນຈະບໍ່ຄິດໄລ່ອັດຕາດອກເບ້ຍແຕ່ຕ້ອງໄດ້ສົ່ງຕົ້ນທຶນຕາມທີ່ກໍານົດໄວ້ນອກຈາກນັ້ນພາຍຫຼັງ 2 ເດືອນແມ່ນຈະໄດ້ປະຕິບັດຕາມລະບຽບອັດຕາດອກເບ້ຍໃນຂໍ້ (4.1.8.3).

4.1.8.5. <u>ມາດຕະການສໍາລັບການໃຊ້ແທນຄືນຊັກຊ້າ ແລະ ໃຊ້ແທນບໍ່ໄດ້</u>

- ບຸກຄົນໄດ້ທີ່ໃຊ້ແທນຄືນຊັກຊ້າໃນໄລຍະ 1 ເດືອນທາງຄະນະບໍລິຫານຈະຮ້ອງຜູ້ກ່ຽວມາຕັກເຕືອນຄັ້ງທີ 1.

- ບຸກຄົນໃດທີ່ໃຊ້ແທນຄືນຊັກຊ້າໃນໄລຍະ 1-2 ເດືອນພາຍຫຼັງການຕັກເຕືອນຄັ້ງທີ່ 1 ທາງຄະນະ ບໍລິຫານກອງທຶນຈະຮ້ອງຜູ້ກ່ຽວມາຕັກເຕືອນຄັ້ງທີ 2 ແລະ ເຮັດບົດບັນທຶກ.

- ບຸກຄົນໃດທີ່ໃຊ້ແທນຄືນຊັກຊ້າໃນໄລຍະ 2-5 ເດືອນພາຍຫຼັງຕັກເຕືອນຄັ້ງທີ່ 2 ທາງຄະນະບໍລິຫານຈະປຶກສາຫາລືໃນການຕັດສິນການທີ່ບໍ່ສາມາດໃຊ້ແທນຄືນໂດຍການປະເມີນສິ່ງມີຄ່າຄ້ຳປະກັນແລ້ວຄິດໄລ່ມູນຄ່າທັງໝົດ (ເງິນກູ້ + ດອກເບ້ຍ) ແລ້ວຕັດຮອນຕາມຄວາມເໝາະສົມ.

ພວກເຮົາເຫັນວ່າສະມາຊິກສ່ວນຫຼາຍແມ່ນຍັງສົ່ງທຶນຄືນໃຫ້ແກ່ກອງທຶນຊັກຊ້າຍ້ອນວ່າ ຄະນະບໍລິຫານແມ່ນບໍ່ໄດ້ປະຕິບັດຕາມກົດລະບຽບທີ່ວາງອອກ ຊຶ່ງສະແດງອອກບ່ອນວ່າຮອດກຳນົດສົ່ງແລ້ວແຕ່ຄະນະບໍລິຫານກໍ່ບໍ່ແຈ້ງສະມາຊິກ, ບໍ່ມີການປະຊຸມໂອ້ລົມຖາມສະມາຊິກໃຫ້ຮູ້ວ່າ ຮອດກຳນົດສົ່ງແລ້ວມີສະມາຊິກຜູ້ໃດສົ່ງໄດ້ ຫຼື ບໍ່ໄດ້ຍ້ອນຫຍັງ ແລະ ກາຍກຳນົດສົ່ງແລ້ວກໍ່ບໍ່ມີການຮຽກເອີ້ນສະມາຊິກມາຕັກເຕືອນ.

4.1.8.6. <u>ການແບ່ງປັນຜົນ</u>

ອີງຕາມການຕົກລົງເຫັນດີລະຫວ່າງ,ຜູ້ບໍລິຫານກອງທຶນ ແລະ ສະມາຊິກໄດ້ ເຮັດໃຫ້ມີການຕົກລົງແບ່ງປັນຜົນໄດ້ຮັບຂອງກອງທຶນຈາກການຝາກປະຢັດ ແລະ ກູ້ຢືມດັ່ງຕໍ່ໄປນີ້:

- ແບ່ງໃຫ້ຄະນະບໍລິຫານ 16%
- ແບ່ງໃຫ້ທຶນສຳຮອງ (ໃນຄັງ) 2%
- ສ່ວນທີ່ເຫຼືອຈະແບ່ງຕາມຫຸ້ນຂອງສະມາຊິກ

ຫຸ້ນຂອງສະມາຊິກແມ່ນໄດ້ຈາກການບວກຈຳນວນເງິນຝາກຂອງສະມາຊິກແຕ່ລະຄັ້ງ, ຜູ້ໃດມີເງິນຝາກຫຼາຍກ່ວາໝູ່ກໍ່ຈະມີຫຸ້ນຫຼາຍ. ໃນການແບ່ງຕາມຫຸ້ນແມ່ນເອົາດອກເບ້ຍທີ່ໄດ້ຈາກການຢືມເງິນຂອງສະມາຊິກທີ່ເຫຼືອຈາກການແບ່ງໃຫ້ຄະນະບໍລິຫານ 16% ແລະ ແບ່ງໃຫ້ທຶນສຳຮອງ (ໃນຄັງ) 2% ນັ້ນມາປັນໃຫ້ຕາມຫຸ້ນຂອງສະມາຊິກຜູ້ໃດມີຫຸ້ນຫຼາຍກໍ່ຈະໄດ້ເງິນປັນຜົນຫຼາຍ, ຜູ້ໃດມີຫຸ້ນໜ້ອຍກໍ່ໄດ້ເງິນປັນຜົນໜ້ອຍ.

ພວກເຮົາເຫັນວ່າ ກອງທຶນພັດທະນາກະສິກຳຂັ້ນບ້ານນີ້ຍັງບໍ່ມີການແບ່ງປັນຜົນໄດ້ຮັບເພາະກົດລະບຽບຂອງກອງທຶນ ແມ່ນຈະບໍ່ເກັບດອກເບ້ຍກູ້ຢືມໃນປີທຳອິດ ແລະ ປະເມີນຄັ້ງນີ້ແມ່ນປະເມີນໃນໄລຍະ 1 ປີທຳອິດຂອງກອງທຶນ.

## 4.2. ການປະຕິບັດກິດກຳໃນແຕ່ລະກອງທຶນ (ລ້ຽງສັດ ແລະ ປູກພືດ)

### 4.2.1. <u>ການລ້ຽງສັດ</u>

4.2.1.1. <u>ວິທີການລ້ຽງແບ້</u>

ສະມາຊິກກອງທຶນທີ່ລ້ຽງແບ້ແມ່ນຈັດຢູ່ໃນຄອບຄົວທີ່ມີຄວາມຫຼາກຫຼາຍທາງດ້ານການຄອບຄອງທີ່ດິນເຊັ່ນວ່າ: ມີທັງສະມາຊິກຜູ້ທີ່ເຊົ່າກິນທຳການຜະລິດຈົນເຖິງສະມາຊິກທີ່ມີດິນທຳການຜະລິດ 3-4 ເຮັກຕາ, ນຳໃຊ້ແຮງງານຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງ, ມີທັງຜູ້ທີ່ມີທຶນໜ້ອຍຫາຫຼາຍ (ໜ້ອຍກ່ວາ 3,000,000 ກີບຈົນເຖິງ 11,000,000 ກີບ) ແລະ ເປັນຄອບຄົວທີ່ມີອຸປະກອນທຳການຜະລິດໜ້ອຍ, ຫຼາຍເຊັ່ນວ່າ: ບາງຄອບຄົວມີແຕ່ພ້າ, ຈົກ, ສ້ຽມ, ບາງຄອບຄົວມີທັງພ້າ, ຈົກ, ສ້ຽມ, ຊ້ວານ ແລະ ລົດໄຖນາ ຍ້ອນວ່າຄອບຄົວສະມາຊິກດັ່ງກ່າວ ແມ່ນມີຄວາມຕ້ອງການຢາກໄດ້ກອງທຶນນີ້. ສະມາຊິກທີ່ຮັບເອົາກອງທຶນແບ້ໄປລ້ຽງທັງໝົດມີ 7 ຄອບຄົວ, ກອງທຶນແບ້ທີ່ທາງໂຄງການມອບໃຫ້ສະມາຊິກລ້ຽງເລີ່ມແຕ່ປີ 2008 ແມ່ນ ຄອບຄົວລະ 2 ໂຕມີ: ແບ້ແມ່ 1 ໂຕ, ແບ້ຜູ້ 1 ໂຕ. ອາຍຸຂອງແບ້ທີ່ຮັບເອົາຈາກທາງກອງທຶນ ໃນເບື້ອງຕົ້ນແມ່ນມີຄວາມແຕກຕ່າງກັນຕັ້ງແຕ່ອາຍຸປະມານ 3 ເດືອນຫາ 2 ປີ, ວິທີການລ້ຽງແບ້ ຂອງສະມາຊິກແມ່ນຄ້າຍຄືກັນຄືດັ່ງນີ້:

ກ. <u>ການສ້າງຄອກ</u>

ສະມາຊິກກອງທຶນລ້ຽງແບ້ແມ່ນບໍ່ໄດ້ສ້າງຄອກເຂົາເຈົ້າໃຫ້ແບ້ນອນຢູ່ກ້ອງເລົ້າເຂົ້າທີ່ຢູ່ໃກ້ກັບເຮືອນ.

ຂ. <u>ການໃຫ້ອາຫານ</u>

ການລ້ຽງແມ່ນລ້ຽງແບບປ່ອຍກິນຕາມທຳມະຊາດເຊັ່ນ: ເດີ່ນບ້ານ, ເດີນຫຍ້າ, ປ່າແຄມບ້ານບໍລິເວນຂອບເຂດຂອງບ້ານ ໂດຍປ່ອຍແບ້ໄປກິນຫຍ້າໃນຕອນເຊົ້າ ແລະ ຕອນສວຍສ່ວນຕອນແລງພວກມັນກໍ່ກັບມານອນນອນຢູ່ກ້ອງກ້ອງເລົ້າເຂົ້າ. ແຕ່ໃນຊ່ວງລະດູຝົນສະມາຊິກຜູ້ລ້ຽງແບ້ແມ່ນລ້ຽງແບບມັດເພາະເປັນໄລຍະທີ່ປະຊາຊົນພາຍໃນບ້ານຕົກກ້າດຳນາ, ດັ່ງນັ້ນຈຶ່ງຜູກລາມໄວ້ ແລະ ບາງຄັ້ງກໍ່ຕັດຕົ້ນໄມ້ເຊັ່ນ: ຕົ້ນກະຖິນ, ຕົ້ນກະທັນ...ມາໃຫ້ແບ້ກິນ, ທຸກໆມື້ຫຼຽວໄປເບິ່ງ 2 ຄັ້ງຕໍ່ມື້.

ຄ. <u>ການປ້ອງກັນ ແລະ ການປິ່ນປົວ</u>

ພະຍາດທີ່ມັກເກີດກັບແບ້ຂອງສະມາຊິກ ແມ່ນປາກເປື່ອຍລົງເລັບ, ທ້ອງເບັງ, ການປິ່ນປົວປາກເປື່ອຍລົງເລັບແມ່ນໃຊ້ໝາກເຟືອງ, ໝາກຂາມທາບໍລິເວນທີ່ເປັນພະຍາດ, ພະຍາດທ້ອງເບັງແມ່ນໄດ້ເອົານ້ຳແປັບຊີໃຫ້ແບ້ກິນ. ການສັກຢາກັນພະຍາດໃຫ້ແບ້ມີຄື: ສັກຢາກັນພະຍາດປາກເປື່ອຍລົງເລັບເປັນສ່ວນຫຼາຍສະເລ່ຍແລ້ວແມ່ນ 2 ຄັ້ງ/ປີ. ບາງຄອບຄົວແມ່ນບໍ່ໄດ້ສັກຢາປ້ອງກັນເວລາສັດເກີດພະຍາດຈຶ່ງສັກຢາໃຫ້ເຮັດໃຫ້ສັດຕາຍ.

ງ. <u>ເວລາທີ່ໃຊ້ໃນການລ້ຽງແບ້</u>

- ຫຼຽວໄປເບິ່ງແບ້ໃນຊ່ວງລະດູຝົນ 1 ຄົນ,3 ຄັ້ງ/ມື້, ປະມານຄັ້ງລະ 40 ນາທີ.
- ການຕັດຕົ້ນໄມ້ມາໃຫ້ຫຍ້າກິນແມ່ນ 1 ຄົນເຮັດ, ອາທິດໜຶ່ງຕໍ່ 3 ຄັ້ງ, ຄັ້ງລະ 1 ຊົ່ວໂມງ.
- ການສັກຢາແມ່ນ 2 ຄັ້ງ/ປີ, ຄັ້ງລະ 30 ນາທີ, 2 ຄົນຊ່ວຍກັນສັກ.

- ໄປຊອກແບ້ໃນເວລາບໍ່ເຫັນແບ້ 4 ຄັ້ງ/ປີ, ຄັ້ງລະ 3 ຊົ່ວໂມງ, 1 ຄົນໄປຊອກ.

ລວມເວລາທີ່ໃຊ້ໃນການລ້ຽງແບ້ທັງໝົດສະເລ່ຍແມ່ນ 21. ວັນງານ/ປີ.

ຈ. ການປະເມີນຜົນທາງດ້ານເສດຖະກິດຂອງການລ້ຽງແບ້

ການປະເມີນຜົນທາງດ້ານເສດຖະກິດຄັ້ງນີ້ແມ່ນປະເມີນຜົນຢູ່ເທິງພື້ນຖານຂອງການປະຕິບັດໂຄງການ 1 ປີ ເຊິ່ງເຮົາບໍ່ສາມາດຄິດໄລ່ຕໍ່ແມ່ພັນໄດ້. ສະນັ້ນ ເຮົາຈຶ່ງປະເມີນຈາກມູນຄ່າແບ້ທີ່ມີໃນປະຈຸບັນ + ໃຫ້ມູນຄ່າແບ້ທີ່ຂາຍ ຫຼື ກິນມາລົບໃຫ້ມູນຄ່າຕົ້ນທຶນທັງໝົດ. (ເບິ່ງຕາຕະ ລາງທີ 2)

**ຕາຕະລາງທີ 2**.ໄລ່ລຽງເສດຖະກິດການລ້ຽງແບ້ຕໍ່ 2 ໂຕ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ | ແບ້ທີ່ຂາຍ + ກິນ + ປະຈຸບັນ - ມູນຄ່າແບ້ທີ່ເອົາມາລ້ຽງເບື້ອງຕົ້ນ | 1,717,000 ກີບ |
| 2 | ສິ່ງນຳເຂົ້າ/ປີ | ສັກຢາກັນພະຍາດ | 20,000 ກີບ |
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | ໝາກກະລິງ + ເຊືອກ | 10,000 ກີບ |

- ມູນຄ່າສ່ວນເກີນຂອງການລ້ຽງແບ້ AV= ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= 1,717,000 ກີບ - 20,000 ກີບ - 10,000 ກີບ = 1,687,000 ກີບ/ປີ

- ການຂາຍແບ້ແມ່ນບໍ່ໄດ້ເສຍພາສີ ສະນັ້ນ AI=AV= 1,687,000 ກີບ/ປີ. ວັນງານທີ່ໃຊ້ລ້ຽງແບ້ທັງໝົດສະເລ່ຍປະມານ 21 ວັນງານ/ປີ.

- ລາຍຮັບສະເລ່ຍຕໍ່ວັນງານເທົ່າກັບ 80,333 ກີບ/ວັນງານ.

ຮູບທີ 1: ເສັ້ນສະແດງລາຍຮັບການລ້ຽງແບ້ຂອງສະມາຊິກ ກອງທຶນ




➢ <u>ບັນຫາຂອງການລ້ຽງແບ້ຂອງສະມາຊິກກອງທຶນມີບັນຫາຄື:</u> ແບ້ນ້ອຍເກີດໃໝ່ມັກເປັນພະຍາດຂີ້ແຫຼວ ແລະ ແບ້ໃຫຍ່ມັກເປັນພະຍາດປາກເປື່ອຍລົງເລັບໃນຊ່ວງລະດູຝົນ. ນອກຈາກນີ້ຍັງມີບັນຫາແບ້ເຂົ້າຮົ້ວສວນຂອງຜູ້ອື່ນເຮັດໃຫ້ເຈົ້າຂອງສວນບໍ່ພໍໃຈເກີດມີການຕຳນິກັນ. ປະຈຸບັນບາງຄອບຄົວແມ່ນຍັງສືບຕໍ່ລ້ຽງຢູ່, ບາງຄອບຄົວທີ່ສົ່ງທຶນຄືນແລ້ວແມ່ນບໍ່ໄດ້ສືບຕໍ່ລ້ຽງຍ້ອນວ່າຫຼັງຈາກສົ່ງທຶນຄືນແບ້ທີ່ຍັງເຫຼືອແມ່ນໄດ້ຂາຍເພື່ອເອົາທຶນໄປເຮັດໄປເຮັດກິດຈະກຳອື່ນ.

4.2.1.2. <u>ວິທີການລ້ຽງປາໄນ ແລະ ປາປາກ</u>

ສະມາຊິກກອງທຶນລ້ຽງປາໄນ, ປາປາກແມ່ນຈັດຢູ່ໃນຄອບຄົວທີ່ມີດິນຫຼາຍ 3 ຫາ 4 ເຮັກຕາ, ທຶນຫຼາຍປະມານ 7,000,000 ກີບຫາ 11,000,000 ກີບ, ໃຊ້ແຮງງານ ຄອບຄົວ ແລະ ແຮງງານຈ້າງ, ອຸປະກອນການຜະລິດຫຼາຍເຊັ່ນ: ພ້າ, ຈົກ, ສຽມ, ຊ້ວານ ແລະ ລົດໄຖນາ. ຍ້ອນຄອບຄົວສະມາຊິກດັ່ງກ່າວແມ່ນມີຄວາມຕ້ອງການຢາກໄດ້ກອງທຶນນີ້ ແລະ ມີໜອງປາມາກ່ອນແລ້ວຈຶ່ງຢາກໄດ້ກອງທຶນນີ້. ສະມາຊິກທີ່ເອົາກອງທຶນລ້ຽງປາແມ່ນເລີ່ມລ້ຽງແຕ່ປີ 2008, ມີທັງໝົດ 2 ຄອບຄົວ, ປາທີ່ທາງໂຄງການມອບໃຫ້ ແມ່ນໄດ້ມອບລູກປານ້ອຍໃຫ້ສະມາຊິກຄອບຄົວລະ 3,200 ໂຕ. ວິທີການລ້ຽງປາຂອງສະມາຊິກແມ່ນຄ້າຍຄືກັນດັ່ງນີ້:

ກ. <u>ການສ້າງໜອງປາ</u>

ສະມາຊິກກອງທຶນແມ່ນໄດ້ລ້ຽງປາໃສ່ໜອງປາເກົ່າທີ່ມີຢູ່ແລ້ວ, ເນື້ອທີ່ໜອງປາມີປະມານ 20 m x 40 m, ໜອງປາແມ່ນຢູ່ໄກຈາກເຮືອນປະມານ 50 m. ໜອງປາມີການລ້ອມຮົ້ວແຕ່ກ່ອນໜ້າທີ່ເອົາກອງທຶນມາ.

ຂ. <u>ການໃຫ້ອາຫານ</u>

ການລ້ຽງປາຂອງສະມາຊິກແມ່ນລ້ຽງ ໂດຍການເອົາຮຳ, ປວກ ແລະ ເສດອາຫານຈາກງານບຸນຕ່າງໆພາຍໃນບ້ານໄປຫ່ວານໃຫ້ປາກິນ ພ້ອມກັນນັ້ນເພິ່ນຍັງໄດ້ເຮັດຄອກເປັດໃສ່ເທິງໜອງປາເພື່ອໃຫ້

ສິ່ງເສດເຫຼືອຈາກເປັດຕົກລົງມາເປັນອາຫານປາ. ນອກຈາກນັ້ນເພິ່ນໄດ້ເອົາເປົາຂີ້ໄກ່ໂຍນໄວ້ໃນໜອງ ເພື່ອໃຫ້ເກີດເປັນເທົາສີຂຽວ, ມີໄຂແດງເປັນອາຫານໃຫ້ປາ.

ຄ. <u>ເວລາທີ່ໃຊ້ໃນການລ້ຽງປາ</u>

- ໄປຊື້ຮຳ 1 ຄົນໄປຊື້, 2 ຄັ້ງຕໍ່ເດືອນ, 20 ນາທີ/ຄັ້ງ.
- ເອົາເສດອາຫານຈາກງານບຸນຕ່າງໆ 8 ຄັ້ງ/ປີ, ຄັ້ງລະ 1 ຊົ່ວໂມງມີ 1 ຄົນໄປເອົາ.
- ເອົາປວກມາໃຫ້ປາປະມານ 5 ຄັ້ງ/ປີ, ຄັ້ງລະ 30 ນາທີມີ 1 ຄົນໄປເອົາ.
- ໄປຊື້ຂີ້ໄກ່ມາໃສ່ໜອງ 2 ຄັ້ງ/ປີ, ຄັ້ງລະ 30 ນາທີມີ 1 ຄົນໄປຊື້.
- ເອົາອາຫານເກືອປາສະເລ່ຍອາທິດ ໜຶ່ງ3ຄັ້ງ, ຄັ້ງລະ 30 ນາທີມີ 1 ຄົນເກືອ.

ລວມວັນງານທັງໝົດປະມານ 11 ວັນງານ/ປີ.

ງ. <u>ການປະເມີນຜົນທາງດ້ານເສດຖະກິດຂອງການລ້ຽງປາ</u>

ການປະເມີນຜົນທາງດ້ານເສດຖະກິດຄັ້ງນີ້ແມ່ນປະເມີນຜົນຢູ່ເທິງພື້ນຖານຂອງການປະຕິບັດ ໂຄງການ 1 ປີ. ສະນັ້ນ ເຮົາຈຶ່ງປະເມີນຈາກມູນຄ່າປາທີ່ມີໃນປະຈຸບັນ + ໃຫ້ ມູນຄ່າປາທີ່ຂາຍ ຫຼື ກິນມາ ລົບໃຫ້ມູນຄ່າຕົ້ນທຶນທັງໝົດ. (ເບິ່ງຕາຕະລາງທີ 3).

**ຕາຕະລາງທີ 3**. ໄລ່ລຽງເສດຖະກິດການລ້ຽງປານິນ, ປາປາກ ຈຳນວນ 3,200 ໂຕ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ | ປາທີ່ຂາຍ + ກິນ + ໃຫ້ພີ່ນ້ອງ + ປະຈຸບັນ - ມູນຄ່າປາທີ່ເອົາມາໃນເບື້ອງຕົ້ນ | 1,270,000 ກີບ |
| 2 | ສິ່ງນຳເຂົ້າ/ປີ | ຮຳ + ເສດອາຫານ + ເປົາຂີ້ໄກ່ | 385,000 ກີບ |
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | | 0 |

- ມູນຄ່າສ່ວນເກີນຂອງການລ້ຽງປາ AV= ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= 1,270,000 ກີບ - 385,000 ກີບ - 0 ກີບ = 885,000 ກີບ/ປີ

- AI= 885,000 ກີບ - 4,000 ກີບ (ພາສີດິນ) = 881,000 ກີບ ວັນງານທີ່ໃຊ້ລ້ຽງປາສະເລ່ຍປະມານ 11 ວັນງານ/ປີ.

- ລາຍຮັບສະເລ່ຍຕໍ່ວັນງານເທົ່າກັບ 80,000 ກີບ/ວັນງານ.

ຮູບທີ 2: ເສັ້ນສະແດງລາຍຮັບການລ້ຽງປາຂອງສະມາຊິກ ກອງທຶນ




➢ <u>ບັນຫາການລ້ຽງປາຂອງສະມາຊິກກອງທຶນມີຄື</u>: ມີຄົນມາລັກເອົາໄຟຟ້າມາຊ໋ອດເອົາປາ. ປະຈຸບັນສະມາຊິກກອງທຶນຍັງສືບຕໍ່ລ້ຽງຢູ່.

4.2.1.3. <u>ວິທີການລ້ຽງປາດຸກ</u>

ສະມາຊິກກອງທຶນລ້ຽງປາດຸກ ແມ່ນຈັດຢູ່ໃນຄອບຄົວທີ່ມີດິນຫຼາຍ 3 ຫາ 4 ເຮັກຕາ, ທຶນຫຼາຍປະມານ 7,000,000 ກີບຫາ 11,000,000 ກີບ, ໃຊ້ແຮງງານຄອບຄົວ ແລະ ແຮງງານຈ້າງ, ອຸປະກອນການຜະລິດຫຼາຍເຊັ່ນ: ພ້າ, ຈົກ, ສຽມ, ຊ້ວານ ແລະ ລົດໄຖນາ. ຍ້ອນຄອບຄົວສະມາຊິກດັ່ງກ່າວແມ່ນຢາກທົດລອງລ້ຽງປາດຸກ. ສະມາຊິກທີ່ຮັບເອົາກອງທຶນລ້ຽງປາດຸກແມ່ນ ເລີ່ມລ້ຽງແຕ່ປີ 2008 ມີທັງໝົດ 2 ຄອບຄົວ, ໂຄງການໄດ້ມອບລູກປາດຸກນ້ອຍໃຫ້ສະມາຊິກຄອບຄົວລະ 450 ໂຕ. ວິທີການລ້ຽງປາດຸກຂອງສະມາຊິກແມ່ນຄ້າຍຄືກັນດັ່ງນີ້:

ກ. <u>ວິທີການສ້າງອ່າງລ້ຽງປາດຸກ</u>

ອຸປະກອນການສ້າງອ່າງແມ່ນທາງໂຄງການຊື້ໃຫ້ທຸກຢ່າງ ແລະ ຊ່ວຍສ້າງອ່າງ. ອ່າງລ້ຽງປາດຸກແມ່ນເຮັດດ້ວຍດິນບ໊ອກກໍ່ດ້ວຍຊີມັງຂະໜາດຂອງອ່າງແມ່ນກ້ວາງປະມານ 1 m, ລວງຍາວ 4 m, ລວງສູງ 1 m.

ຂ. <u>ການໃຫ້ອາຫານປາດຸກ</u>

ອາຫານທີ່ສະມາຊິກກອງທຶນໄດ້ເອົາໃຫ້ປາດຸກກິນແມ່ນອາຫານສຳເລັດຮູບ, ບາງຄັ້ງຊາວກະສິກອນກໍ່ໄປເກັບຂີ້ກະເດືອນມາໃຫ້ປາດຸກກິນ. ການໃຫ້ອາຫານແມ່ນ 3 ຄັ້ງຕໍ່ມື້ຄື: ເຊົ້າ, ສວາຍ ແລະ ແລງ.

ຄ. <u>ການອະນາໄມອ່າງລ້ຽງປາດຸກ</u>

ການອະນາໄມແມ່ນອາທິດລະ 1 ຄັ້ງ ຫຼື ອີງໃສ່ກິ່ນຂອງນ້ຳໃນອ່າງຖ້າມີກິ່ນເໝັນກໍ່ຈະປ່ຽນນ້ຳໃນອ່າງໃໝ່.

ງ. <u>ເວລາທີ່ໃຊ້ໃນການລ້ຽງປາດຸກ</u>

- ການສ້າງອ່າງ 4 ຄົນໃຊ້ເວລາ 1 ມື້ແລ້ວ.

- ໄປຫາຂີ້ກະເດືອນມາໃຫ້ປາກິນ 3 ຄັ້ງ, ຜູ້ດຽວເກັບໃຊ້ເວລາ 1 ຊົ່ວໂມງຕໍ່ຄັ້ງ.

- ການອະນາໄມອ່າງອາທິດລະຄັ້ງ, ຄັ້ງລະ 40 ນາທີ, 1 ຄົນອະນາໄມ.

- ການໃຫ້ອາຫານມື້ລະ 3 ຄັ້ງ, ຄັ້ງລະ 30 ນາທີ , ໜຶ່ງຄົນໃຫ້ອາຫານ.

ລວມວັນງານທີ່ໃຊ້ລ້ຽງປາດຸກຕໍ່ 1 ຊຸດມີປະມານ 22 ວັນງານ/1ຊຸດ, ເທົ່າກັບ 22 ວັນງານ/ປີ.

ຈ. <u>ປະເມີນຜົນທາງດ້ານເສດຖະກິດຂອງການລ້ຽງປາດຸກ</u>

ການປະເມີນຜົນທາງດ້ານເສດຖະກິດຄັ້ງນີ້ແມ່ນປະເມີນຜົນຢູ່ເທິງພື້ນຖານຂອງການລ້ຽງປາດຸກຂອງສະມາຊິກໃນ 1 ຊຸດ, ຍ້ອນສະມາຊິກກອງທຶນລ້ຽງໄດ້ 2 ເດືອນນ້ຳກໍ່ເກີດຖ້ວມເຮັດໃຫ້ຜົນຜະລິດເສຍຫາຍ ແລະ ເພິ່ນກໍ່ບໍ່ໄດ້ສືບຕໍ່ລ້ຽງອີກ. ສະນັ້ນ ເຮົາຈຶ່ງປະເມີນຈາກມູນຄ່າປາດຸກທີ່ຂາຍ ຫຼື ກິນມາລົບໃຫ້ມູນຄ່າຕົ້ນທຶນທັງໝົດ. (ເບິ່ງຕາຕະລາງທີ 4)

**ຕາຕະລາງທີ 4.** ໄລ່ລຽງເສດຖະກິດການລ້ຽງປາດຸກຂອງສະມາຊິກກອງທຶນຕໍ່ 450 ໂຕ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ/ປີ | ປາດຸກທີ່ຂາຍ + ກິນ + ໃຫ້ພີ່ນ້ອງ - ມູນຄ່າກົບທີ່ເອົາມາເບື້ອງຕົ້ນ | 335,000 ກີບ |
| 2 | ສິ່ງນຳເຂົ້າ/ປີ | ທົວອາຫານ + ຂີ້ກະເດືອນ | 254,000 ກີບ |
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | ອ່າງລ້ຽງປາດຸກ | 80,000 ກີບ |

- ມູນຄ່າສ່ວນເກີນຂອງການລ້ຽງປາດຸກ AV= ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= 335,000 ກີບ - 254,000 ກີບ - 80,000 ກີບ = 1,000 ກີບ/1 ຊຸດ/ປີ

- ເນື່ອງຈາກວ່າການລ້ຽງປາດຸກບໍ່ໄດ້ເສຍພາສີ ສະນັ້ນ AI=AV= 1,000 ກີບ/1ຊຸດ/ປີ

ຮູບທີ 3: ເສັ້ນສະແດງລາຍຮັບການລ້ຽງປາດຸກຂອງສະມາຊິກ ກອງທຶນ




➢ ບັນຫາການລ້ຽງປາດຸກຂອງສະມາຊິກມີຄື: ປາດຸກນ້ອຍຕາຍຈຳນວນໜຶ່ງໃນໄລຍະທີ່ເອົາປາມາລ້ຽງທຳອິດຍ້ອນ: ອ່າງລ້ຽງປາເປັນອ່າງກໍ່ໃໝ່ເຮັດໃຫ້ປານ້ອຍບໍ່ລື້ງອ່າງ ແລະ ການລ້ຽງປາໃນຊ່ວງນັ້ນແມ່ນຊ່ວງລະດູຝົນເກີດຝົນຕົກໜັກເຮັດໃຫ້ນ້ຳຖ້ວມບ້ານເຮີນແທ່ນແລ້ວຖ້ວມອ່າງລ້ຽງປາດຸກຂອງສະມາຊິກເກີດຄວາມເສຍຫາຍ.

4.2.1.4. <u>ວິທີການລ້ຽງກົບ</u>

ສະມາຊິກກອງທຶນລ້ຽງກົບ ແມ່ນຈັດຢູ່ໃນຄອບຄົວທີ່ມີຄວາມຫຼາກຫຼາຍທາງດ້ານການຄອບຄອງທີ່ດິນເຊັ່ນວ່າ: ມີທັງສະມາຊິກຜູ້ທີ່ເຊົ່າກິນທຳການຜະລິດຈົນເຖິງສະມາຊິກທີ່ມີດິນທຳການຜະລິດ 3-4 ເຮັກຕາ, ນຳໃຊ້ແຮງງານຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງ, ມີທັງຜູ້ທີ່ມີທຶນໜ້ອຍຫາຫຼາຍ (ໜ້ອຍກ່ວາ 3,000,000 ກີບ ຈົນເຖິງ 11,000,000 ກີບ) ແລະ ເປັນຄອບຄົວທີ່ມີອຸປະກອນທຳການຜະລິດໜ້ອຍ, ຫຼາຍເຊັ່ນວ່າ: ບາງຄອບຄົວມີແຕ່ພ້າ, ຈົກ, ສ້ຽມ, ບາງຄອບຄົວມີທັງພ້າ, ຈົກ, ສ້ຽມ, ຊ້ວານ ແລະ ລົດໄຖນາ ຍ້ອນຄອບຄົວສະມາຊິກດັ່ງກ່າວແມ່ນຢາກທົດລອງລ້ຽງ. ສະມາຊິກທີ່ຮັບເອົາກອງທຶນລ້ຽງກົບມີທັງໝົດ 3 ຄອບຄົວ, ກອງທຶນກົບທີ່ທາງໂຄງການມອບໃຫ້ແມ່ນໄດ້ມອບລູກກົບນ້ອຍໃຫ້ສະມາຊິກຄອບຄົວລະ 400 ໂຕ. ວິທີການລ້ຽງກົບຂອງສະມາຊິກແມ່ນຄ້າຍຄືກັນດັ່ງນີ້:

ກ. <u>ວິທີການສ້າງອ່າງລ້ຽງກົບ</u>

ອຸປະກອນການສ້າງອ່າງແມ່ນທາງໂຄງການຊື້ໃຫ້ທຸກຢ່າງ ແລະ ຊ່ວຍສ້າງອ່າງ. ອ່າງລ້ຽງກົບແມ່ນເຮັດດ້ວຍດິນບ໋ອກກໍ່ດ້ວຍຊີມັງຂະໜາດຂອງອ່າງແມ່ນກ້ວາງ 3 m, ລວງຍາວ 3 m, ລວງສູງ 1 m ແລະ ເພິ່ນໄດ້ເອົາໜ່າງສີຟ້າປົກເທິງເພື່ອບໍ່ໃຫ້ກົບເຕັ້ນອອກ.

ຂ. <u>ການໃຫ້ອາຫານກົບ</u>

ການໃຫ້ອາຫານກົບສະມາຊິກແມ່ນໄດ້ລ້ຽງໂດຍເອົາອາຫານສຳເລັດຮູບໃຫ້ກິນມື້ 1 ຕໍ່ 3 ຄັ້ງຄື: ເຊົ້າ, ສວາຍ ແລະ ແລງ.

ຄ. <u>ການອະນາໄມອ່າງລ້ຽງກົບ</u>

ການອະນາໄມແມ່ນອາທິດລະ 1 ຄັ້ງ ຫຼື ອີງໃສ່ກິ່ນຂອງນ້ຳໃນອ່າງຖ້າມີກິ່ນເໝັນກໍ່ຈະປ່ຽນນ້ຳໃນອ່າງໃໝ່.

ງ. <u>ເວລາທີ່ໃຊ້ໃນການລ້ຽງກົບ</u>

- ການສ້າງອ່າງແມ່ນ 3 ຄົນເຮັດ, ໃຊ້ເວລາ 1 ມື້ແລ້ວ.

- ການໃຫ້ອາຫານແມ່ນ 3 ຄັ້ງຕໍ່ມື້, ຄັ້ງ 1 ຕໍ່ 15 ນາທີ, 1 ຄົນໃຫ້ອາຫານ.

- ໄປຊື້ຫົວອາຫານ 3 ຄັ້ງຕໍ່ການລ້ຽງກົບ 1 ຊຸດ, ຄັ້ງລະ 30 ນາທີ, 1 ຄົນໄປຊື້.

- ການອະນາໄມ 1 ຄັ້ງຕໍ່ອາທິດ, ໃຊ້ເວລາ 50 ນາທີຕໍ່ຄັ້ງ, ຕໍ່ການລ້ຽງກົບຊຸດ 1 ແລະ ໃຊ້ 1 ຄົນອະນາໄມ.

ລວມວັນງານທັງໝົດຂອງການລ້ຽງກົບຕໍ່ຊຸດ 1 ປະມານ 13 ວັນງານ/ປີ ເພາະວ່າປີໜຶ່ງສະມາຊິກລ້ຽງພຽງແຕ່ຊຸດດຽວ.

ຈ. <u>ປະເມີນຜົນທາງດ້ານເສດຖະກິດຂອງການລ້ຽງກົບ</u>

ການປະເມີນຜົນທາງດ້ານເສດຖະກິດຄັ້ງນີ້ແມ່ນປະເມີນຜົນຢູ່ເທິງພື້ນຖານຂອງການລ້ຽງກົບຂອງສະມາຊິກໃນ 1 ຊຸດ, ຍ້ອນສະມາຊິກກອງທຶນລ້ຽງແລ້ວໄປຂາຍຢູ່ຕະຫຼາດແລ້ວບໍ່ໄດ້ຂາຍສະມາຊິກເລີຍເຊົາລ້ຽງ. ສະນັ້ນ ເຮົາຈຶ່ງປະເມີນຈາກມູນຄ່າກົບທີ່ຂາຍ ຫຼື ກິນມາລົບໃຫ້ມູນຄ່າຕົ້ນທຶນທັງໝົດ. (ເບິ່ງຕາຕະລາງທີ 5).

**ຕາຕະລາງທີ 5**. ໄລ່ລຽງເສດຖະກິດການລ້ຽງກົບຂອງຄອບຄົວສະມາຊິກກອງທຶນ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ/1ຊຸດ | ກົບທີ່ຂາຍ + ກິນ + ໃຫ້ພີ່ນ້ອງ - ມູນຄ່າລູກກົບທີ່ເອົາມາໃນເບື້ອງຕົ້ນ | 278,000 ກີບ |
| 2 | ສິ່ງນຳເຂົ້າ/1 ຊຸດ | ຫົວອາຫານ | 320,000 ກີບ |
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | ອ່າງລ້ຽງກົບ, ໜ່າງສີຟ້າ | 49,000 ກີບ |

- ມູນຄ່າສ່ວນເກີນຂອງການລ້ຽງກົບ AV= ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= 278,000 ກີບ - 320,000 ກີບ - 49,000 ກີບ = -91,000 ກີບ/1 ຊຸດ/ປີ

- ເນື່ອງຈາກວ່າການລ້ຽງກົບບໍ່ໄດ້ເສຍພາສີ ສະນັ້ນ AI = AV = -91,000 ກີບ/1ປີ (ຊາວກະສິກອນລ້ຽງພຽງແຕ່ 1 ຊຸດຕໍ່ປີ).

ຮູບທີ 4: ເສັ້ນສະແດງລາຍຮັບຈາກການລ້ຽງກົບຂອງສະມາຊິກ ກອງທຶນ




➢ ບັນຫາການລ້ຽງກົບຂອງສະມາຊິກມີຄື: ໃນໄລຍະທີ່ເອົາກົບນ້ອຍມາໃໝ່ກົບນ້ອຍມັກຕາຍເພາະບໍ່ລຶ້ງອ່າງ, ເມື່ອກົບໃຫຍ່ຂຶ້ນມາເອົາໄປຂາຍຢູ່ຕະຫຼາດກໍ່ບໍ່ໄດ້ຂາຍເລີຍເອົາກົບມາກິນເປັນສ່ວນຫຼາຍ. ປະຈຸບັນສະມາຊິກກອງທຶນແມ່ນບໍ່ໄດ້ສືບຕໍ່ລ້ຽງຍ້ອນມີບັນຫາທີ່ກ່າວມາຂ້າງເທິງ.

### 4.2.2. <u>**ການປູກພືດ**</u>

#### 4.2.2.1. <u>ການປູກພືດຜັກລະດູຝົນ</u>

ສະມາຊິກກອງທຶນປູກຜັກລະດູຝົນແມ່ນຈັດຢູ່ໃນຄອບຄົວທີ່ມີດິນປານກາງມີເນື້ອທີ່ດິນສະເລ່ຍປະມານ 1 ຫາ 2 ເຮັກຕາ, ທຶນສະເລ່ຍປະມານ 3,000,000 ກີບຫາ 4,800,000 ກີບ, ໃຊ້ແຮງງານຄອບຄົວເປັນສ່ວນໃຫ່ຍຍ້ອນເຂົາເຈົ້າມີເງື່ອນໄຂໃນການທຳການຜະລິດ, ສະມາຊິກຜູ້ທີ່ເອົາກອງທຶນປູກພືດຜັກລະດູຝົນແມ່ນເລີ່ມປູກຜັກ ປີ 2008 ມີທັງໝົດ 1 ຄອບຄົວ, ກອງທຶນປູກຜັກລະດູຝົນທີ່ທາງໂຄງການມອບໃຫ້ແມ່ນມີ: ແນວພັນຜັກສະຫຼັດ 5 ແກ້ວ, ຜັກບົ່ວ 10 ກິໂລ, ຫອມປ້ອມ 6 ກິໂລ ແລະ ມີຜ້າຢາງດຳ 4 ກໍ້, ສະມາຊິກກອງທຶນໄດ້ປະຕິບັດກິດຈະກຳຄືດັ່ງນີ້:

ກ.<u>ວິທີການກຽມດິນເຮັດໜານຜັກ</u>

ການປູກພືດລະດູຝົນສະມາຊິກຈະເລີ່ມໃນຊ່ວງເດືອນ 7 ຫາເດືອນ 9 ເພິ່ນໄດ້ມີການກຽມດິນໂດຍການຂຸດດິນ, ປີ້ນດິນຕາກໄວ້ 1 ອາທິດ, ຫຼັງຈາກນັ້ນກໍ່ແປງດິນເຮັດເປັນໜານຍາວປະມານ 100 ແມັດ, ກວ້າງ 2 ແມັດ, ສູງຈາກໜ້າດິນປະມານ 20 ຊັງຕີແມັດ. ການສ້າງໜານແມ່ນມີການທຸບດິນໃຫ້ມຸ່ນເອົາຝຸ່ນຄອກມາປະສົມເຮັດເປັນໜານ, ໜານຜັກຂອງລາວແມ່ນມີ 4 ໜານໃນນັ້ນໜານທີ່ໜຶ່ງລາວໄດ້ຫວ່ານຫອມປ້ອມໃສ່, ໜານທີ່ສອງລາວໄດ້ປູກຜັກບົ່ວໃສ່, ໜານທີ່ສາມ ແລະ ສີ່ແມ່ນເອົາເບ້ຍຜັກສະຫຼັດທີ່ກ້າໄວ້ມາປົງໃສ່.

ຂ.<u>ການບົວລະບັດຮັກສາ</u>

ພາຍຫຼັງປູກແລ້ວຖ້າຊ່ວງໃດຝົນບໍ່ຕົກສະມາຊິກກໍ່ຈະໄປຫົດນ້ຳທຸກເຊົ້າ, ແລງ ເມື່ອປູກໄດ້ປະມານໜຶ່ງອາທິດສະມາຊິກກໍ່ຈະເອົາຝຸ່ນຄອກມາໃສ່ໃນຊ່ວງນັ້ນແມ່ນລະດູຝົນສະມາຊິກບໍ່ຄ່ອຍຈະໄດ້ຫົດນ້ຳມີແຕ່ທຽວໄປເສຍຫຍ້າ, ພວນດິນ ແລະ ໃສ່ຝຸ່ນ.

ຄ. <u>ເວລາທີ່ໃຊ້ໃນການປູກຜັກລະດູຝົນ</u>

- ການກຽມດິນປັ້ນ 2 ຄົນ 3 ມື້.
- ການແປງໜານ 3 ຄົນ 3 ມື້.
- ຫວ່ານແນວພັນ 2 ຄົນ ໃຊ້ເວລາ 1 ຊົ່ວໂມງ.
- ບົ່ງຜັກ 3 ຄົນ,ໃຊ້ເວລາ 5 ຊົ່ວໂມງ.
- ໃສ່ຝຸ່ນ 2 ຄັ້ງ, ຄັ້ງລະ 1 ຊົ່ວໂມງ 2 ຄົນ/ຄັ້ງ.
- ພວນດິນ 1 ອາທິດຕໍ່ 2 ຄັ້ງ, ຄັ້ງລະ 2 ຊົ່ວໂມງ, 2 ຄົນເຮັດ.
- ຫົດນ້ຳປະມານ 4 ຄັ້ງ, 2 ຄົນເຮັດ, ຄັ້ງລະ 1 ຊົ່ວໂມງ.
- ເສຍຫຍ້າ 2 ຄັ້ງ, ຄັ້ງລະ 1 ຊົ່ວໂມງ ແລະ 2 ຄົນເຮັດ.
- ເອົາຜ້າດາງດຳປົກ 1 ມື້ ແລະ 3 ຄົນເຮັດ.

ລວມວັນງານທີ່ໃຊ້ໃນການປູກຜັກທັງໝົດປະມານ 24 ວັນງານ/ປີ

ງ. <u>ປະເມີນຜົນທາງດ້ານເສດຖະກິດຂອງການປູກຜັກລະດູຝົນ</u>

ການປະເມີນຜົນທາງດ້ານເສດຖະກິດຄັ້ງນີ້ແມ່ນປະເມີນຜົນຢູ່ເທິງພື້ນຖານຂອງການປູກຜັກຂອງສະມາຊິກໃນຊ່ວງນ້ຳບໍ່ທັນຖ້ວມສວນຜັກ, ຍ້ອນສະມາຊິກກອງທຶນປູກຜັກໄດ້ໄລຍະໜຶ່ງນ້ຳກໍ່ເກີດຖ້ວມເຮັດໃຫ້ຜົນຜະລິດເສຍຫາຍ ແລະ ເພິ່ນກໍ່ບໍ່ໄດ້ສືບຕໍ່ປູກອີກໄປປູກພືດຢ່າງອື່ນແທນ. ສະນັ້ນ ເຮົາຈຶ່ງປະເມີນຈາກມູນຄ່າຜັກທີ່ກິນມາລົບໃຫ້ມູນຄ່າຕົ້ນທຶນທັງໝົດ. (ເບິ່ງຕາຕະລາງທີ 6)

**ຕາຕະລາງທີ 6.** ໄລ່ລຽງເສດຖະກິດການປູກພືດຜັກລະດູຝົນຂອງສະມາຊິກກອງທຶນ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ | ຜັກທີ່ກິນ + ໃຫ້ພີ່ນ້ອງ - ແນວພັນຜັກທີ່ເອົາມາເບື້ອງຕົ້ນ | -920,000 ກີບ |
| 2 | ສິ່ງນຳເຂົ້າ | ຝຸ່ນຄອກ | 10,000 ກີບ |
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | ຜ້າດາງດຳ + ພ້າ +ຈົກ + ຊວ້ານ + ບົວຫົດນ້ຳ | 233,750 ກີບ |

- ມູນຄ່າສ່ວນເກີນຂອງການປູກພືດຜັກລະດູຝົນ AV= ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= -920,000 ກີບ - 10,000 ກີບ - 233,750 ກີບ = -1,163,750 ກີບ/ປີ

- AI= AV - ພາສີ - ຄ່າຈ້າງແຮງງານ - ຄ່າເຊົ່າດິນ

- AI = - 1,163,750 ກີບ - 1,666 ກີບ (ພາສີດິນ) = -1,165,416 ກີບ/ປີ

❖ <u>ໝາຍເຫດ:</u> ມູນຄ່າແບວພັນຜັກແພງຍ້ອນວ່າ ເປັນແບວພັນຜັກລະດູຝົນ.

ຮູບທີ 5: ເສັ້ນສະແດງລາຍຮັບການປູກພືດຜັກລະດູຝົນຂອງສະ ມາຊິກກອງທຶນ




➢ ບັນຫາການປູກພືດຜັກລະດູຝົນຂອງສະມາຊິກມີຄື: ເກີດຝົນຕົກແຮງນ້ຳຖ້ວມສວນຜັກເຮັດໃຫ້ຜົນຜະລິດເສຍຫາຍ. ປະຈຸບັນສະມາຊິກບໍ່ໄດ້ສືບຕໍ່ປູກເພາະໄປປູກຕົ້ນຢາງພາລາແທນ.

4.2.2.2. <u>ວິທີການປູກໄມ້ໃຫ້ໝາກ</u>

ສະມາຊິກກອງທຶນປູກໄມ້ໃຫ້ໝາກແມ່ນຈັດຢູ່ໃນຄອບຄົວທີ່ມີຄວາມຫຼາກຫຼາຍທາງດ້ານການຄອບຄອງທີ່ດິນເຊັ່ນວ່າ: ສະມາຊິກທີ່ມີດິນທຳການຜະລິດ 1-2 ເຮັກຕາຈົນເຖິງ 3 ຫາ 4 ເຮັກຕາ, ນຳໃຊ້ແຮງງານຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງ, ເປັນຜູ້ທີ່ມີທຶນ 3,000,000 ກີບຈົນເຖິງ 11,000,000 ກີບ ແລະ ເປັນຄອບຄົວທີ່ມີອຸປະກອນທຳການຜະລິດ ເຊັ່ນ: ພ້າ, ຈົກ, ສຽມ, ຊວ້ານ ແລະ ລົດໄຖນາ ຍ້ອນວ່າສະມາຊິກກອງທຶນມີເນື້ອທີ່ດິນສຳລັບປູກໄມ້ໃຫ້ໝາກ. ສະມາຊິກກອງທຶນໄມ້ໃຫ້ໝາກເລີ່ມປູກໄມ້ໃຫ້ໝາກແຕ່ປີ 2008 ມີທັງໝົດ 3 ຄອບຄົວ. ກອງທຶນປູກໄມ້ໃຫ້ໝາກທີ່ທາງໂຄງການມອບໃຫ້ແມ່ນໄດ້ມອບຕາມຄວາມຕ້ອງການຂອງສະມາຊິກຄື: ຜູ້ທີ່ມີເນື້ອທີ່ກວ້າງຮັບເອົາ 143 ຕົ້ນ, ຜູ້ທີ່ມີເນື້ອທີ່ໜ້ອຍຮັບເອົາ 32 ຕົ້ນ ແລະ ໄມ້ໃຫ້ໝາກແມ່ນຫຼາຍຊະນິດເຊັ່ນ: ໝາກລຳໄຍ, ໝາກມັງກອນ, ໝາກມ່ວງ, ໝາກລະມຸດ. ສະມາຊິກກອງທຶນໄດ້ປະຕິບັດກິດຈະກຳຄືດັ່ງນີ້:

ກ. <u>ການກຽມດິນ</u>

ດິນສວນທີ່ຊາວກະສິກອນຈະປູກໄມ້ໃຫ້ໝາກ ແມ່ນເປັນດິນສວນເກົ່າທີ່ລ້ອມຮົ້ວໄວ້ແລ້ວແຕ່ຍັງບໍ່ໄດ້ປູກຫຍັງໃສ່. ການກຽມດິນຂອງຊາວກະສິກອນແມ່ນໄດ້ຖາງຫຍ້າໃນສວນ, ຫຼັງຈາກນັ້ນກໍ່ຂຸດຂຸມຂະໜາດ 50cm x 50cm x 50cm, ໄລຍະຫ່າງລະຫ່ວາງຕົ້ນແມ່ນ 4m x 4m. ກ່ອນຈະເອົາຕົ້ນໝາກໄມ້ລົງປູກແມ່ນໄດ້ເອົາຝຸ່ນຄອກລົງຂຸມປົນກັບດິນເພື່ອຮອງພື້ນ, ແລ້ວກໍ່ເອົາຕົ້ນໄມ້ລົງປູກ, ຈາກນັ້ນເອົານ້ຳຫົດແລ້ວເອົາຫຍ້າແຫ້ງປົກຄຸມໄວ້ເພື່ອຮັກສາຄວາມຊຸ່ມຊື່ນໃຫ້ແກ່ດິນ.

ຂ. <u>ການບົວລະບັດຮັກສາ</u>

ສະມາຊິກໄດ້ຫົດນ້ຳເຊົ້າແລງໃນເບື້ອງຕົ້ນເມື່ອຕົ້ນໄມ້ໃຫ້ໝາກຕິດກັບດິນ ແລະ ຊ່ວງງານດີຊາວກະສິກອນກໍ່ຈະຫົດນ້ຳອາທິດລະ 2 ຄັ້ງ, ຖ້າມີຫຍ້າຂຶ້ນຊາວກະສິກອນກໍ່ຈະພາລູກມາເສຍຫຍ້າ.

ຄ. <u>ເວລາທີ່ໃຊ້ໃນການປູກໄມ້ໃຫ້ໝາກ</u>

- ຖາງຫຍ້າ 4 ຄົນ, 3 ມື້ແລ້ວ.

- ຂຸດຂຸມ 3 ຄົນ, 4 ມື້ແລ້ວ.

- ການຫົດນ້ຳໃນຊ່ວງທຳອິດ 2 ຄັ້ງຕໍ່ມື້ໃນ 2 ອາທິດ, ຄັ້ງລະ 1 ຊົ່ວໂມງ, ຫຼັງຈາກນັ້ນແມ່ນຫົດ 2 ຄັ້ງຕໍ່ອາທິດ, ຄັ້ງລະ 1 ຊົ່ວໂມງໃນໄລຍະ 3 ເດືອນທຳອິດ, 2 ຄົນເຮັດ.

- ເສຍຫຍ້າ 5 ຄັ້ງ, ຄັ້ງລະ 4 ຊົ່ວໂມງ, 4 ຄົນຊ່ວຍກັນເຮັດ.

ວັນງານທີ່ໃຊ້ໃນການປູກໄມ້ໃຫ້ໝາກທັງໝົດປະມານ 35 ວັນງານ/ປີ.

ງ. <u>ປະເມີນຜົນດ້ານເສດຖະກິດຂອງການປູກໄມ້ໃຫ້ໝາກ</u>

ການປູກໄມ້ໃຫ້ໝາກນີ້ເພິ່ນໄດ້ປູກຫາກໍ່ໄດ້ 1 ປີ ເຊິ່ງຍັງບໍ່ທັນໄດ້ຮັບຜົນຜະລິດ, ກຳນົດການໃຫ້ຜົນຜະລິດຂອງໄມ້ໃຫ້ໝາກແມ່ນ 3-5 ປີ. ສະນັ້ນຈຶ່ງບໍ່ໄດ້ປະເມີນຜົນທາງດ້ານເສດຖະກິດຂອງຕົ້ນໄມ້ໃຫ້ໝາກ. ແຕ່ສາມາດຮູ້ໄດ້ວ່າສະມາຊິກທັງ 3 ຄອບຄົວທີ່ຮັບເອົາກອງທຶນໄມ້ໃຫ້ໝາກນີ້ແມ່ນມີພຽງຄອບຄົວດຽວທີ່ຍັງສືບຕໍ່ ແລະ ບົວລະບັດຮັກສາຕົ້ນໄມ້ໃຫ້ໝາກ, ໃນຕອນຕົ້ນທີ່ເພິ່ນເອົາກອງທຶນແມ່ນເອົາຢູ່ 32 ຕົ້ນ, ຕົ້ນໄມ້ໄດ້ຕາຍ 3 ຕົ້ນຍ້ອນດວງເຈາະ, ປະຈຸບັນຍັງເຫຼືອ 29 ຕົ້ນ. ສ່ວນສະມາຊິກອີກ 2 ຄອບຄົວແມ່ນບາງຄອບຄົວກໍ່ບົວລະບັດຮັກສາຕົ້ນໄມ້ໃນຊ່ວງເບື້ອງຕົ້ນທີ່ທາງໂຄງການຍັງຕິດຕາມຢູ່ ຫຼັງຈາກນັ້ນສະມາຊິກກໍ່ບໍ່ໄດ້ໄປຫົດນ້ຳເຮັດໃຫ້ຕົ້ນໄມ້ຕາຍໝົດ, ປະຈຸບັນແມ່ນຍັງບໍ່ໄດ້ສືບຕໍ່ປູກ. ສະມາຊິກອີກຄອບຄົວໜຶ່ງແມ່ນປູກຕົ້ນໄມ້ໃຫ້ໝາກໄດ້ພຽງ 2 ເດືອນຝົນກໍ່ຕົກໜັກນ້ຳຖ້ວມສວນຂອງສະມາຊິກກອງທຶນເຮັດໃຫ້ຕົ້ນໄມ້ໃຫ້ໝາກຕາຍໝົດ, ປັນຈຸບັນສະມາຊິກກອງທຶນໄດ້ປູກຕົ້ນຢາງພາລາແທນ.

4.2.2.3. <u>ວິທີການປູກໝາກຖົ່ວ (ກອງທຶນເງິນສົດ)</u>

ສະມາຊິກກອງທຶນເງິນສົດແມ່ນໄດ້ເອົາເງິນສົດໄປປູກໝາກຖົ່ວ ແລະ ຈັດຢູ່ໃນຄອບຄົວທີ່ມີຄວາມຫຼາກຫຼາຍທາງດ້ານການຄອບຄອງທີ່ດິນເຊັ່ນວ່າ: ສະມາຊິກທີ່ມີດິນທຳການຜະລິດ 1-2 ເຮັກຕາຈົນເຖິງ 3-4 ເຮັກຕາ, ນຳໃຊ້ແຮງງານຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງ, ເປັນຜູ້ທີ່ມີທຶນ 3,000,000 ກີບຈົນເຖິງ 11,000,000 ກີບ ແລະ ເປັນຄອບຄົວທີ່ມີອຸປະກອນທຳການຜະລິດເຊັ່ນ: ພ້າ, ຈົກ, ສ້ຽມ, ຊ້ວານ ແລະ ລົດໄຖນາ, ຍ້ອນຄອບຄົວສະມາຊິກດັ່ງກ່າວແມ່ນມີເນື້ອທີ່ດິນສຳລັບປູກໝາກຖົ່ວສະມາຊິກກອງທຶນເງິນສົດທີ່ນຳໄປປູກໝາກຖົ່ວແມ່ນເລີ່ມປູກແຕ່ປີ 2008 ມີທັງໝົດ 3 ຄອບຄົວ. ກອງທຶນເງິນສົດທີ່ທາງໂຄງການມອບໃຫ້ແມ່ນຄອບຄົວລະ 1,500,000 ກີບ. ການປະຕິບັດກິດຈະກຳຂອງສະມາຊິກແມ່ນຄ້າຍຄືກັນສະມາຊິກກອງທຶນໄດ້ປະຕິບັດກິດຈະກຳຄືດັ່ງນີ້:

ກ. <u>ການກຽມດິນ</u>

ສະມາຊິກກອງທຶນແມ່ນໄດ້ບຸກເບີກດິນໃນຊ່ວງລະດູຝົນ ໂດຍໃຊ້ເວລາທັງໝົດ 3 ເດືອນການກຽມດິນແມ່ນໃຊ້ລົດໄຖດິນຕາກແດດໄວ້ 1 ອາທິດ, ຫຼັງຈາກນັ້ນກໍ່ກຽມເຮັດເປັນໜານຍາວ ແລະ ສັບດິນໃຫ້ມຸ່ນພ້ອມທັງແປງໜານຂຶ້ນສູງປະມານ 20 cm, ການປູກແມ່ນເອົາຝຸ່ນຄອກປົນກັບດິນບ່ອນທີ່ເອົາເມັດພັນລົງປູກຂຸມ 1 ຕໍ່ 3 ຫາ 4 ເມັດແລ້ວເອົາດິນປົກໄວ້, ໄລຍະຫ່າງລະຫວ່າງຂຸມປູກ 15-20 cm.

ຂ. <u>ການບົວລະບັດຮັກສາ</u>

ເມື່ອປູກແລ້ວກໍ່ຫົດນ້ຳປົກກະຕິເຊົ້າ ແລະ ແລງ, ຫຼັງຈາກຕົ້ນຖົ່ວງອກຂຶ້ນແລ້ວກໍ່ໃສ່ຝຸ່ນເຄມີ 15:15:15. ໃນຊ່ວງນັ້ນແມ່ນລະດູຝົນບໍ່ຄ່ອຍຈະໄດ້ຫົດນ້ຳມີແຕ່ໄປພວນດິນ, ເສຍຫຍ້າ, ພໍຕົ້ນໝາກຖົ່ວສູງປະມານ 30 cm ກໍ່ໃສ່ຝຸ່ນເຄມີ 46:00:00. ຫຼັງຈາກນັ້ນຖ້າສັງເກດເຫັນມືຂອງຕົ້ນຖົ່ວປົ່ງອອກມາກໍ່ຫາຄັ້ງມາໃສ່ ແລະ ກໍ່ບົວລະບັດຕາມປົກກະຕິຄື: ເສຍຫຍ້າ, ຫົດນ້ຳ ແລະ ພວນດິນ.

ຄ. <u>ເວລາທີ່ໃຊ້ໃນການປູກໝາກຖົ່ວຝັກຍາວ</u>

- ໄຖດິນ, ປັ້ນດິນໃຊ້ເວລາ 1 ມື້, 3 ຄົນເຮັດ.
- ກຽມແປງໜານ 4 ຄົນ, 3 ມື້.
- ປູກໝາກຖົ່ວ 2 ມື້, 3 ຄົນ.
- ຫົດນ້ຳ 13 ຄັ້ງ, ຄັ້ງລະ 1 ຊົ່ວໂມງ, 3 ຄົນເຮັດ.
- ພວນດິນປະມານ 20 ຄັ້ງ, ຄັ້ງລະ 30 ນາທີ/ຄັ້ງ, 2 ຄົນເຮັດ.
- ໃສ່ຝຸ່ນ 15 ຄັ້ງ, ຄັ້ງລະ 1 ຊົ່ວໂມງ/ຄັ້ງ, 2 ຄົນເຮັດ.
- ເສຍຫຍ້າ 5 ຄັ້ງ, ຄັ້ງລະ 40 ນາທີ, 1 ຄົນເຮັດ.

ວັນງານທີ່ໃຊ້ໃນການປູກໝາກຖົ່ວຝັກຍາວທັງໝົດປະມານ 33 ວັນງານ/ປີ.

ງ. <u>ປະເມີນຜົນດ້ານເສດຖະກິດຂອງການປູກໝາກຖົ່ວ</u>

ແມ່ນໄດ້ອີງໃສ່ການປະຕິບັດຕົວຈິງຂອງສະມາຊິກທີ່ໄດ້ປູກໝາກຖົ່ວພຽງລະດູການດຽວ ເພາະມີແມງໄມ້ທຳລາຍເພີ່ນໄດ້ໄປປູກພືດສະນິດອື່ນແທນ, ບາງຄອບຄົວຂາດແຮງງານທຳການຜະລິດເພາະສະມາຊິກພາຍໃນຄອບຄົວໄປເຮັດວຽກຢູ່ບ່ອນອື່ນ. (ເບິ່ງຕາຕະລາງທີ 7)

**ຕາຕະລາງທີ 7**. ໄລ່ລຽງເສດຖະກິດການປູກໝາກຖົ່ວຂອງສະມາຊິກກອງທຶນ.

| ລ/ດ | ລາຍການ | ເນື້ອໃນ | ລວມລາຄາທັງໝົດ |
|---|---|---|---|
| 1 | ຜົນຜະລິດ/ປີ | ໝາກຖົ່ວທີ່ຂາຍ + ກິນ + ໃຫ້ພີ່ນ້ອງ - ແນວພັນໝາກຖົ່ວ | 960,000 ກີບ |
| 2 | ສິ່ງນຳເຂົ້າ/ປີ | ຝຸ່ນເຄມີ + ຝຸ່ນຄອກ | 108,000 ກີບ |

| | | | |
|---|---|---|---|
| 3 | ມູນຄ່າຫຼຸ້ຍຫ້ຽນ/ປີ | ຄັ້ງ + ຈົກ + ສຽມ + ພ້າ + ບຸກເບີກສວນ + ບົວ ຫົດນ້ຳ | 176,000 ກີບ |

- ມູນຄ່າສ່ວນເກີນຂອງການປູກໝາກຖົ່ວ AV = ມູນຄ່າຜົນຜະລິດ - ມູນຄ່າສິ່ງນຳເຂົ້າ - ມູນຄ່າຫຼຸ້ຍຫ້ຽນ.

AV= 960,000 ກີບ - 108,000 ກີບ - 176,000 ກີບ = 676,000 ກີບ/ປີ

- AI= AV - ພາສີ - ຄ່າຈ້າງແຮງງານ - ຄ່າເຊົ່າດິນ

- AI = 676,000 ກີບ - 20,000 ກີບ (ພາສີດິນ) = 656,000 ກີບ/ປີ. ວັນງານທີ່ໃຊ້ໃນການປູກໝາກຖົ່ວສະເລ່ຍປະມານ 33 ວັນງານ.

- ລາຍຮັບສະເລ່ຍຕໍ່ວັນງານເທົ່າກັບ 19,880 ກີບ/ວັນງານ.

ຮູບທີ 6: ເສັ້ນສະແດງລາຍຮັບການປູກໝາກຖົ່ວຂອງສະມາຊິກກອງທຶນ




➢ ບັນຫາການປູກໝາກຖົ່ວຂອງສະມາຊິກມີຄື: ສະມາຊິກບາງຄົນພົບບັນຫານ້ຳຖ້ວມໃນລະດູຝົນ ສະມາຊິກບາງຄົນພົບບັນຫາແມງໄມ້ເຂົ້າທຳລາຍຜົນຜະລິດຫຼັງຈາກນ້ຳຖ້ວມ, ສ່ວນສະມາຊິກບາງຄອບຄົວສະມາຊິກແມ່ນມີບັນຫາຂາດແຮງງານໃນການທຳການຜະລິດເຮັດໃຫ້ເຊົາປູກປູກໝາກຖົ່ວ. ປະຈຸບັນສະມາຊິກກອງທຶນໄດ້ໄປປູກພືດຊະນິດອື່ນແທນການປູກໝາກຖົ່ວພ້ອມທັງສົ່ງເງິນທຶນຄືນບາງສ່ວນ.

## 4.3. ການຈັດປະເພດຄອບຄົວສະມາຊິກທີ່ຮັບເອົາກອງທຶນ

ເພື່ອໃຫ້ຮູ້ໄດ້ເຖິງປັດໄຈ ແລະ ທ່າແຮງໃນການຜະລິດຂອງຄອບຄົວຊາວກະສິກອນ, ຮູ້ຄວາມແຕກຕ່າງຂອງແຕ່ລະປະເພດຊາວກະສິກອນທີ່ຮັບເອົາກອງທຶນ. ການຈັດແບ່ງປະເພດຄອບຄົວຊາວກະສິກອນທີ່ຮັບເອົາກອງທຶນນັ້ນໄດ້ຈັດແບ່ງດ້ວຍ 2 ວິທີຄື: ຈັດປະເພດຕາມຜູ້ຜະລິດ (ຕາມສິ່ງທີ່ເຂົາເຈົ້າມີຢູ່) ແລະ ຈັດປະເພດຕາມລະບົບການຜະລິດ (ຕາມສິ່ງທີ່ເຂົາເຈົ້າເຮັດ). ດັ່ງນັ້ນຈຶ່ງໄດ້ຈັດແບ່ງປະເພດຄອບຄົວຊາວກະສິກອນຕາມມາດຖານດັ່ງນີ້:

➢ ຊາວກະສິກອນປະເພດທີ 1: ຄອບຄົວແຮງງານໜ້ອຍ, ອຸປະກອນການຜະລິດຫຼາຍ, ດິນຫຼາຍ, ມີກິດຈະກຳການຜະລິດຫຼາຍ, ທຶນຫຼາຍ. ກຸ່ມນີ້ກວມເອົາ 55%. ຂອງຊາວກະສິກອນຜູ້ຮັບເອົາກອງທຶນ ເຊິ່ງລາຍລະອຽດມີຄື:

- ຊາວກະສິກອນປະເພດນີ້ຮັບກອງທຶນຄື: ກອງທຶນແບ້, ກອງທຶນກົບ, ກອງທຶນປານິນ, ປາໄນ, ປາປາກ, ກອງທຶນປາດຸກ, ກອງທຶນໄມ້ໃຫ້ໝາກ ແລະ ກອງທຶນເງິນສົດ (ປູກໝາກຖົ່ວ).
- ເນື່ອງຈາກຊາວກະສິກອນປະເພດນີ້ມີຫຼາຍກິດຈະກຳໃນການທຳການຜະລິດຈຶ່ງເຮັດໃຫ້ຊາວກະສິກອນມີອຸປະກອນທຳການຜະລິດຫຼາຍເຊັ່ນ: ລົດໄຖນາ 1 ຄັນ, ພ້າ 3-5 ດວງ, ຈົກ 1-2 ດວງ, ຊວ້ານ 2 ດວງ, ສຽມ 1-2 ດວງ.
- ລາຍຮັບຂອງຄອບຄົວຊາວກະສິກອນປະເພດນີ້ແມ່ນ 7,500,000 ກີບ/ແຮງງານຕົ້ນຕໍຈົນເຖິງ 11,000,000 ກີບ/ແຮງງານຕົ້ນຕໍ.
- ກິດຈະກຳຫຼັກປະມານ 90% ຂອງຄອບຄົວຊາວກະສິກອນກຸ່ມນີ້ແມ່ນປູກເຂົ້ານາປີ, ນາແຊງ, ສວນຂ່າ, ສວນແຍ້, ສວນໝາກທຸ່ງ, ສວນໝາກໂມ .
- ມີເນື້ອທີ່ທຳການຜະລິດສະເລ່ຍ 3-4 ເຮັກຕາ/ຄອບຄົວ.
- ກິດຈະກຳສຳຮອງເຊັ່ນ: ເຮັດສວນໝາກທຸ່ງ, ສວນໝາກເຜັດ, ສວນໝາກ ໂມໃນລະດູແລ້ງ.
- ການລ້ຽງສັດແມ່ນມີການລ້ຽງສັດເຊັ່ນ: ລ້ຽງງົວຫຼາຍກວ່າ 12 ໂຕຂຶ້ນໄປ, ລ້ຽງສັດປີກເຊັ່ນ: ໄກ່, ເປັດຫຼາຍກ່ວາ15 ໂຕ.
- ການນຳໃຊ້ແຮງງານ: ນອກຈາກແຮງງານໃນຄອບຄົວແລ້ວເຂົາເຈົ້າມີການຈ້າງແຮງງານເຂົ້າໃນການຜະລິດ ແລະ ແລກປ່ຽນແຮງງານໃນກຸ່ມຊາວກະສິກອນ ຫຼື ຍາດຕິພີ່ນ້ອງຂອງເຂົາເອງມີ 2-3 ແຮງງານຕົ້ນຕໍ/ຄອບຄົວ.

ຊາວກະສິກອນປະເພດທີ 1 ນີ້ແມ່ນເອົາກອງທຶນຄື: ກອງທຶນລ້ຽງແບ້, ກອງທຶນລ້ຽງກົບ, ກອງທຶນລ້ຽງປານິນ, ກອງທຶນລ້ຽງປາດຸກ, ກອງທຶນປູກໄມ້ໃຫ້ໝາກ ແລະ ກອງທຶນທີ່ເປັນເງິນສົດເພິ່ນໄດ້ເອົາເງິນສົດໄປເຮັດກິດຈະກຳປູກໝາກຖົ່ວຝັກຍາວ. ກອງທຶນດັ່ງກ່າວແມ່ນໄດ້ປະກອບສ່ວນເຂົ້າໃນລາຍຮັບຂອງຄອບຄົວສະມາຊິກຄືດັ່ງນີ້:

ຮູບທີ 7: ເສັ້ນສະແດງສົມທຽບລາຍຮັບຂອງສະມາຊິກກອງທຶນ




ຈາກຮູບຂ້າງເທິງເຫັນວ່າ: ລາຍຮັບຈາກກິດຈະກຳກອງທຶນໂດຍສະເລ່ຍເທົ່າກັບ 383,825 ກີບ/ກິດຈະກຳ ຫຼື ເທົ່າກັບ 3% ເປັນຕົວເລກທີ່ຕ່ຳກ່ວາລາຍຮັບທີ່ໄດ້ຈາກກິດຈະກຳປະເພດອື່ນທີ່ບໍ່ແມ່ນຂອງກອງທຶນຊຶ່ງເທົ່າກັບ 14,952,377 ກີບ/ຄອບຄົວ, ຄິດເປັນເປີເຊັນເທົ່າກັບ 97%. ແຕ່ເຖິງຢ່າງໃດກໍ່ຕາມລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນ 3% ນັ້ນກໍ່ປະກອບສ່ວນເຂົ້າໃນການໃຊ້ຈ່າຍໃນຊີວິດປະຈຳວັນຂອງສະມາຊິກ.

➢ ຊາວກະສິກອນປະເພດທີ 2: ແມ່ນຄອບຄົວທີ່ໃຊ້ແຮງງານຄອບຄົວເປັນສ່ວນໃຫຍ່ມີດິນປານກາງ, ທຶນປານກາງ, ອຸປະກອນການຜະລິດບໍ່ຫຼາຍປານໃດ, ມີກິດຈະກຳການຜະລິດບໍ່ຫຼາຍ. ກຸ່ມນີ້ກວມເອົາ 15% ຂອງຊາວກະສິກອນຜູ້ຮັບເອົາກອງທຶນຊາວກະສິກອນປະເພດນີ້ກໍ່ມີຈຸດຄ້າຍຄືກັນຫຼາຍຢ່າງເຊັ່ນ:

- ຊາວກະສິກອນປະເພດນີ້ແມ່ນເອົາກອງທຶນຄື: ກອງທຶນແນວພັນຜັກ, ກອງທຶນລ້ຽງແບ້, ກອງທຶນເງິນສົດ (ປູກໝາກຖົ່ວ).
- ລາຍຮັບຂອງຄອບຄົວປະເພດນີ້ມີປະມານ 3,000,000 ກີບ ຫາ 4,800,000 ກີບ/ແຮງງານຕົ້ນຕໍ/ປີ.
- ກິດຈະກຳຂອງເຂົາເຈົ້າແມ່ນການເຮັດນາປີ, ນາແຊງ, ສວນຜັກ, ສວນໝາກໂມ.
- ອຸປະກອນທຳການຜະລິດປະກອບມີ: ພ້າ 3-5 ດວງ, ຈົກ 1-2 ດວງ, ຊວ້ານ 2 ດວງ, ສຽມ 1-2 ດວງ.
- ຊາວກະສິກອນກຸ່ມນີ້ມີເນື້ອທີ່ປະມານ 1 ຫາ 2 ເຮັກຕາເນື້ອທີ່ບາງບ່ອນຊົນລະປະທານຍັງບໍ່ທົ່ວເຖິງ ແລະ ບາງບ່ອນກໍ່ມີນ້ຳຖ້ວມເຮັດໃຫ້ຜົນຜະລິດຕົກຕ່ຳ.
- ການລ້ຽງສັດແມ່ນມີຝູງສັດໃຫຍ່ປະມານ 7 ຫາ 12 ໂຕ, ບາງຄອບຄົວກໍ່ລ້ຽງແບ້, ສັດປີກເຊັ່ນ: ມີເປັດ, ໄກ່ 12-15 ໂຕ.

- ສ່ວນຫຼາຍແລ້ວແມ່ນນຳໃຊ້ແຮງງານຄອບຄົວ, ມີການແລກປ່ຽນແຮງງານ ແລະ ບາງຄັ້ງກໍ່ຈ້າງແຮງງານໃນເວລາວຽກຊຸ້ນຊ້ຽວ, ມີ 3-4 ແຮງງານຕົ້ນຕໍ/ຄອບຄົວ.

ຊາວກະສິກອນປະເພດທີ 2 ແມ່ນເອົາກອງທຶນຄື: ກອງທຶນແນວພັນຜັກ, ກອງທຶນລ້ຽງແບ້, ກອງທຶນເງິນສົດ (ປູກໝາກຖົ່ວ). ກອງທຶນດັ່ງກ່າວແມ່ນໄດ້ປະກອບສ່ວນເຂົ້າໃນລາຍຮັບຂອງຄອບຄົວສະມາຊິກຄືດັ່ງນີ້:




ຈາກຮູບຂ້າງເທິງເຫັນວ່າ: ລາຍຮັບຈາກກິດຈະກຳກອງທຶນໂດຍສະເລ່ຍເທົ່າກັບ -38,917 ກີບ/ກິດຈະກຳ ຫຼື ເທົ່າກັບ -1% ເຊິ່ງເປັນມູນຄ່າຕິດລົບທີ່ຫຼຸດທຶນຂອງຄອບຄົວລົງ. ສ່ວນລາຍຮັບທີ່ໄດ້ຈາກກິດຈະກຳປະເພດອື່ນທີ່ບໍ່ແມ່ນຂອງກອງທຶນໂດຍສະເລ່ຍເທົ່າກັບ 7,670,053 ກີບ/ຄອບຄົວ, ຄິດເປັນເປີເຊັນເທົ່າກັບ 99%.

➢ ຊາວກະສິກອນປະເພດທີ 3: ຄອບຄົວໃຊ້ແຮງງານຄອບຄົວ, ເຊົ່າດິນທຳການຜະລິດເປັນສ່ວນໃຫຍ່, ອຸປະກອນທຳການຜະລິດໜ້ອຍ, ທຶນໜ້ອຍ. ກຸ່ມນີ້ກວມເອົາ 30%. ຂອງຊາວກະສິກອນຜູ້ຮັບເອົາກອງທຶນ.

- ຊາວກະສິກອນປະເພດທີນີ້ແມ່ນເອົາກອງທຶນຄື: ກອງທຶນກົບ, ກອງທຶນແບ້.
- ລາຍຮັບຂອງຄອບຄົວປະເພດນີ້ແມ່ນ 3,300,000 ກີບລົງມາເຊິ່ງຫຼຸດຈາກເສັ້ນຄ່າຄອງຊີບຂັ້ນພື້ນຖານ.
- ພ້າ 1-2 ດວງ, ຈົກ 1-2 ດວງ, ສຽມ 1 ດວງ.
- ກິດຈະກຳທີ່ເຮັດແມ່ນການປູກເຂົ້ານາປີ, ນາແຊງ, ເຮັດໄຮ່, ປູກຜັກສວນຄົວເລັກນ້ອຍ ແລະ ລ້ຽງໄກ່ມີ 8-9 ໂຕ.
- ນອກຈາກໃຊ້ແຮງງານໃນຄອບຄົວແລ້ວຍັງໄປຮັບຈ້າງຂາຍແຮງງານນຳມີ 4-5 ແຮງງານຕົ້ນຕໍ/ຄອບຄົວ.

ຊາວກະສິກອນປະເພດທີ 3 ແມ່ນເອົາກອງທຶນຄື: ກອງທຶນກີບ, ກອງທຶນແບ້. ກອງທຶນດັ່ງກ່າວແມ່ນໄດ້ປະກອບສ່ວນເຂົ້າໃນລາຍຮັບຂອງຄອບຄົວສະມາຊິກຄືດັ່ງນີ້:

ຮູບທີ 9: ເສັ້ນສະແດງສົມທຽບລາຍຮັບຂອງສະມາຊິກກອງທຶນ




ຈາກຮູບຂ້າງເທິງເຫັນວ່າ: ລາຍຮັບຈາກກິດຈະກຳກອງທຶນໂດຍສະເລ່ຍເທົ່າກັບ 263,720 ກີບ/ກິດຈະກຳ ຫຼື ເທົ່າກັບ 11% ເປັນຕົວເລກທີ່ຕ່ຳກ່ວາລາຍຮັບທີ່ໄດ້ຈາກກິດຈະກຳປະເພດອື່ນທີ່ບໍ່ແມ່ນຂອງກອງທຶນໂດຍສະເລ່ຍເທົ່າກັບ 2,208,250 ກີບ/ຄອບຄົວ, ຄິດເປັນເປີເຊັນເທົ່າກັບ 89%. ແຕ່ເຖິງຢ່າງໃດກໍ່ຕາມລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນ 11% ນັ້ນກໍ່ປະກອບສ່ວນເຂົ້າໃນການໃຊ້ຈ່າຍໃນຊີວິດປະຈຳວັນ. (ເບິ່ງຕາຕະລາງທີ 8).

**ຕາຕາລາງທີ 8**. ຕາຕະລາງສັງລວມປະເພດຄອບຄົວຊາວກະສິກອນທີ່ຮັບເອົາທຶນ.

| ປະເພດ / ກິດຈະກຳ | ປະເພດທີ1: ຄອບຄົວແຮງງານໜ້ອຍ, ອຸປະກອນການຜະລິດຫຼາຍ, ດິນຫຼາຍ, ມີກິດຈະກຳການຜະລິດຫຼາຍ, ທຶນຫຼາຍ. | ປະເພດທີ2: ຄອບຄົວແຮງງານຄອບຄົວເປັນສ່ວນໃຫ່ຍ, ມີດິນປານກາງ, ທຶນປານກາງ, ມີກິດຈະກຳການຜະລິດບໍ່ຫຼາຍ. | ປະເພດ3: ຄອບຄົວໃຊ້ແຮງງານຄອບຄົວ, ເຊົ່າດິນທຳການຜະລິດເປັນສ່ວນໃຫ່ຍ, ທຶນໜ້ອຍ |
|---|---|---|---|

| | | | |
|---|---|---|---|
| ການນຳໃຊ້ແຮງງານ | - ແຮງງານຄອບຄົວ<br>- ຈ້າງແຮງງານ<br>- ແຮງງານແລກປ່ຽນ | - ແຮງງານຄອບຄົວ<br>- ຈ້າງແຮງງານ<br>- ແຮງງານແລກປ່ຽນ | - ແຮງງານຄອບຄົວ<br>- ແຮງງານແລກປ່ຽນ<br>- ໄປຂາຍແຮງງານ |
| ອຸປະກອນໃນການຜະລິດ | ລົດໄຖນາ 1 ຄັນ, ພ້າ 3-5 ດວງ, ຈົກ 1-2 ດວງ, ຊວ້ານ 2 ດວງ, ສຽມ 1-2 ດວງ. | ພ້າ 3-5 ດວງ, ຈົກ 1-2 ດວງ, ຊວ້ານ 2 ດວງ, ສຽມ 1-2 ດວງ. | ພ້າ 1-2 ດວງ, ຈົກ 1-2 ດວງ, ສຽມ 1 ດວງ. |
| ເນື້ອທີ່ດິນທຳການຜະລິດ | 3-4 ເຮັກຕາ | 1-2 ເຮັກຕາ | ມີດິນໜ້ອຍ ແລະ ເຊົ່າດິນ |
| ລະບົບການປູກພືດ | ເຮັດນາປີ,ນາແຊງ, ປູກເຫັດ, ສວນຂ່າ, ສວນແຍ້, ໝາກທຸ່ງ, ໝາກໂມ... | ເຮັດນາປີ, ນາແຊງ, ສວນຜັກກາດ... | ເຮັດນາປີ ຫຼື ເຮັດໄຮ່ ພຽງຢ່າງດຽວ, ປູກຜັກສວນຄົວ. |
| ລະບົບການລ້ຽງສັດ | ລ້ຽງສັດໃຫ່ຍເຊັ່ນ:<br>- ງົວ, ຄວາຍ, ແບ້ > 12ໂຕ<br>- ລ້ຽງສັດປີກເຊັ່ນ: ໄກ່, ເປັດ> 15ໂຕ | ລ້ຽງສັດໃຫ່ຍເຊັ່ນ:<br>- ງົວ, ແບ້ > 6 ໂຕ<br>- ລ້ຽງສັດປີກເຊັ່ນ: ໄກ່, ເປັດ> 10ໂຕ | ລ້ຽງສັດປີກເຊັ່ນ: ເປັດ,ໄກ່ < 10 ໂຕ |
| ລາຍຮັບ/ແຮງງານຕົ້ນຕໍ/ປີ | 7,500,000 ກີບ ຫາ 11,000,000 ກີບ | 3,000,000 ກີບ ຫາ 4,800,000 ກີບ | < 3,300,000 ກີບ |
| ຈຳນວນຄອບຄົວ (%) | 11 ຄອບຄົວ (55 %) | 3 ຄອບຄົວ (15%) | 6 ຄອບຄົວ (30%) |
| ລາຍຮັບທີ່ໄດ້ຈາກກອງທຶນ | 3,834,250 ກີບ (76%) | -117,080 ກີບ (-2%) | 1,315,000 ກີບ (26%) |

ຈາກຕາຕະລາງເຫັນວ່າ ຄອບຄົວປະເພດທີ 1 ກວມເອົາຈຳນວນສະມາຊິກກອງທຶນຫຼາຍກວ່າໝູ່ເຖິງ 55% ເນື່ອງຈາກວ່າຄອບຄົວດັ່ງກ່າວແມ່ນມີທ່າແຮງໃນການທຳການຜະລິດ ແລະ ເຂົາເຈົ້າກໍ່ມີຄວາມຕ້ອງການສະໝັກໃຈທີ່ຈະປະຕິບັດກິດຈະກຳ. ສ່ວນຄອບຄົວທີ່ຈັດຢູ່ໃນປະເພດ ທີ 2 ແລະ ຄອບຄົວປະເພດທີ 3 ແມ່ນບໍ່ມີທ່າແຮງໃນການປະຕິບັດກິດຈະກຳ, ບໍ່ມີຄວາມຕ້ອງການສະໝັກໃຈເພາະຢາກໄດ້ກອງທຶນທີ່ທາງໂຄງການບໍ່ມີໃຫ້ເຊັ່ນ: ງົວ, ຄວາຍ. ດັ່ງນັ້ນທາງໂຄງການຈຶ່ງໃຫ້ຄອບຄົວປະເພດທີ 1 ລ້ຽງເປັນແບບຢ່າງໃຫ້ຄອບຄົວປະເພດ 2 ແລະ ປະເພດ 3 ເຫັນຜົນໃນການນຳໃຊ້ກິດຈະກຳ. ເມື່ອ

ໄດ້ຮັບຜົນແລ້ວກໍ່ສົ່ງຕໍ່ໃຫ້ຄອບຄົວປະເພດ 2 ແລະ ປະເພດ 3 ສືບຕໍ່ປະຕິບັດກິດຈະກຳດັ່ງກ່າວຕາມຈຸດປະສົງຂອງໂຄງການ.

ລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນເຫັນໄດ້ວ່າ ລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນຂອງຄອບຄົວປະເພດທີ 1 ແມ່ນຫຼາຍກວ່າໝູ່ຍ້ອນວ່າ: ຈຳນວນສະມາຊິກກອງທຶນປະເພດທີ 1 ມີຫຼາຍກ່ວາປະເພດອື່ນ. ສ່ວນລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນຂອງຄອບຄົວປະເພດທີ 2 ແມ່ນມີລາຍຮັບຕິດລົບຍ້ອນວ່າ: ບາງກິດຈະກຳທີ່ສະມາຊິກໄດ້ຮັບແມ່ນປະສົບກັບໄພທຳມະຊາດ (ນ້ຳຖ້ວມ) ແລະ ຈຳນວນສະມາຊິກທີ່ຮັບເອົາກອງທຶນກໍ່ມີໜ້ອຍ.

## 4.4. ຄວາມສາມາດໃຊ້ແທນຄືນໃຫ້ກອງທຶນ ແລະ ບັນຫາການນຳໃຊ້ກອງທຶນຂອງສະມາຊິກ

### 4.4.1. ຄວາມສາມາດໃຊ້ແທນຄືນໃຫ້ກອງທຶນຂອງສະມາຊິກ

ເຫັນໄດ້ວ່າສະມາຊິກຜູ້ໄດ້ຮັບທຶນບາງຄອບຄົວກໍ່ມີການສົ່ງທຶນຄືນແຕ່ສົ່ງທຶນຄືນສ່ວນໃດສ່ວນໜຶ່ງເທົ່ານັ້ນ ແລະ ບາງຄອບຄົວກໍ່ບໍ່ໄດ້ສົ່ງທຶນຄືນເຊິ່ງມີຄື: (ເບິ່ງຕາຕະລາງທີ 9)

**ຕາຕະລາງທີ 9.** ສັງລວມສະມາຊິກກອງທຶນທີ່ໃຊ້ທຶນຄືນ

| ປະເພດຄອບຄົວສະມາຊິກ | ກອງທຶນທີ່ຮັບເອົາ | ຈຳນວນຄອບຄົວທີ່ສົ່ງທຶນຄືນ | ຈຳນວນຄອບຄົວທີ່ບໍ່ສົ່ງທຶນຄືນ |
|---|---|---|---|
| | ກອງທຶນແບ້ | 0 | 1 |
| | ກອງທຶນກົບ | 0 | 1 |
| | ກອງທຶນປາດຸກ | 0 | 1 |

| | | | |
|---|---|---|---|
| ປະເພດທີ 1 | ກອງທຶນປານິນ, ປາໄນ | 0 | 2 |
| | ກອງທຶນເງິນສົດ (ປູກໝາກຖົ່ວ) | 2 | 1 |
| | ກອງທຶນໄມ້ໃຫ້ໝາກ | 0 | 1 |
| ປະເພດທີ 2 | ກອງທຶນກົບ | 0 | 1 |
| | ກອງທຶນປາດຸກ | 0 | 1 |
| | ກອງທຶນແນວພັນຜັກ | 0 | 1 |
| | ກອງທຶນໄມ້ໃຫ້ໝາກ | 0 | 2 |
| | ກອງທຶນແບ້ | 1 | 0 |
| ປະເພດ 3 | ກອງທຶນແບ້ | 2 | 2 |
| | ກອງທຶນກົບ | 0 | 1 |
| ລວມທັງໝົດ | | 5 | 15 |

➢ ສະມາຊິກທີ່ສົ່ງທຶນຄືນມີທັງໝົດ 5 ຄອບຄົວ, ຄິດໄລ່ເປັນເຊັ່ນສະມາຊິກຜູ້ສົ່ງທຶນຄືນ ເທົ່າກັບ 25% ສາເຫດທີ່ເຮັດໃຫ້ສະມາຊິກກອງທຶນສົ່ງທຶນຄືນໃຫ້ກອງທຶນໄດ້ຍ້ອນວ່າ:

1. ສະມາຊິກມີຄວາມເອົາໃຈໃສ່ຕໍ່ການປະຕິບັດກິດຈະກຳທີ່ຕົນເອງໄດ້ຮັບເຊັ່ນວ່າ: ກອງທຶນແບ້ ສະມາຊິກບາງຄອບຄົວມີການສັກຢາປ້ອງກັນພະຍາດ, ມີການຕິດຕາມສັດເວລາປ່ອຍສັດໄປກິນຫຍ້າ ເຮັດໃຫ້ສັດບໍ່ຕາຍ ສ່ວນສະມາຊິກທີ່ເອົາກອງທຶນເງິນສົດໄປເຮັດກິດຈະກຳປູກໝາກຖົ່ວກໍ່ໄດ້ເອົາໃຈໃສ່ຕໍ່ການປະຕິບັດກິດຈະກຳໃນການຫົດນ້ຳ, ພວນດິນ, ໃສ່ຝຸ່ນ, ເສຍຫຍ້າຈົນໄດ້ຂາຍຜົນຜະລິດຄອບຄົວດັ່ງກ່າວຈຶ່ງມີລາຍຮັບດີ ແລະ ສາມາດສົ່ງທຶນໃຫ້ກອງທຶນໄດ້.

2. ສະມາຊິກມີຄວາມຮັບຜິດຊອບຕໍ່ສັນຍາ ແລະ ກົດລະບຽບທີ່ວາງອອກ ເຊິ່ງສະແດງໃຫ້ເຫັນຢູ່ບ່ອນວ່າ ສະມາຊິກບາງຄອບຄົວແມ່ນມີການສົ່ງທຶນຄືນບາງສ່ວນ ແລະ ສ່ວນທີ່ເຫຼືອເພິ່ນກໍ່ຈະເສຍດອກເບ້ຍຕາມກຳນົດສັນຍາ.

3. ການບໍລິຫານງານຂອງຄະນະບໍລິຫານງານ ແມ່ນເຮັດໄດ້ດີມີການຕິດຕາມກວດກາເບິ່ງສະມາຊິກ, ມີການບັນທຶກລາຍລະອຽດກ່ຽວກັບສະມາຊິກ (ຄະນະບໍລິຫານບ້ານທ່າຈຳປາ) ເຮັດໃຫ້ສະມາຊິກຮູ້ ແລະ ມີສະຕິວ່າຕ້ອງໄດ້ສົ່ງທຶນຄືນ ຖ້າຄະນະບໍລິຫານງານບໍ່ມີການຕິດຕາມ ຫຼື ບໍ່ສົນໃຈຫຍັງຈະເຮັດໃຫ້ສະມາຊິກກອງທຶນຄິດວ່າກອງທຶນທີ່ໄດ້ມາແມ່ນເພິ່ນໃຫ້ລ້າເພາະບໍ່ມີໃຜມາເວົ້າຫຍັງ.

➢ ສະມາຊິກທີ່ບໍ່ໄດ້ສົ່ງທຶນຄືນໃຫ້ກອງທຶນມີທັງໝົດ 15 ຄອບຄົວ, ຄິດໄລ່ເປັນເຊັ່ນຜູ້ທີ່ບໍ່ໄດ້ສົ່ງທຶນຄືນເທົ່າກັບ 75%. ສາເຫດທີ່ເຮັດໃຫ້ສະມາຊິກບໍ່ໄດ້ສົ່ງທຶນຄືນຍ້ອນວ່າ:

1. ສະມາຊິກຂາດການເອົາໃຈໃສ່ຕໍ່ການປະຕິບັດກິດຈະກຳທີ່ໄດ້ຮັບຈາກກອງທຶນເຊັ່ນວ່າ: ກໍລະນີຂອງກອງທຶນແບ້ຂາດການຕິດຕາມຈາກເຈົ້າຂອງບາງຄອບຄົວສະມາຊິກກອງທຶນກໍ່ໄດ້ລ້ຽງແບ້ໂດຍຜູກໄວ້ແຄມທາງເຮັດໃຫ້ແບ້ຖືກລົດຕຳຕາຍ, ກໍລະນີຂອງກອງທຶນໄມ້ໃຫ້ໝາກສະມາຊິກ ບາງຄອບຄົວກໍ່ເຮັດໃຫ້ຕົ້ນໄມ້ໃຫ້ໝາກຕາຍໝົດຍ້ອນການຂາດນ້ຳເພາະຜູ້ກ່ຽວໄປເຮັດວຽກບ່ອນອື່ນເຮັດໃຫ້ສະມາຊິກພາຍໃນຄອບຄົວບໍ່ໃສ່ໃຈໄປຫົດນ້ຳ.

2. ສະມາຊິກກອງທຶນບາງຄອບຄົວກໍ່ບໍ່ຢາກສົ່ງທຶນຄືນຍ້ອນຢາກໄດ້ທຶນໄປໝູນເຮັດກິດຈະກຳອື່ນຕໍ່ເພາະບາງກິດຈະກຳບໍ່ມີຜົນໄດ້ຮັບ.

3. ພາຍຫຼັງສິ້ນສຸດໂຄງການທາງໂຄງການກໍ່ຄືທາງຄະນະກະເສດສາດແມ່ນບໍ່ໄດ້ລົງຕິດຕາມ, ກວດກາ, ເມື່ອເກີດບັນຫາຈຶ່ງເຮັດໃຫ້ຄະນະບໍລິຫານກອງທຶນບໍ່ມີຜູ້ໃຫ້ຄຳແນະນຳ ແລະ ບໍ່ສາມາດຕັດສິນໃຈຢ່າງເດັດຂາດໃນການຕັດສິນບັນຫາທີ່ເກີດຂຶ້ນໃນກຸ່ມສະມາຊິກເຮັດໃຫ້ສະມາຊິກຖືເບົາຕໍ່ການປະຕິບັດກົດລະບຽບຂອງກອງທຶນ.

4. ຄະນະບໍລິຫານບໍ່ມີປະສົບການໃນການບໍລິຫານງານເຮັດໃຫ້ບໍ່ຕິດຕາມເບິ່ງກິດຈະກຳຂອງສະມາຊິກ, ບໍ່ມີການຕິດຕາມບັນທຶກລາຍລະອຽດກ່ຽວກັບສະມາຊິກ ແລະ ບໍ່ມີການປະຊຸມ ຫຼື ແນະນຳໃຫ້ສະມາຊິກແຕ່ຢ່າງໃດເລີຍ (ຄະນະບໍລິຫານບ້ານດົງບັງ) ເຮັດໃຫ້ສະມາຊິກບໍ່ມີຄວາມກະຕືລືລົ້ນຕໍ່ການສົ່ງທຶນຄືນເພາະສະມາຊິກບາງຄົນຍັງຄິດວ່າກອງທຶນທີ່ໄດ້ຮັບເປັນກອງທຶນທີ່ໃຫ້ລ້າ, ສ່ວນສະມາຊິກບາງຄອບຄົວເຖິງວ່າເຂົາເຈົ້າຈະສາມາດສົ່ງທຶນຄືນໄດ້ກໍ່ບໍ່ສົ່ງ ເພາະຖ້າທາງຄະນະບໍລິຫານບອກໃຫ້ສົ່ງຈຶ່ງຈະສົ່ງທຶນໃຫ້ກອງທຶນຄືນ (ສະມາຊິກບ້ານດົງບັງ).

5. ຄະນະບໍລິຫານງານຍັງບໍ່ຮັດກຸມຕໍ່ກົດລະບຽບທີ່ວາງອອກສະແດງອອກຢູ່ບ່ອນວ່າ: ບາງກິດຈະກຳກໍ່ກາຍກຳນົດສົ່ງທຶນຄືນແຕ່ທາງຄະນະບໍລິຫານກອງທຶນກໍ່ບໍ່ປະຕິບັດກົດລະບຽບຕໍ່ສະມາຊິກຕາມທີ່ກຳນົດໄວ້ໃນເບື້ອງຕົ້ນ.

6. ໄພທຳມະຊາດ: ພາຍຫຼັງສະມາຊິກບາງຈຳນວນປະຕິບັດກິດຈະກຳໄດ້ພຽງຊ່ວງໜຶ່ງກໍ່ເກີດຝົນຕົກແຮງເຮັດໃຫ້ນ້ຳຖ້ວມຫຼາຍຈຸດຢູ່ໃນນະຄອນຫຼວງ ແລະ ບ້ານເວີນແທ່ນກໍ່ແມ່ນອີກຈຸດໜຶ່ງທີ່ຖືກນ້ຳຖ້ວມເຮັດໃຫ້ຜົນຜະລິດຂອງສະມາຊິກກອງທຶນເສຍຫາຍ, ສະນັ້ນເພີ່ນຈຶ່ງບໍ່ມີລາຍໄດ້ທີ່ຈະສົ່ງທຶນໃຫ້ແກ່ກອງທຶນ.

4.4.2. **<u>ຜົນໄດ້ຮັບຂອງກອງທຶນປີ 2010</u>**

ກອງທຶນພັດທະນາກະສິກຳຂັ້ນບ້ານແມ່ນເລີ່ມແຕ່ວັນທີ 8/4/2008 ແລະ ສິ້ນສຸດວັນທີ 30/6/2009 ມູນຄ່າກອງທຶນທັງໝົດທີ່ມອບໃຫ້ 3 ບ້ານມີ 16,580,000 ກີບມາຮອດປີ 2010 ມີມູນຄ່າທັງໝົດ 21,456,834 ກີບ, ເຫັນໄດ້ວ່າມູນຄ່າກອງທຶນເພີ່ມຂຶ້ນເຖິງ 4,876,834 ກີບ.

(ເບິ່ງຕາຕະລາງທີ 10)

**ຕາຕະລາງທີ 10.** ຜົນໄດ້ຮັບຂອງກອງທຶນປີ 2010.

| ລ/ດ | ປະເພດກອງທຶນ | ມູນຄ່າກອງທຶນເບື້ອງຕົ້ນ (ກີບ) | ມູນຄ່າກອງທຶນປະຈຸບັນ (ກີບ) | ຜົນໄດ້ຮັບຂອງກອງທຶນ (ກີບ) |
|---|---|---|---|---|
| 1 | ກອງທຶນແບ້ | 5,074,000 | 8,840,000 | 3,766,000 |
| 2 | ກອງທຶນປາດຸກ | 1,422,000 | 1,222,000 | - 200,000 |
| 3 | ກອງທຶນກົບ | 1,176,000 | 859,000 | -317,000 |
| 4 | ກອງທຶນປານິນ, ປາໄນ | 1,260,000 | 2,142,000 | 882,000 |
| 5 | ກອງທຶນແນວພັນຜັກ | 1,370,000 | 204,584 | -1,165,416 |
| 6 | ກອງທຶນເງິນສົດ (ປູກໝາກຖົ່ວ) | 4,500,000 | 6,411,250 | 1,911,250 |
| 7 | ກອງທຶນໄມ້ໃຫ້ໝາກ | 1,778,000 | 1,778,000 | 0 |
| | ລວມທັງໝົດ | 16,580,000 ກີບ | 21,456,834 ກີບ | 4,876,834 ກີບ |

ຈາກຕາຕະລາງສັງເກດເຫັນວ່າ ກອງທຶນໃນເບື້ອງຕົ້ນທີ່ມີມູນຄ່າສູງກ່ວາໝູ່ແມ່ນກອງທຶນແບ້ ຍ້ອນວ່າ: ສະມາຊິກທີ່ຮັບເອົາກິດຈະກຳລ້ຽງແບ້ແມ່ນມີຈຳນວນຫຼາຍກວ່າກິດຈະກຳອື່ນສຳລັບຜົນໄດ້ຮັບຂອງແຕ່ລະກິດຈະກຳກອງທຶນແມ່ນມີຄວາມແຕກຕ່າງກັນ, ກິດຈະກຳທີ່ມີຜົນໄດ້ຮັບຫຼາຍກວ່າໝູ່ແມ່ນກິດຈະກຳການລ້ຽງແບ້ເທົ່າ 3,766,000 ກີບ, ຍ້ອນວ່າ ຈຳນວນສະມາຊິກທີ່ລ້ຽງແບ້ແມ່ນມີຫຼາຍ, ໃຊ້ສິ່ງນຳເຂົ້າໃນການລ້ຽງໜ້ອຍກ່ວາກິດຈະກຳອື່ນ, ບາງຄອບຄົວກໍ່ມີການຮັກຢາປ້ອງກັນເຮັດໃຫ້ບໍ່ເກີດພະຍາດແບ້ເລີຍບໍ່ຕາຍຈຶ່ງສາມາດສ້າງລາຍຮັບໄດ້ດີ. ສ່ວນກິດຈະກຳກອງທຶນທີ່ມີມູນຄ່າຕິດຄ່າລົບແມ່ນຍ້ອນ: ສະມາຊິກຂາດການເອົາໃຈໃສ່ໃນການປະຕິບັດກິດຈະກຳຈຶ່ງເຮັດໃຫ້ຜົນຜະລິດບໍ່ໄດ້ດີ ແລະ ບາງກິດຈະກຳພົບກັບບັນຫາໄພທຳມະຊາດນ້ຳຖ້ວມ, ຫຼັງຈາກນັ້ນສະມາຊິກກໍ່ບໍ່ໄດ້ສືບຕໍ່ກິດຈະກຳ. ກອງທຶນໄມ້ໃຫ້ໝາກແມ່ນຍັງບໍ່ສາມາດຄິດໄລ່ຜົນໄດ້ຮັບໄດ້ເພາະບໍ່ທັນຮອດກຳນົດໃຫ້ຜົນຜະລິດເທື່ອ.

### 4.4.3. <u>ບັນຫາການນຳໃຊ້ກອງທຶນຂອງສະມາຊິກກອງທຶນ</u>

ການນຳໃຊ້ກອງທຶນຂອງສະມາຊິກ ແມ່ນພົບຄວາມຫຍຸ້ງຍາກຍ້ອນວ່າ:

➢ ສະມາຊິກສ່ວນຫຼາຍແມ່ນຢາກໄດ້ກອງທຶນເພື່ອໄປທົດລອງລ້ຽງສັດ ແລະ ປູກພືດເພາະຂາດປະສົບການ, ເຮັດໃຫ້ບໍ່ປະສົບຜົນສຳເລັດໃນການນຳໃຊ້ກອງທຶນ.

➢ ໃນບາງບ້ານກໍ່ຖືກໄພນ້ຳຖ້ວມຈຶ່ງເຮັດໃຫ້ຜົນຜະລິດເສຍຫາຍບໍ່ໄດ້ຮັບຜົນກຳໄລ.

➢ ການຮັບເອົາທຶນຈາກໂຄງການເຊັ່ນ: ກອງທຶນແບ້ແມ່ນຍັງມີຄວາມແຕກຕ່າງກັນຍ້ອນວ່າ: ແບ້ທີ່ທາງໂຄງການນຳມາມອບໃຫ້ແມ່ນມີອາຍຸບໍ່ເທົ່າກັນບາງຄອບຄົວກໍ່ໄດ້ແບ້ໃຫຍ່ (ອາຍຸ 6 ເດືອນ - 2 ປີ),

ບາງຄອບຄົວກໍ່ໄດ້ແບ້ນ້ອຍ (ອາຍຸ 3 ເດືອນ - 1 ປີ) ເຮັດໃຫ້ແບ້ທີ່ອາຍຸຍັງນ້ອຍສ່ວນຫຼາຍຈະຕິດພະຍາດຕາຍ ຫຼື ບໍ່ໄດ້ຮັບຜົນຜະລິດເທົ່າກັນ.

➢ ກອງທຶນແບ້ທີ່ທາງໂຄງການເອົາມາໃຫ້ສະມາຊິກນັ້ນ ແມ່ນແບ້ທີ່ເພິ່ນເລາະຊື້ຈາກບ່ອນອື່ນມາ, ສະນັ້ນເລີຍບໍ່ຮູ້ວ່າແບ້ທີ່ຊື້ມານັ້ນຕິດເຊື້ອພະຍາດມານຳ ຫຼື ບໍ່? ຫຼັງຈາກຊື້ມາກໍ່ເອົາມາໃຫ້ຄອບຄົວສະມາຊິກຜູ້ທີ່ຕ້ອງການເລີຍໂດຍທີ່ບໍ່ມີການເອົາມາຕິດຕາມເບິ່ງອາການແບ້ກ່ອນເຮັດໃຫ້ແບ້ບາງໂຕທີ່ນຳມາໃຫ້ສະມາຊິກນັ້ນຢູ່ໄດ້ປະມານ 3 - 5 ມື້ ກໍ່ເກີດພະຍາດຕາຍຈຶ່ງເຮັດໃຫ້ສະມາຊິກບາງຄອບຄົວກໍ່ສົ່ງແບ້ທີ່ລອດຕາຍຄືນເພາະຢ້ານເປັນໜີ້ ແລະ ຍັງເຮັດໃຫ້ມູນຄ່າກອງທຶນແບ້ສູນເສຍໄປກັບແບ້ທີ່ຕາຍ.

# V. ວິຈານ
# (Discussion)

ຜ່ານການລົງສຶກສາຜົນກະທົບຂອງກອງທຶນພັດທະນາກະສິກຳຂັ້ນບ້ານຢູ່ໃນ 3 ບ້ານເປົ້າໝາຍຂອງຄະນະກະເສດສາດພວກຂ້າພະເຈົ້າເຫັນວ່າ:

1. **ກ່ຽວກັບການສຶກສາການບໍລິຫານງານຂອງຄະນະບໍລິຫານກອງທຶນພັດທະນາກະສິກຳ**

ການປະຕິບັດໜ້າທີ່ຂອງຄະນະບໍລິຫານງານແມ່ນຍັງບໍ່ເປັນໄປຕາມກົດລະບຽບທີ່ວາງອອກ, ຄະນະບໍລິຫານງານກອງທຶນຍັງບໍ່ມີການປະຊຸມຕຳນິສິ່ງຂ່າວກັນພາຍໃນກຸ່ມຂອງຄະນະບໍລິຫານ ແລະ ກຸ່ມສະມາຊິກກອງທຶນ. ນອກຈາກນີ້ທາງຄະນະບໍລິຫານຍັງບໍ່ມີການນຳພາສ້າງແຜນການເຄື່ອນໄຫວ ແລະ ສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະການເກັບກຳຂໍ້ມູນຂອງສະມາຊິກ ແມ່ນຍັງບໍ່ທັນທົ່ວເຖິງເຮັດໃຫ້ກອງທຶນໄດ້ຮັບຜົນເສຍຫາຍເຊັ່ນວ່າ: ໃນກໍລະນີສະມາຊິກກອງທຶນຢູ່ບ້ານທ່າຈຳປາຍ້າຍໄປຢູ່ບ່ອນອື່ນໂດຍທີ່ບໍ່ສົ່ງທຶນຄືນທາງຄະນະບໍລິຫານກໍ່ບໍ່ໄດ້ເກັບກຳເອົາກອງທຶນຄືນ, ການຄິດໄລ່ບັນຊີຂອງຄະນະບໍລິຫານຍັງບໍ່ທັນລະອຽດເນື່ອງຈາກວ່າທາງໂຄງການບໍ່ມີການຝຶກອົບຮົມກ່ຽວກັບການຄິດໄລ່ບັນຊີໃຫ້ໃນເບື້ອງຕົ້ນ.

ໃນກໍລະນີນີ້ທາງໂຄງການຄວນມີການຫາທຶນເພື່ອໃຫ້ມີງົບປະມານໃນການລົງຕິດຕາມກວດກາ, ໃຫ້ຄຳແນະນຳ ແລະ ຝຶກອົບຮົມໃຫ້ຄະນະບໍລິຫານຕື່ມອີກ.

2. <u>ດ້ານການນຳໃຊ້ກອງທຶນເຂົ້າໃນການຜະລິດກະສິກຳ</u>

ຫຼັງຈາກມີການສ້າງຕັ້ງກອງທຶນພັດທະນາກະສິກຳຂັ້ນບ້ານ ສະມາຊິກຜູ້ທີ່ຮັບເອົາກອງທຶນທີ່ຢືມໄປນັ້ນມາໝູນໃຊ້ເຊັ່ນ: ການລ້ຽງແບ້, ການລ້ຽງກົບ, ການລ້ຽງປາ, ການປູກຜັກລະດູຝົນ, ການປູກໝາກຖົ່ວ ແລະ ການປູກໄມ້ໃຫ້ໝາກ. ຜ່ານການລົງເກັບກຳຂໍ້ມູນສັງເກດເຫັນວ່າ ສະມາຊິກບາງຈຳນວນແມ່ນຍັງຖືເບົາຕໍ່ການປະຕິບັດກິດຈະກຳທີ່ສະມາຊິກຮັບໄປ ແລະ ຂາດການເອົາໃຈໃສ່ຕໍ່ກັບກິດຈະກຳຢ່າງຕໍ່ເນື່ອງເຮັດໃຫ້ບາງກອງທຶນແມ່ນບໍ່ໄດ້ຮັບຜົນ, ສິ່ງພົນເຮັດໃຫ້ລາຍຮັບທີ່ໄດ້ຈາກກິດຈະກຳມີທັງກິດຈະກຳທີ່ສ້າງລາຍຮັບໃຫ້ສະມາຊິກ ແລະ ບາງກິດຈະກຳກໍ່ບໍ່ສ້າງລາຍຮັບຫຍັງໃຫ້ສະມາຊິກ. ຄວນຄັດເລືອກເອົາສະມາຊິກທີ່ມີຄວາມດຸໝັ່ນ ແລະ ຕ້ອງການກອງທຶນນີ້ແທ້, ຕ້ອງເຜີຍແຜ່ໃຫ້ສະມາຊິກກອງທຶນທຸກຄົນເຂົ້າໃຈໜ້າທີ່ ແລະ ກົດລະບຽບຂອງຕົນພ້ອມກັນນັ້ນທາງຄະນະບໍລິຫານກໍ່ຄືທາງໂຄງການຄວນລົງຕິດຕາມໃຫ້ຄຳແນະນຳຕື່ມ, ເພື່ອໃຫ້ສະມາຊິກມີຄວາມກະຕືລືລົ້ນໃນການນຳໃຊ້ກອງທຶນ.

3. <u>ກ່ຽວກັບການສຶກສາຄວາມສາມາດສົ່ງທຶນຄືນໃຫ້ກອງທຶນ</u>

ການສົ່ງທຶນຄືນຂອງສະມາຊິກກອງທຶນແມ່ນມີຈຳນວນສະມາຊິກສົ່ງກອງທຶນຄືນພຽງແຕ່ 5 ຄອບຄົວ, ຄິດເປັນເປີເຊັນເທົ່າກັບ 25% ເທົ່ານັ້ນ. ສ່ວນອີກ 75% ແມ່ນບໍ່ໄດ້ສົ່ງທຶນຄືນຍ້ອນວ່າ ສະມາຊິກບາງຄົນແມ່ນຍັງບໍ່ຕື່ນຕົວລໍຖ້າຄະນະບໍລິຫານມາແຈ້ງກ່ອນຈິ່ງຈະສົ່ງ ແລະ ສະມາຊິກບາງຄົນບໍ່ສາມາດສົ່ງທຶນຄືນໄດ້ເພາະບາງກິດຈະກຳບໍ່ໄດ້ຮັບຜົນສຳເລັດ ເນື່ອງຈາກຕົວຂອງສະມາຊິກເອງບໍ່ເອົາໃຈໃສ່ຕໍ່ການປະຕິບັດກິດຈະກຳທີ່ຮັບໄປ, ອີກຢ່າງໜຶ່ງກໍ່ເກີດບັນຫາໄພທຳມະຊາດຈິ່ງເຮັດໃຫ້ສະມາຊິກກອງທຶນບໍ່ສາມາດສົ່ງທຶນຄືນໄດ້.

# VI. ສະຫຼຸບ

# (Conclusion)

ຜ່ານການລົງຝຶກງານສຶກສາກອງທຶນພັດທະນາກະສິກຳຂັ້ນບ້ານຂອງເຂດບ້ານເປົ້າໝາຍຂອງຄະນະກະເສດສາດສາມາດສະຫຼຸບໄດ້ດັ່ງນີ້:

1. ດ້ານການບໍລິຫານງານຂອງຄະນະບໍລິຫານກອງທຶນພັດທະນາກະສິກຳຂັ້ນບ້ານ

ການບໍລິຫານງານຂອງຄະນະບໍລິຫານເຫັນໄດ້ວ່າ ຄະນະບໍລິຫານກອງທຶນບ້ານທ່າຈຳປາມີການປະຕິ ບັດໜ້າທີ່ຂອງໃຜລາວຕາມທີ່ໄດ້ວາງອອກໃນກົດລະບຽບ, ສ່ວນຄະນະບໍລິຫານງານບ້ານດົງບັງ ແລະ ບ້ານເວີນແທ່ນແມ່ນຍັງບໍ່ໄດ້ປະຕິບັດຕາມໜ້າທີ່ຂອງກົດລະບຽບທີ່ວາງອອກ. ສັງເກດເຫັນວ່າຄະນະບໍລິຫານທັງ 3 ບ້ານແມ່ນຍັງຂາດປະສິບການຈຶ່ງເຮັດໃຫ້ການບໍລິຫານງານຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

2. ດ້ານການນຳໃຊ້ກອງທຶນເຂົ້າໃນການຜະລິດກະສິກຳຂອງສະມາຊິກກອງທຶນ ແລະ ລາຍຮັບທີ່ໄດ້ຈາກກິດຈະກຳຂອງກອງທຶນ.

ສະມາຊິກທີ່ຮັບເອົາກອງທຶນທີ່ຢືມໄປນັ້ນໝູນໃຊ້ເຂົ້າໃນກິດຈະກຳການຜະລິດຫຼາຍໆດ້ານເຊັ່ນ: ການປູກຜັກລະດູຝົນ, ການປູກໄມ້ໃຫ້ໝາກ, ການປູກໝາກຖົ່ວ, ການລ້ຽງກົບ, ການລ້ຽງແບ້ ແລະ ການລ້ຽງປາ. ຈຳນວນສະມາຊິກທີ່ໄປເຮັດກິດຈະກຳມີດັ່ງນີ້:

- ສະມາຊິກທີ່ຮັບເອົາກອງທຶນການປູກຝັງ (ໄມ້ໃຫ້ໝາກ, ແນວພັນຜັກ, ປູກໝາກຖົ່ວ) ມີ 6 ຄອບຄົວ, ຄິດໄລ່ເປັນເປີເຊັນເທົ່າກັບ 30%.

- ສະມາຊິກທີ່ຮັບເອົາກອງທຶນການລ້ຽງສັດ (ລ້ຽງແບ້, ລ້ຽງກົບ, ລ້ຽງປາ) ມີ 14 ຄອບຄົວ, ຄິດໄລ່ເປັນເປີເຊັນເທົ່າກັບ 70%.

ຜ່ານການປະຕິບັດກິດຈະກຳຂອງສະມາຊິກກອງທຶນເຫັນໄດ້ວ່າ ກິດຈະກຳທີ່ໄດ້ຈາກກອງທຶນແມ່ນສາມາດສ້າງລາຍຮັບໃຫ້ແກ່ສະມາຊິກກອງທຶນຄື: ກອງທຶນແບ້ເທົ່າກັບ 1,687,000 ກີບ/ປີ, ສະເລ່ຍຕໍ່ວັນງານເທົ່າກັບ 80,330 ກີບ/ວັນງານ, ກອງທຶນກົບເທົ່າກັບ -91,000 ກີບ/ປີ, ກອງທຶນປາດຸກເທົ່າກັບ 1,000 ກີບ/ປີ, ກອງທຶນປານິນ, ປາໄນເທົ່າກັບ 881,000 ກີບ/ປີ, ສະເລ່ຍຕໍ່ວັນງານເທົ່າກັບ 80,000 ກີບ/ວັນງານ, ກອງທຶນແນວພັນຜັກເທົ່າກັບ -1,165,416 ກີບ/ປີ, ກອງທຶນເງິນສົດ (ປູກໝາກຖົ່ວ) ເທົ່າກັບ 656,000 ກີບ/ປີ, ສະເລ່ຍຕໍ່ວັນງານເທົ່າກັບ 19,880 ກີບ/ວັນງານ.

ເຫັນໄດ້ວ່າລາຍຮັບທີ່ໄດ້ຈາກກິດຈະກຳກອງທຶນແມ່ນມີທັງດ້ານດີ ແລະ ດ້ານອ່ອນ. ດ້ານດີແມ່ນຊ່ວຍໃຫ້ຄອບຄົວສະມາຊິກສາມາດນຳລາຍຮັບທີ່ໄດ້ຈາກກອງທຶນໄປນຳໃຊ້ເຂົ້າໃນຊີວິດປະຈຳວັນ. ດ້ານອ່ອນເປັນການສ້າງໜີ້ໃຫ້ແກ່ສະມາຊິກທີ່ມີລາຍຮັບຕິດລົບ.

3. ຄວາມສາມາດໃຊ້ທຶນຄືນຂອງສະມາຊິກກອງທຶນ ແລະ ບັນຫາການນຳໃຊ້ກອງທຶນ

ສະມາຊິກຜູ້ໄດ້ຮັບທຶນບາງຄອບຄົວກໍ່ມີການສົ່ງທຶນຄືນແຕ່ສົ່ງທຶນຄືນສ່ວນໃດສ່ວນໜຶ່ງເທົ່ານັ້ນ ແລະ ບາງຄອບຄົວກໍ່ບໍ່ໄດ້ສົ່ງທຶນຄືນມີຄື: ສະມາຊິກທີ່ສົ່ງທຶນຄືນມີທັງໝົດ 5 ຄອບຄົວໃນນັ້ນແມ່ນສະມາຊິກຜູ້ ທີ່ຮັບເອົາກອງທຶນເງິນສົດ, ກອງທຶນແບ້, ຄິດໄລ່ເປັນເປີເຊັນເທົ່າກັບ 25%. ສ່ວນສະມາຊິກທີ່ບໍ່ທັນສົ່ງ ທຶນຄືນມີທັງໝົດ 15 ຄອບຄົວໃນນັ້ນແມ່ນສະມາຊິກຜູ້ທີ່ຮັບເອົາກອງທຶນແບ້, ກອງທຶນ

ກົບ, ກອງທຶນປາ ດຸກ, ກອງທຶນປາປາກ, ປາໄນ, ກອງທຶນໄມ້ໃຫ້ໝາກ, ກອງທຶນແນວພັນຜັກ, ຄິດເປັນເປີເຊັນເທົ່າກັບ 75%.

ບັນຫາທີ່ພົບໃນການນຳໃຊ້ກອງທຶນຂອງສະມາຊິກກອງທຶນສ່ວນໃຫ່ຍ ແມ່ນບັນຫາພະຍາດສັດລະບາດ, ໄພທຳມະຊາດ (ນ້ຳຖ້ວມ), ບັນຫາຄົນຂີ້ລັກ, ໃນບາງກອງທຶນທີ່ສະມາຊິກຮັບເອົາແມ່ນສະມາຊິກຍັງຂາດປະສົບການໃນການປະຕິບັດກິດຈະກຳ.

## VII. ຂໍ້ແນະນຳ
## (Recommendation)

ຜ່ານການລົງຝຶກງານຕົວຈິງ ແລະ ອີງໃສ່ຜົນໄດ້ຮັບຕົວຈິງຂ້າພະເຈົ້າມີທັດສະນະແນະນຳເພື່ອປັບປຸງບາງບັນຫາດັ່ງນີ້:

➢ <u>ສຳລັບໂຄງການທີ່ໃຫ້ທຶນສະໜັບສະໜູນ</u>

ຫຼັງຈາກທີ່ມອບທຶນໃຫ້ແກ່ບ້ານແລ້ວຄວນມາຕິດຕາມຜົນໄດ້ຮັບຢ່າງເປັນປະຈຳພ້ອມທັງໃຫ້ຄຳແນະນຳສິ່ງທີ່ທາງບ້ານບໍ່ທັນເຂົ້າໃຈລະອຽດ ເພື່ອເຮັດໃຫ້ກອງທຶນມີປະສິດພາບ ແລະ ຄວາມຍືນຍົງ.

➢ <u>ສຳລັບການຈັດຕັ້ງກອງທຶນ</u>

ການຄັດເລືອກເອົາສະມາຊິກກອງທຶນຄວນຈະເລືອກເອົາຄອບຄົວທີ່ທຸກຍາກ ແລະ ມີຄວາມຕ້ອງການກອງທຶນດັ່ງກ່າວແທ້ເພື່ອໃຫ້ຄອບຄົວທຸກຍາກໄດ້ຮັບການຊ່ວຍເຫຼືອ ແລະ ຖ້າຄອບຄົວດັ່ງກ່າວຕ້ອງການກອງທຶນນັ້ນແທ້ເຂົາເຈົ້າຈະເອົາໃຈໃສ່ຕໍ່ກອງທຶນທີ່ໄດ້ຮັບ ເຮັດໃຫ້ສະມາຊິກໄດ້ຮັບຜົນປະໂຫຍດຈາກກອງທຶນພ້ອມກັນນັ້ນຄະນະບໍລິຫານກອງທຶນບໍ່ຄວນເປັນສະມາຊິກກອງທຶນເພາະຈະເຮັດໃຫ້ການບໍລິຫານງານເກີດຄວາມຫຍຸ້ງຍາກຕໍ່ການໃຊ້ທຶນຄືນ.

➢ <u>ສຳລັບຄະນະບໍລິຫານກອງທຶນ</u>

ຄະນະບໍລິຫານກອງທຶນທຸກຂັ້ນທີ່ຖືກແຕ່ງຕັ້ງໄປຕ້ອງເອົາໃຈໃສ່ໃນການເຮັດໜ້າທີ່ຂອງຕົນໃຫ້ດີ ແລະ ຄວນອ່ານຄືນສັນຍາ, ກົດລະບຽບຂອງກອງທຶນໃຫ້ເຂົ້າໃຈດີເພື່ອໃຫ້ກອງທຶນໄດ້ຮັບຜົນສຳເລັດມີຄວາມຍືນຍົງຕໍ່ໄປ.

➢ <u>ສຳລັບສະມາຊິກກອງທຶນ</u>

ຄວນເອົາໃຈໃສ່ເບິ່ງແຍງຮັບຜິດຊອບກອງທຶນທີ່ຕົນເອງຮັບເອົາ, ການລ້ຽງສັດຄວນສັກຢາໃຫ້ຕາມເວລາທີ່ວິຊາການແນະນຳ, ອາຫານຂອງສັດຄວນໃຫ້ພຽງພໍ, ການປູກພືດຄວນໃຫ້ນ້ຳໃສ່ຝຸ່ນໃຫ້ພຽງພໍເພື່ອບໍ່ໃຫ້ພືດໄດ້ຮັບຜົນເສຍຫາຍ.

# ເອກະສານອ້າງອີງ
# (Literature Cited)

ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ, ຄັ້ງທີ III (2011-2015) ແລະ ວິໄສທັດຮອດ 2020 ຂອງເມືອງໄຊທານີ.

ສີວິໄລ ພິມມະຈັນ ແລະ ຄຳສິງ ໄຊລືຊົງ, 2008.ການສ້າງຕັ້ງກອງທຶນພັດທະນາກະສິກຳໃນ 4 ບ້ານເປົ້າໝາຍຂອງຄະນະກະເສດສາດ. ບົດລາຍງານທ້າຍການສຶກສາ. ລະດັບປະລິນຍາຕີ, ຄະນະກະເສດສາດ. ໜ.1-40.

ບຸນໂຮມ ຈັນທະໄຊ, 2009.ສຶກສາທະນາຄານໝູ່ບ້ານຢູ່ເມືອງຂວາ ແລະ ເມືອງສຳພັນ ແຂວງຜົ້ງ ສາລີ. ບົດລາຍງານທ້າຍການສຶກສາ. ລະດັບປະລິນຍາຕີ, ຄະນະກະເສດສາດ. ໜ. 1-39.

ສະຫຼຸບຜົນການດຳເນີນງານໂຄງການສົ່ງເສີມຄວາມເຂັ້ມແຂງຂອງແມ່ຍິງ ແລະ ຊຸມຊົນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.ໂດຍການຮ່ວມມືລະຫວ່າງສູນກາງສະຫະພັນແມ່ຍິງລາວ ສ ປ ປ ລາວ ກັບສະຖາບັນພັດທະນາອົງກອນຊຸມຊົນ (ອົງການມະຫາຊົນ) ກະຊວງການພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດປະເທດໄທ. ໜ. 20-24.

WWW.Lao44.Org, ກອງທຶນພັດທະນາຂັ້ນບ້ານຂອງແຂວງສະຫວັນນະເຂດທີ່ນອນໃນ 47 ເມືອງທຸກຍາກທົ່ວປະເທດ. ໜ. 5. (5/4/2010).

WWW.Lao44. Org, ຂໍ້ກຳນົດວ່າດ້ວຍການສ້າງຕັ້ງ ແລະ ດຳເນີນງານກອງທຶນຝາກປະຫຍັດ - ທຶນໝູນວຽນຂັ້ນບ້ານຂອງບ້ານນ້ຳກະ ເມືອງຜາໄຊ ແຂວງຊຽງຂວາງ. ໜ. 2. (5/4/2010).

WWW.Lao44. Org, ເອກະສານກ່ຽວກັບນະໂຍບາຍຂອງລັດຖະບານວ່າດ້ວຍການພັດທະນາຂະແໜງການເງິນຊົນນະບົດ ແລະ ການເງິນຈຸນລະພາກ. ໜ. 4. (5/4/2010).

WWW.Lao44. Org, ໜ່ວຍງານການເງິນຈຸນລະພາກ (MFWG) ພາລະບົດບາດ (TOR). ໜ. 6. (5/4/2010).